# ແຈ້ງການມາດຕະການປ້ອງກັນ
# ສິດຂອງພໍ່ແມ່ຕໍ່ກັບການຊ່ວຍເຫຼືອແຕ່ຫົວທີ (0-2 ປີ)
# ແລະ
# ການສຶກສາພິເສດສໍາລັບໄວເດັກ (3-5 ປີ)

OREGON
DEPARTMENT OF
EDUCATION
Oregon achieves . . . together!

Office of Student Services
(ຫ້ອງການບໍລິການນັກສຶກສາ)
255 Capitol Street NE
Salem, Oregon 97310

ເອກະສານສະບັບນີ້ສະເໜີມາດຕະການປ້ອງກັນການຊ່ວຍເຫຼືອແຕ່ຫົວທີ (EI), ພາຍໃຕ້ IDEA, ພາກ C ແລະ ການສຶກສາພິເສດໃນໄວເດັກ (ECSE), ພາຍໃຕ້ IDEA, ພາກ B. ສຳລັບ EI, ເງື່ອນໄຂກຳນົດແມ່ນສອດຄ່ອງກັບກົດລະບຽບຂອງ IDEA ທີ່ມີຜົນບັງຄັບໃຊ້ໃນເດືອນຕຸລາ 2011. ສຳລັບ ECSE, ເງື່ອນໄຂກຳນົດເປັນໄປຕາມ ແຈ້ງການກ່ຽວກັບມາດຕະການປ້ອງກັນຄວາມປອດໄພແບບຈຳລອງຂອງກະຊວງສຶກສາທິການຂອງສະຫະລັດອາເມລິກາ (ມິຖຸນາ 2009). ຂໍ້ມູນສະເພາະກ່ຽວກັບລັດໂອເຣກອນແມ່ນມີໃຫ້ໃນບ່ອນທີ່ຈຳເປັນ.

ຄຳຖາມ ຫຼື ຄຳຄິດເຫັນກ່ຽວກັບເອກະສານນີ້ແມ່ນອາດຈະສົ່ງໂດຍກົງໄປຫາ:


Office of Student Services Oregon<br>
Department of Education<br>
255 Capitol Street<br>
Salem, OR 97310<br>
(503) 947-5782


ເອກະສານນີ້ແມ່ນມີໃຫ້ໂດຍທາງອີເລັກໂທຣນິກຢູ່ທີ່:
http://www.oregon.gov/ode/rules-and-policies/Pages/Procedural-Safeguards.aspx

ມັນເປັນນະໂຍບາຍຂອງຄະນະກະມະການການສຶກສາຂອງລັດ ແລະ ບູລິມະສິດຂອງກະຊວງສຶກສາລັດໂອເຣກອນ (Oregon Department of Education) ທີ່ຈະບໍ່ມີການຈຳແນກຄວາມແຕກຕ່າງ ຫຼື ການລ່ວງລະເມີດບົນພື້ນຖານເຊື້ອຊາດ, ສີຜິວ, ສາສະໜາ, ເພດ, ສະຖານະການແຕ່ງງານ, ຄວາມມັກທາງເພດ, ຊາດກຳເນີດ, ອາຍຸ ຫຼື ຄວາມພິການຢູ່ໃນໂຄງການສຶກສາ, ກິດຈະກຳ ຫຼື ການຈ້າງເຂົ້າເຮັດວຽກໃດໜຶ່ງ. ຜູ້ທີ່ມີຄຳຖາມກ່ຽວກັບໂອກາດເທົ່າທຽມກັນ ແລະ ການບໍ່ຈຳແນກຄວາມແຕກຕ່າງຄວນຕິດຕໍ່ Oregon Department of Education, 255 Capitol Street NE, Salem, Oregon 97310; ໂທລະສັບ: 503-947-5747

## ເດັກພິການ

ຂໍ້ມູນໃນປຶ້ມຄູ່ມືນີ້ແມ່ນສຳລັບພໍ່ແມ່ຂອງເດັກຜູ້ທີ່ມີ ຫຼື ອາດຈະມີສິດໄດ້ຮັບການຊ່ວຍເຫຼືອແຕ່ຫົວທີ (EI) ຫຼື ການສຶກສາພິເສດໃນໄວເດັກ (ECSE) ພາຍໃຕ້ກົດໝາຍການສຶກສາສຳລັບຄົນພິການ (IDEA), ພາກ C ແລະ B. ບໍ່ແມ່ນວ່າເດັກພິການທີ່ມີຄວາມພິການທຸກຄົນຈະມີສິດສຳລັບການຊ່ວຍເຫຼືອແຕ່ຫົວທີ ຫຼື ບໍລິການການສຶກສາພິເສດໃນໄວເດັກພາຍໃຕ້ IDEA. ນັກຮຽນບາງຄົນອາດຈະມີຄວາມພິການທີ່ມີຜົນກະທົບຕໍ່ກິດຈະກຳໃນຊີວິດຫຼວງຫຼາຍ, ແຕ່ບໍ່ມີເງື່ອນໄຂຄົບຖ້ວນຕາມການມີສິດໄດ້ຮັບສຳລັບໜຶ່ງໃນບັນດາໝວດຄວາມພິການພາຍໃຕ້ IDEA. ເດັກເຫຼົ່ານີ້ອາດຈະໄດ້ຮັບການປົກປ້ອງໂດຍກົດໝາຍອື່ນຂອງລັດຖະບານກາງເຊັ່ນ: ຂໍ້ທີ 504 ຂອງກົດໝາຍການຟື້ນຟູປີ 1973 (Section 504 of the Rehabilitation Act of 1973) ຫຼື ກົດໝາຍການສຶກສາຂອງຄົນພິການອາເມລິກາ (American with Disabilities Education Act) (ADA). ສິດຂອງບຸກຄົນທີ່ໄດ້ຮັບການປົກປ້ອງພາຍໃຕ້ຂໍ້ທີ 504 ເທົ່ານັ້ນທີ່ມີສ່ວນຄືກັນ ແລະ ຕ່າງກັນຈາກມາດຕະການຮັກສາຄວາມປອດໄພຕາມທີ່ໄດ້ອະທິບາຍໄວ້ໃນປຶ້ມຄູ່ມືນີ້. ສຳລັບຂໍ້ມູນເພີ່ມກ່ຽວກັບຂໍ້ທີ 504, ຕິດຕໍ່ຫາໂຄງການ EI/ECSE ຂອງທ່ານ ຫຼື ຜູ້ຊ່ຽວຊານດ້ານສິດພົນລະເມືອງຂອງ ODE.

## ສາລະບານ


ບົດນຳ ........................................ 1

ການມີສ່ວນຮ່ວມຂອງພໍ່ແມ່ ........................................ 2

ບັນທຶກທາງການສຶກສາ ........................................ 3

ການຄຸ້ມຄອງ ........................................ 6

ຄຳຍິນຍອມຂອງພໍ່ແມ່ ........................................ 7

ແຈ້ງການເປັນລາຍລັກອັກສອນລ່ວງໜ້າ ........................................ 10

ການປະເມີນຜົນ ແລະ ການປະເມີນຜົນຄືນໃໝ່ ........................................ 12

ການປະເມີນຜົນທາງການສຶກສາເອກະລາດ-ECSE ເທົ່ານັ້ນ ........................................ 13

ການແກ້ໄຂຂໍ້ຂັດແຍ່ງ ........................................ 14

ເດັກທີ່ເຂົ້າໂຮງຮຽນເອກະຊົນ - ECSE ເທົ່ານັ້ນ ........................................ 24

ວິໄນ ແລະ ການຊັບຊ້ອນໃນສະຖານທີ່ສຶກສາທາງເລືອກຊົ່ວຄາວ-ECSE ເທົ່ານັ້ນ ........................................ 26

ຊັບພະຍາກອນ ........................................ 31

## ບົດນຳ

### ປຶ້ມຄູ່ມືນີ້ສຳລັບໃຜ?

ປຶ້ມຄູ່ມືນີ້ຈັດໃຫ້ແກ່ພໍ່ແມ່ຂອງເດັກພິການຕັ້ງແຕ່ເກີດຈົນຮອດຊັ້ນອະນຸບານກ່ຽວກັບສະພາບລວມຂອງສິດທິດ້ານການສຶກສາຂອງເຂົາເຈົ້າ ຫຼື ເອີ້ນວ່າມາດຕະການປ້ອງກັນ. ປຶ້ມຄູ່ມືນີ້ແມ່ນແຈ້ງການກ່ຽວກັບ*ມາດຕະການປ້ອງກັນ*ສຳລັບພໍ່ແມ່ ແລະ ພໍ່ແມ່ຕົວແທນ. ກົດໝາຍຂອງລັດຖະບານກາງຮຽກຮ້ອງໃຫ້ທ່ານໄດ້ຮັບແຈ້ງກ່ຽວກັບມາດຕະການປ້ອງກັນທັງໝົດ, ແມ່ນແຕ່ເລື່ອງທີ່ບໍ່ຄ່ອຍເກີດຂຶ້ນກັບເດັກນ້ອຍ.

### ຂ້ອຍຕ້ອງໄດ້ຮັບສຳເນົາຂອງປຶ້ມຄູ່ມືນີ້ເມື່ອໃດ?

ກົດໝາຍລະບຸວ່າ*ແຈ້ງການກ່ຽວກັບມາດຕະການປ້ອງກັນ*ຕ້ອງມີໃຫ້ແກ່ທ່ານ:

- ໜຶ່ງຄັ້ງຕໍ່ປີ;
- ໃນເວລາທີ່ທ່ານຂໍໃຫ້ມີສຳເນົາ;
- ຄັ້ງທຳອິດທີ່ລູກຂອງທ່ານໄດ້ຮັບການສົ່ງຕໍ່ທີ່ກ່ຽວກັບການຊ່ວຍເຫຼືອແຕ່ຫົວທີ (EI) ຫຼື ການປະເມີນການສຶກສາພິເສດໃນໄວເດັກ (ECSE) ຫຼື ໃນເວລາທີ່ທ່ານຮ້ອງຂໍການປະເມີນຜົນ ແລະ,
- ໃນເວລາທີ່ໄດ້ຮັບການຮ້ອງຮຽນຄັ້ງທຳອິດ ຫຼື ຄຳຮ້ອງຂໍຂະບວນການຕາມສິດທີ່ຄວນຈະໄດ້ຮັບທີ່ກຳນົດໃນປີຮຽນຂອງທ່ານ; ແລະ
- ສຳລັບ ECSE, ໃນເວລາທີ່ການຕັດສິນທາງວິໄນກ່ຽວກັບລູກຂອງທ່ານປະກອບດ້ວຍການປ່ຽນແປງການຈັບຈ້ອນ.

### ປຶ້ມຄູ່ມືນີ້ຈະບອກຫຍັງໃຫ້ຂ້ອຍຮູ້?

ປຶ້ມຄູ່ມືນີ້ຈະບອກທ່ານກ່ຽວກັບສິດຂອງທ່ານໃນການຊ່ວຍເຫຼືອແຕ່ຫົວທີ ແລະ ການສຶກສາພິເສດໃນໄວເດັກ. ປຶ້ມຄູ່ມືນີ້ຈະບໍ່ໃຫ້ຂໍ້ມູນລະອຽດແກ່ທ່ານກ່ຽວກັບ IFSPs, ການບໍລິການ ແລະ ໂຄງການ. ທ່ານອາດຈະໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບຂົງເຂດເຫຼົ່ານີ້ໂດຍການລົມກັບຜູ້ປະສານງານການບໍລິການຂອງລູກທ່ານ, ຄູສອນ, ຕົວແທນໂຄງການ ຫຼືຈາກເວັບໄຊຂອງກະຊວງສຶກສາລັດໂອເຣກອນ (Oregon Department of Education, ODE) ແລະ ແຫຼ່ງຂໍ້ມູນອື່ນໆທີ່ລະບຸໄວ້ໃນດ້ານຫຼັງຂອງປຶ້ມຄູ່ມືນີ້.

ປຶ້ມຄູ່ມືນີ້ໃຊ້ຄຳວ່າ "ໜ່ວຍງານຂອງລັດ" ເພື່ອໝາຍເຖິງເຂດໂຮງຮຽນ, ໂຄງການ EI/ECSE ຫຼື ໜ່ວຍງານສາທາລະນະອື່ນໆທີ່ຮັບຜິດຊອບບາງດ້ານຂອງການບໍລິການ EI/ECSE ຂອງລູກທ່ານ.

### ສິດທິໃນປຶ້ມຄູ່ມືນີ້ມາຈາກໃສ?

ກົດໝາຍວ່າດ້ວຍການສຶກສາຄົນພິການຂອງບຸກຄົນ (IDEA) ແມ່ນກົດໝາຍວ່າດ້ວຍການສຶກສາພິເສດຂອງລັດຖະບານກາງທີ່ກຳນົດໃຫ້ລັດຕ່າງໆສະໜອງການບໍລິການ EI ແລະ ECSE ໃຫ້ແກ່ເດັກນ້ອຍທີ່ມີຄວາມພິການ.

### ຄວາມແຕກຕ່າງລະຫວ່າງ EI ແລະ ECSE ແມ່ນຫຍັງ?

ການຊ່ວຍເຫຼືອແຕ່ຫົວທີ (EI) ໝາຍເຖິງການບໍລິການສຳລັບເດັກທີ່ມີຄວາມພິການຕັ້ງແຕ່ກຳເນີດຈົນເຖິງອາຍຸສາມປີທີ່ຖືກກຳນົດວ່າຕ້ອງໃຫ້ໄດ້ບັນລຸຄວາມຈຳເປັນດ້ານພັດທະນາການຂອງເດັກ ແລະ ຄວາມຈຳເປັນຂອງຄອບຄົວທີ່ກ່ຽວຂ້ອງການກັບສົ່ງເສີມພັດທະນາການຂອງເດັກ. ການບໍລິການ EI ແມ່ນມີໃຫ້ຢູ່ໃນສະພາບແວດລ້ອມທີ່ເປັນທຳມະຊາດ ຫຼື ປົກກະຕິສຳລັບເດັກນ້ອຍທີ່ບໍ່ພິການ, ເວັ້ນເສຍແຕ່ວ່າເດັກຕ້ອງການສະພາບແວດລ້ອມທີ່ພິເສດກວ່າ. ບໍລິການເຫຼົ່ານີ້ແມ່ນໄດ້ອະທິບາຍໄວ້ໃນ IFSP ຂອງລູກທ່ານ.

ການສຶກສາພິເສດໃນໄວເດັກ (ECSE) ໝາຍເຖິງການບໍລິການເພື່ອຕອບສະໜອງຄວາມຕ້ອງການພິເສດຂອງເດັກພິການຕັ້ງແຕ່ອາຍຸສາມປີຈົນຮອດອາຍຸທີ່ມີສິດໄດ້ຮັບເຂົ້າໂຮງຮຽນລັດ.

ເດັກນ້ອຍທີ່ມີສິດໄດ້ຮັບການບໍລິການ ECSE ຕ້ອງໄດ້ຮັບການສຶກສາສາທາລະນະທີ່ເໝາະສົມຟຣີ (FAPE). FAPE ຫມາຍເຖິງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງທີ່ຈຳເປັນສຳລັບລູກຂອງທ່ານເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການສຶກສາຂອງ ລາວ ຫຼື ນາງ. ບໍລິການເຫຼົ່ານີ້ແມ່ນໄດ້ອະທິບາຍໄວ້ໃນ IFSP ຂອງລູກທ່ານ. ກົດຫມາຍລະບຸວ່າທີມງານຕ້ອງຈັດລູກຂອງທ່ານຢູ່ໃນ "ສະພາບແວດລ້ອມທີ່ຈຳກັດໜ້ອຍທີ່ສຸດ." ນີ້ໝາຍຄວາມວ່າລູກຂອງທ່ານຈະຕ້ອງຖືກຈັດເຂົ້າໃນໂຄງການປະເພດປົກກະຕິທີ່ສຸດເພື່ອຕອບສະໜອງຄວາມຕ້ອງການຂອງລູກຂອງທ່ານ, ໂດຍອີງໃສ່ IFSP ຂອງລູກທ່ານ.

### IFSP ແມ່ນຫຍັງ?

IFSP ຫຍໍ້ມາຈາກແຜນບໍລິການຄອບຄົວສ່ວນບຸກຄົນ (Individualized Family Service Plan). ທີມງານທີ່ປະກອບມີທ່ານ, ຄູສອນຂອງລູກຂອງທ່ານ ແລະ ຄົນອື່ນອອກແບບການບໍລິການເຫຼົ່ານີ້ຫຼັງຈາກທີ່ ພວກເຂົາຕັດສິນວ່າລູກຂອງທ່ານມີຄວາມພິການ ແລະ ກົງກັບເງື່ອນໄຂຂອງການສຶກສາພິເສດທີ່ມີຢູ່ໃນກົດໝາຍ. IFSP ອະທິບາຍການບໍລິການທີ່ຈະມີໃຫ້ກັບລູກຂອງທ່ານ. ທີມງານ IFSP ປະກອບມີທ່ານ, ຄູສອນຂອງລູກທ່ານ ແລະ ອື່ນໆ. ທີມງານ IFSP ກວດເບິ່ງຂໍ້ມູນການປະເມີນລູກຂອງທ່ານ, ກຳນົດເປົ້າໝາຍທີ່ສາມາດວັດແທກໄດ້ສຳລັບລູກຂອງທ່ານ ແລະ ກຳນົດການບໍລິການ ແລະ ການສະໜັບສະໜູນຄວາມຕ້ອງການຂອງລູກຂອງທ່ານເພື່ອບັນລຸເປົ້າໝາຍເຫຼົ່ານັ້ນ. ທ່ານອາດຈະໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບ IFSPs ຈາກຜູ້ປະສານງານການບໍລິການຂອງລູກ ທ່ານ, ຄູສອນ ຫຼື ພະນັກງານໂຄງການອື່ນໆ.

### ຂ້ອຍສາມາດເອົາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ໂຄງການ EI/ECSE ທ້ອງຖິ່ນຂອງທ່ານແມ່ນບ່ອນທຳອິດສຳລັບຂໍ້ມູນເພີ່ມເຕີມ. ມີຄົນຈຳນວນຫຼາຍໃນໂຄງການຜູ້ທີ່ສາມາດຕອບຄຳຖາມກ່ຽວກັບການບໍລິການສຳລັບລູກຂອງທ່ານ, ລວມເຖິງຜູ້ປະສານງານບໍລິການລູກຂອງທ່ານ. ຜູ້ໃຫ້ບໍລິການອື່ນໆທີ່ເຮັດວຽກກັບລູກຂອງທ່ານອາດຈະເປັນປະໂຫຍດຕໍ່ທ່ານ. ຊັບພະຍາກອນອື່ນໆແມ່ນໄດ້ເຮັດເປັນລາຍການໄວ້ຢູ່ທ້າຍປຶ້ມຄູ່ມືນີ້.

## ການມີສ່ວນຮ່ວມຂອງພໍ່ແມ່

### ແມ່ນໃຜທີ່ຖືວ່າເປັນ "ພໍ່ແມ່"?

ພາຍໃຕ້ IDEA, ພໍ່ແມ່ໝາຍເຖິງ:

- ພໍ່ແມ່ໃຫ້ກຳເນີດ ຫຼື ພໍ່ແມ່ລ້ຽງຂອງເດັກ;
- ພໍ່ແມ່ອຸປະຖຳຂອງເດັກ;
- ຜູ້ປົກຄອງຕາມກົດໝາຍ (ນອກເໜືອຈາກໜ່ວຍງານຂອງລັດ) ຫຼື ຄົນອື່ນທີ່ຮັບຜິດຊອບຕໍ່ສະຫວັດດີການຂອງເດັກຕາມກົດໝາຍ;
- ບຸກຄົນທີ່ເຮັດໜ້າທີ່ເປັນພໍ່ແມ່ຢູ່ໃນບ່ອນຂອງພໍ່ແມ່ເກີດ ຫຼື ພໍ່ແມ່ລ້ຽງ (ລວມທັງພໍ່ເຖົ້າແມ່ເຖົ້າ, ພໍ່ແມ່ລ້ຽງ ຫຼື ຍາດພີ່ນ້ອງອື່ນໆ) ກັບຜູ້ທີ່ເດັກອາໄສຢູ່ນຳ; ຫຼື,
- ພໍ່ແມ່ຕົວແທນທີ່ໜ່ວຍງານຂອງລັດ ຫຼື ສານເດັກດຳເນີນການແຕ່ງຕັ້ງ.
- ຖ້າມີຫຼາຍກວ່າໜຶ່ງຄົນໄດ້ຮັບເງື່ອນໄຂໃຫ້ເຮັດໜ້າທີ່ເປັນພໍ່ແມ່ ແລະ ພໍ່ແມ່ໃຫ້ກຳເນີດ ຫຼື ພໍ່ແມ່ລ້ຽງກຳລັງພະຍາຍາມເຮັດໜ້າທີ່ເປັນພໍ່ແມ່, ພໍ່ແມ່ໃຫ້ກຳເນີດ ຫຼື ພໍ່ແມ່ລ້ຽງຖືກຖືໄດ້ວ່າເປັນພໍ່ແມ່ພາຍໃຕ້ IDEA. ເຖິງແນວໃດກໍຕາມ:
- ກົດລະບຽບນີ້ບໍ່ນຳມາໃຊ້, ຖ້າພໍ່ແມ່ໃຫ້ກຳເນີດ ຫຼື ພໍ່ແມ່ລ້ຽງບໍ່ມີສິດຕາມກົດໝາຍທີ່ຈະເຮັດການຕັດສິນໃຈທາງການສຶກສາສຳລັບເດັກ.
- ຖ້າມີຄຳສັ່ງສານ ຫຼື ດຳລັດຕຸລາການກ່າວເຖິງຜູ້ທີ່ສາມາດເຮັດໜ້າທີ່ເປັນພໍ່ແມ່ຂອງເດັກ ຫຼື ເຮັດການຕັດສິນການສຶກສາໃນນາມຂອງເດັກໄດ້, ຄົນນັ້ນຈະເປັນພໍ່ແມ່ສຳລັບຈຸດປະສົງທາງການສຶກສາພິເສດ.

### ຂ້ອຍມີສິດໃນການເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການບໍລິການ EI/ECSE ຂອງລູກຂ້ອຍບໍ?

ແມ່ນແລ້ວ, ການມີສ່ວນຮ່ວມຂອງທ່ານແມ່ນມີຄຸນຄ່າຫຼາຍ. ທ່ານມີສິດໃນການເຂົ້າຮ່ວມໃນການປະຊຸມກ່ຽວກັບຄວາມຕ້ອງການສະເພາະ, ການປະເມີນຜົນ, ບໍລິການ EI/ECSE, ບ່ອນທີ່ລູກຂອງທ່ານໄດ້ຮັບການບໍລິການ (ການຈັບຈ້ອນ) ແລະ ເລື່ອງອື່ນໆທີ່ກ່ຽວຂ້ອງກັບການບໍລິການ EI/ECSE ຂອງລູກທ່ານ. ນີ້ລວມເຖິງສິດໃນການເຂົ້າຮ່ວມໃນການກອງປະຊຸມເພື່ອພັດທະນາ IFSP ຂອງລູກທ່ານ.

### ພໍ່ແມ່ຕົວແທນໝາຍເຖິງຫຍັງ ແລະ ຈຳເປັນໃນເວລາໃດ?

ພໍ່ແມ່ຕົວແທນໝາຍເຖິງບຸກຄົນທີ່ຖືກແຕ່ງຕັ້ງໃຫ້ຕັດສິນໃຈດ້ານການສຶກສາໃຫ້ແກ່ເດັກພິການໃນສະຖານະການພິເສດໃນເວລາທີ່ບໍ່ສາມາດລະບຸ ຫຼື ຊອກຫາພໍ່ແມ່ໄດ້ ຫຼື ເດັກຢູ່ໃນການດູແລຂອງສານ. ໂຄງການ EI/ECSE ແຕ່ລະຢ່າງມີວິທີການໃນການກຳນົດຄວາມວ່າເດັກຕ້ອງການພໍ່ແມ່ຕົວແທນບໍ ແລະ ການແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ແກ່ເດັກ. ບຸກຄົນທີ່ຖືກເລືອກເປັນພໍ່ແມ່ຕົວແທນ: (1) ຈະຕ້ອງບໍ່ມີສ່ວນໄດ້ເສຍໃດໆທີ່ຂັດແຍ່ງກັບຜົນປະໂຫຍດຂອງເດັກທີ່ລາວເປັນຜູ້ຕາງໜ້າ ແລະ (2) ຕ້ອງມີຄວາມຮູ້ ແລະ ທັກສະທີ່ຮັບປະກັນການເປັນຜູ້ຕາງໜ້າຂອງເດັກຢ່າງພຽງພໍ. ພໍ່ແມ່ຕົວແທນມີສ່ວນຮ່ວມໃນຖານະພໍ່ແມ່ທີ່ການປະຊຸມ IFSP ແລະ ມີສິດທຸກຢ່າງຕາມທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືນີ້.

## ບັນທຶກທາງການສຶກສາ

### ຂ້ອຍສາມາດເບິ່ງບັນທຶກການສຶກສາຂອງລູກຂ້ອຍໄດ້ບໍ?

ໄດ້. ກົດໝາຍສອງສະບັບ, ກົດໝາຍວ່າດ້ວຍສິດການສຶກສາຂອງຄອບຄົວ ແລະ ຄວາມເປັນສ່ວນຕົວ (FERPA) ແລະ IDEA, ມອບສິດແກ່ທ່ານໃນການເບິ່ງບັນທຶກທາງການສຶກສາທຸກຢ່າງຂອງລູກທ່ານ. ຖາມຄູສອນລູກຂອງທ່ານ, ຜູ້ປະສານງານບໍລິການ ຫຼື ຜູ້ບໍລິຫານໂຄງການ, ຖ້າຫາກທ່ານຕ້ອງການເບິ່ງບັນທຶກ.
ຖ້າຫາກທ່ານຂໍເບິ່ງບັນທຶກຂອງລູກທ່ານ, ໂຄງການຂອງລູກທ່ານຕ້ອງຈັດແຈງສຳລັບສິ່ງນີ້ໃຫ້:

- ໂດຍປາສະຈາກຄວາມລ່າຊ້າໂດຍບໍ່ຈຳເປັນ;
- ກ່ອນການປະຊຸມກ່ຽວກັບ IFSP ຂອງລູກທ່ານ.
- ກ່ອນການພິຈາລະນາຄະດີຕາມຂະບວນການຕາມສິດທີ່ຄວນຈະໄດ້ຮັບທີ່ກ່ຽວຂ້ອງກັບລູກຂອງທ່ານ (ລວມເຖິງກອງປະຊຸມແກ້ໄຂບັນຫາ ຫຼື ກອງປະຊຸມທີ່ກ່ຽວຂ້ອງກັບລະບຽບວິໄນ) ທີ່ກ່ຽວຂ້ອງກັບລູກຂອງທ່ານ ແລະ ໃນກໍລະນີອື່ນໆ,
- ສຳລັບ EI: ພາຍໃນ 10 ວັນທາງປະຕິທິນຕາມຄຳຂໍຂອງທ່ານ;
- ສຳລັບ ECSE: ພາຍໃນ 45 ວັນທາງປະຕິທິນຕາມຄຳຂໍຂອງທ່ານ;

ໂດຍປົກກະຕິແລ້ວ, ຄຳຮ້ອງຂໍເບິ່ງບັນທຶກການສຶກສາແມ່ນຈະຖືກສົ່ງໄປຫາຜູ້ບໍລິຫານໂຄງການ. ສິດກວດກາ ແລະ ທົບທວນຄືນເບິ່ງບັນທຶກທາງການສຶກສາຂອງທ່ານປະກອບດ້ວຍ:

1. ສິດຂອງທ່ານຕໍ່ຄຳຕອບຈາກໂຄງການ EI/ECSE ທີ່ຕອບຄືນເຖິງຄຳສະເໜີທີ່ສົມເຫດສົມຜົນຂອງທ່ານເພື່ອໃຫ້ການອະທິບາຍ ແລະ ແປຄວາມໝາຍຂອງບັນທຶກຕ່າງໆ;
2. ສິດຂອງທ່ານທີ່ຈະຂໍໃຫ້ໂຄງການ EI/ECSE ຈັດສຳເນົາບົດບັນທຶກໃຫ້ທ່ານ, ຖ້າທ່ານບໍ່ສາມາດກວດກາ ແລະ ທົບທວນຄືນເບິ່ງບັນທຶກຕ່າງໆໄດ້ຢ່າງມີປະສິດທິພາບ, ນອກຈາກວ່າ ທ່ານໄດ້ຮັບສຳເນົາເຫຼົ່ານັ້ນແລ້ວ; **ແລະ,**
3. ສິດຂອງທ່ານເພື່ອໃຫ້ຕົວແທນຂອງທ່ານກວດກາ ແລະ ທົບທວນຄືນເບິ່ງບັນທຶກຕ່າງໆ.

ໂຄງການ EI/ECSE ອາດຈະຖືວ່າ ທ່ານມີອຳນາດກວດກາ ແລະ ທົບທວນຄືນເບິ່ງບັນທຶກຕ່າງໆກ່ຽວຂ້ອງກັບລູກຂອງທ່ານ ນອກຈາກໄດ້ມີການແນະນຳວ່າ ທ່ານບໍ່ມີອຳນາດພາຍໃຕ້ກົດໝາຍຂອງລັດໂອເຣກອນທີ່ຄຸ້ມຄອງເລື່ອງດັ່ງກ່າວເຊັ່ນ: ການເປັນຜູ້ປົກຄອງ ຫຼື ການແຍກທາງກັນ ແລະ ການຢ່າຮ້າງ.

ແຕ່ລະໂຄງການ EI/ECSE ຕ້ອງຮັກສາບັນທຶກຂອງຝ່າຍຕ່າງໆທີ່ໄດ້ຮັບມາໃນເລື່ອງການເຂົ້າເຖິງບັນທຶກການສຶກສາທີ່ເກັບເອົາມາ, ຮັກສາໄວ້, ຫຼື ໃຊ້ຢູ່ພາຍໃຕ້ IDEA ໄວ້ (ຍົກເວັ້ນການເຂົ້າເຖິງໂດຍພໍ່ແມ່ ແລະ ລູກຈ້າງທີ່ໄດ້ຮັບອະນຸຍາດຂອງໜ່ວຍງານເຂົ້າຮ່ວມເທົ່ານັ້ນ), ລວມທັງຊື່ຂອງຝ່າຍນັ້ນ, ວັນທີເຂົ້າເຖິງຂໍ້ມູນທີ່ໄດ້ຮັບ ແລະ ຈຸດປະສົງສໍາລັບວ່າ ຝ່າຍໃດໄດ້ຮັບອະນຸຍາດໃຫ້ໃຊ້ບັນທຶກ.

ຖ້າບັນທຶກການສຶກສາມີຂໍ້ມູນກ່ຽວກັບເດັກນ້ອຍຫຼາຍກວ່າໜຶ່ງຄົນ, ພໍ່ແມ່ຂອງເດັກນ້ອຍເຫຼົ່ານັ້ນມີສິດກວດກາ ແລະ ທົບທວນເບິ່ງແຕ່ຂໍ້ມູນທີ່ກ່ຽວຂ້ອງກັບລູກຂອງເຂົາເຈົ້າເທົ່ານັ້ນ ຫຼື ເພື່ອໃຫ້ໄດ້ຮັບແຈ້ງເລື່ອງຂອງຂໍ້ມູນສະເພາະນັ້ນ.

ຕາມການສະເໜີຂໍ, ໂຄງການ EI/ECSE ຕ້ອງໃຫ້ລາຍຊື່ປະເພດ ແລະ ທີ່ຕັ້ງຂອງບັນທຶກການສຶກສາທີ່ເກັບເອົາມາ, ຮັກສາໄວ້ ຫຼື ນໍາໃຊ້ໂດຍໜ່ວຍງານນັ້ນໃຫ້ແກ່ທ່ານ.

ໂຄງການ EI/ECSE ອາດຈະເກັບຄ່າທໍານຽມສໍາລັບການອັດສໍາເນົາເອກະສານບັນທຶກທີ່ຈັດໃຫ້ແກ່ທ່ານພາຍໃຕ້ IDEA, ຖ້າຄ່າທໍານຽມບໍ່ມີອັນໃດກີດກັນທ່ານຫຼາຍໃນການໃຊ້ສິດຂອງທ່ານເພື່ອກວດກາ ແລະ ທົບທວນຄືນເບິ່ງບັນດາເອກະສານເຫຼົ່ານັ້ນ. ໂຄງການ EI/ECSE ອາດຈະບໍ່ເກັບຄ່າທໍານຽມເພື່ອຊອກຫາ ຫຼື ເພື່ອດຶງເອົາຂໍ້ມູນມາພາຍໃຕ້ IDEA.
ເຖິງຢ່າງໃດກໍ່ຕາມ, ສໍາລັບ EI, ໂຄງການ EI/ECSE ຂອງທ່ານຕ້ອງໃຫ້ບໍລິການໂດຍບໍ່ເສຍຄ່າໃຊ້ຈ່າຍໃດໆແກ່ທ່ານ:

1. ສໍາເນົາເບື້ອງຕົ້ນກ່ຽວກັບບັນທຶກການຊ່ວຍເຫຼືອແຕ່ຫົວທີ (EI) ຂອງເດັກ;
2. ສໍາເນົາການປະເມີນຜົນ, ການປະເມີນລູກຂອງທ່ານ, ການປະເມີນຄອບຄົວແຕ່ລະຄັ້ງ ແລະ IFSP ໃຫ້ໄດ້ໄວທີ່ສຸດຫຼັງຈາກພາກ IFSP ແຕ່ລະຄັ້ງ.

**ຂ້ອຍສາມາດເຮັດຫຍັງໄດ້ແດ່, ຖ້າຫາກຂ້ອຍຕ້ອງການແກ້ໄຂບັນທຶກການສຶກສາຂອງລູກຂ້ອຍ?**

ສໍາລັບ EI: ຖ້າທ່ານເຊື່ອວ່າ ຂໍ້ມູນຢູ່ໃນບັນທຶກການສຶກສາກ່ຽວກັບລູກຂອງທ່ານ ຫຼື ຕົວທ່ານເອງໃນຖານະເປັນພໍ່ແມ່ບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼື ລະເມີດຄວາມລັບສ່ວນຕົວ ຫຼື ສິດອື່ນຂອງລູກຂອງທ່ານ, ທ່ານອາດຈະຂໍໃຫ້ໂຄງການ EI/ECSE ທີ່ຮັກສາຂໍ້ມູນນັ້ນປ່ຽນແປງຂໍ້ມູນໄດ້.

ສໍາລັບ ECSE: ຖ້າທ່ານເຊື່ອວ່າ ຂໍ້ມູນຢູ່ໃນບັນທຶກການສຶກສາກ່ຽວກັບລູກຂອງທ່ານບໍ່ຖືກຕ້ອງ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດອື່ນໆຂອງລູກຂອງທ່ານ, ທ່ານອາດຈະຂໍໃຫ້ໂຄງການ EI/ECSE ທີ່ຮັກສາຂໍ້ມູນນັ້ນປ່ຽນແປງຂໍ້ມູນໄດ້.

ໂຄງການ EI/ECSE ຕ້ອງຕັດສິນວ່າຈະປ່ຽນແປງຂໍ້ມູນຕາມຄໍາຂໍຂອງທ່ານຫຼືບໍ່ພາຍໃນໄລຍະເວລາອັນເໝາະສົມນັບຈາກໄດ້ຮັບຄໍາຂໍຂອງທ່ານ. ຖ້າຫາກໂຄງການ EI/ECSE ປະຕິເສດການປ່ຽນແປງຂໍ້ມູນຕາມຄໍາຂໍຂອງທ່ານ, ພວກເຂົາຕ້ອງແຈ້ງທ່ານກ່ຽວກັບການປະຕິເສດ ແລະ ສິດຂອງທ່ານຕໍ່ການພິຈາລະນາຄະດີ.

ຕາມການຮ້ອງຂໍ, ໂຄງການ EI/ECSE ຕ້ອງໃຫ້ໂອກາດແກ່ທ່ານສໍາລັບການພິຈາລະນາຄະດີເພື່ອໂຕ້ແຍ້ງຂໍ້ມູນຢູ່ໃນບັນທຶກການສຶກສາກ່ຽວກັບລູກຂອງທ່ານເພື່ອໃຫ້ແນ່ໃຈວ່າ ມັນບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼື ມີການລະເມີດຄວາມລັບສ່ວນຕົວ ຫຼື ສິດອື່ນຂອງລູກຂອງທ່ານ.

ການພິຈາລະນາຄະດີເພື່ອໂຕ້ແຍ້ງຂໍ້ມູນຢູ່ໃນບັນທຶກການສຶກສາຕ້ອງໄດ້ດໍາເນີນຕາມຂັ້ນຕອນດໍາເນີນການສໍາລັບການພິຈາລະນາຄະດີດັ່ງກ່າວພາຍໃຕ້ກົດໝາຍສິດທິການສຶກສາຄອບຄົວ ແລະ ຄວາມເປັນສ່ວນຕົວ (Family Educational Rights and Privacy Act, FERPA).

ຕາມຜົນຂອງການພິຈາລະນາຄະດີແລ້ວ, ຖ້າໂຄງການ EI/ECSE ຕັດສິນວ່າ ຂໍ້ມູນບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼື ມີການລະເມີດຄວາມລັບສ່ວນຕົວ ຫຼື ສິດອື່ນຂອງເດັກນ້ອຍ, ໜ່ວຍງານຕ້ອງປ່ຽນແປງຂໍ້ມູນ ແລະ ແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນ.

ຕາມຜົນຂອງການພິຈາລະນາຄະດີແລ້ວ, ຖ້າໂຄງການ EI/ECSE ຕັດສິນວ່າ ຂໍ້ມູນບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼື ມີການລະເມີດຄວາມລັບສ່ວນຕົວ ຫຼື ສິດອື່ນຂອງເດັກນ້ອຍ, ໜ່ວຍງານຕ້ອງແຈ້ງສິດຂອງທ່ານໃຫ້ທ່ານຊາບເພື່ອເອົາເຂົ້າໃນບັນທຶກທີ່ໜ່ວຍງານຮັກສາໄວ້ກ່ຽວກັບລູກຂອງທ່ານ, ເຊິ່ງເປັນຂໍ້ຄວາມຄຳເວົ້າການໃຫ້ຄຳເຫັນກ່ຽວກັບຂໍ້ມູນ ຫຼື ການໃຫ້ເຫດຜົນໃດໜຶ່ງທີ່ທ່ານບໍ່ເຫັນດີກັບຄຳຕັດສິນຂອງໂຄງການ EI/ECSE.

ຄຳອະທິບາຍຂອງທ່ານຕ້ອງ:

1. ຖືກໂຄງການ EI/ECSE ເກັບຮັກສາໄວ້ເປັນສ່ວນຂອງບັນທຶກລູກຂອງທ່ານໄປເທົ່າທີ່ບັນທຶກ ຫຼື ສ່ວນທີ່ໂຕ້ແຍ້ງນັ້ນຖືກໂຄງການ EI/ECSE ຮັກສາໄວ້ແລ້ວ; **<u>ແລະ</u>,**
2. ຖ້າໂຄງການ EI/ECSE ເປີດເຜີຍບັນທຶກລູກຂອງທ່ານ ຫຼື ສ່ວນທີ່ໄດ້ຄັດຄ້ານນັ້ນໃຫ້ກັບຝ່າຍອື່ນໃດໜຶ່ງ, ກໍ່ຕ້ອງໄດ້ເປີດເຜີຍຄຳອະທິບາຍດັ່ງກ່າວໃຫ້ຝ່າຍນັ້ນນຳອີກ.

**ຂໍ້ມູນ "ສາມາດລະບຸຕົວບຸກຄົນໄດ້" ແມ່ນຫຍັງ?**

ຂໍ້ມູນທີ່ສາມາດລະບຸຕົວຕົນໄດ້ແມ່ນຖືກກຳນົດໄວ້ໃນ FERPA, 34 CFR 99.1 ຫາ 99.38, ເຊິ່ງປົກປ້ອງບັນທຶກຂອງເດັກພິການ, ລວມທັງການຊ່ວຍເຫຼືອແຕ່ຫົວທີ ແລະ ບັນທຶກການສຶກສາພິເສດຂອງໄວເດັກ. IDEA ຍັງຍອມຮັບຄຳນິຍາມກ່ຽວກັບ "ບັນທຶກການສຶກສາ" ເບິ່ງໄດ້ທີ່ 34 CFR ພາກທີ 99, FERPA. ສຳລັບ EI, ຄຳວ່າບັນທຶກການສຶກສາໝາຍເຖິງການບັນທຶກການຊ່ວຍເຫຼືອແຕ່ຫົວທີ.

ຂໍ້ມູນສາມາດລະບຸຕົວບຸກຄົນໄດ້ລວມເອົາຂໍ້ມູນຢ່າງເຊັ່ນ:

(a) ຊື່ລູກຂອງທ່ານ, ຊື່ຂອງທ່ານທີ່ເປັນພໍ່ແມ່ ຫຼື ຊື່ຂອງສະມາຊິກຄອບຄົວຄົນອື່ນ;

(b) ທີ່ຢູ່ຂອງລູກຂອງທ່ານ;

(c) ຕົວລະບຸຕົວບຸກຄົນເຊັ່ນ: ເລກປະກັນສັງຄົມຂອງລູກຂອງທ່ານ ຫຼື ເລກປະຈຳຕົວນັກຮຽນ;

(d) ບັນຊີລາຍຊື່ລັກສະນະສ່ວນຕົວ ຫຼື ຂໍ້ມູນອື່ນທີ່ຈະເຮັດໃຫ້ມີຄວາມເປັນໄປໄດ້ທີ່ຈະລະບຸຕົວລູກຂອງທ່ານດ້ວຍຄວາມແນ່ນອນທີ່ສົມເຫດສົມຜົນ;

(e) ຂໍ້ມູນອື່ນໆເຊັ່ນ: ວັນເດືອນປີເກີດຂອງລູກຂອງທ່ານ, ສະຖານທີ່ເກີດ ແລະ ຊື່ຕອນບໍ່ທັນແຕ່ງງານຂອງແມ່.

**ບັນທຶກການສຶກສາຂອງລູກຂ້ອຍຖືກເກັບເປັນຄວາມລັບບໍ?**

ແມ່ນແລ້ວ, ກົດໝາຍດ້ານສິດ ແລະ ຄວາມເປັນສ່ວນຕົວທາງການສຶກສາຂອງຄອບຄົວ (FERPA) ແລະ IDEA, ຍັງປົກປ້ອງຄວາມລັບຂອງບັນທຶກທາງການສຶກສາທຸກຢ່າງຂອງລູກທ່ານ ແລະ ຂໍ້ມູນສາມາດລະບຸຕົວບຸກຄົນໄດ້.

ແຕ່ລະໂຄງການ EI/ECSE ຕ້ອງປົກປ້ອງຄວາມລັບຂອງຂໍ້ມູນທີ່ສາມາດລະບຸຕົວບຸກຄົນຢູ່ໃນຂັ້ນຕອນການເກັບເອົາ, ການເກັບຮັກສາ, ການເປີດເຜີຍ ແລະ ການທຳລາຍ.

ເຈົ້າໜ້າທີ່ຄົນໜຶ່ງຢູ່ໃນແຕ່ລະໜ່ວຍງານເຂົ້າຮ່ວມຕ້ອງຮັບຜິດຊອບຕໍ່ການຮັບປະກັນເລື່ອງການຮັກສາຄວາມລັບໃດໜຶ່ງຂອງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້.

ທຸກຄົນທີ່ເກັບເອົາ ຫຼື ໃຊ້ຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ນັ້ນຕ້ອງໄດ້ຮັບການຝຶກອົບຮົມ ຫຼື ການແນະນຳກ່ຽວກັບນະໂຍບາຍຂອງລັດໂອເຣກອນ ແລະ ຂັ້ນຕອນດຳເນີນການກ່ຽວກັບການເກັບຮັກສາຄວາມລັບພາຍໃຕ້ IDEA ແລະ FERPA.

ເພື່ອເອົາໄວ້ໃນການກວດກາຂອງລັດ, ແຕ່ລະໂຄງການ EI/ECSE ຕ້ອງຮັກສາບັນຊີລາຍຊື່ ແລະ ຕຳແໜ່ງປະຈຸບັນຂອງພະນັກງານເຫຼົ່ານີ້ໄວ້ພາຍໃນໜ່ວຍງານ ເຊິ່ງເປັນຜູ້ທີ່ອາດຈະມີການເຂົ້າເຖິງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້.

ນອກຈາກວ່າຂໍ້ມູນແມ່ນມີຢູ່ໃນບັນທຶກການສຶກສາແລ້ວ ແລະ ການເປີດເຜີຍແມ່ນໄດ້ຮັບອະນຸຍາດ ໂດຍບໍ່ຕ້ອງມີຄຳຍິນຍອມຂອງພໍ່ແມ່ພາຍໃຕ້ກົດໝາຍສິດການສຶກສາຄອບຄົວ ແລະ ຄວາມເປັນສ່ວນຕົວ (Family Educational Rights and Privacy Act, FERPA), ທ່ານຕ້ອງໃຫ້ຄຳຍິນຍອມເປັນລາຍລັກອັກສອນກ່ອນທີ່ຈະໃຫ້ເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນແກ່ຝ່າຍອື່ນໆທີ່ບໍ່ແມ່ນເຈົ້າໜ້າທີ່ທາງການຂອງໂຄງການ EI/ECSE ຂອງລູກຂອງທ່ານໄດ້.

ຍົກເວັ້ນພາຍໃຕ້ສະພາບການທີ່ລະບຸໄວ້ຢູ່ລຸ່ມນີ້, ແມ່ນບໍ່ຈຳເປັນຕ້ອງມີຄຳຍິນຍອມຂອງທ່ານກ່ອນທີ່ຈະເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໃຫ້ແກ່ເຈົ້າໜ້າທີ່ທາງການຂອງໜ່ວຍງານເຂົ້າຮ່ວມເພື່ອຈຸດປະສົງທີ່ໃຫ້ບັນລຸໄດ້ຕາມເງື່ອນໄຂກຳນົດຂອງ IDEA.

ສຳລັບ ECSE: ຖ້າທ່ານໄດ້ລົງທະບຽນໃຫ້ລູກຂອງທ່ານເຂົ້າຮຽນຢູ່ໂຮງຮຽນເອກະຊົນທີ່ບໍ່ຢູ່ໃນເຂດການສຶກສາດຽວກັນກັບທີ່ທ່ານອາໄສຢູ່, ຈະຕ້ອງໄດ້ຮັບຄຳຍິນຍອມຂອງທ່ານກ່ອນຈະມີການເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໃດໜຶ່ງກ່ຽວກັບລູກຂອງທ່ານລະຫວ່າງເຈົ້າໜ້າທີ່ຢູ່ໃນເຂດການສຶກສາບ່ອນທີ່ໂຮງຮຽນເອກະຊົນຕັ້ງຢູ່ ແລະ ເຈົ້າໜ້າທີ່ຢູ່ໃນເຂດການສຶກສາບ່ອນທີ່ທ່ານອາໄສຢູ່.

## ການຄຸ້ມຄອງ

ໂດຍທົ່ວໄປແລ້ວ, ທ່ານຕ້ອງໃຫ້ການຍິນຍອມເປັນລາຍລັກອັກສອນສຳລັບຄົນອື່ນທີ່ນອກເໜືອຈາກພະນັກງານໂຄງການ EI/ECSE ຂອງລູກທ່ານກ່ອນໃນການເບິ່ງບັນທຶກການສຶກສາຂອງລູກທ່ານ, ເວັ້ນເສຍແຕ່ວ່າການເປີດເຜີຍແມ່ນໄດ້ຮັບອະນຸຍາດໂດຍບໍ່ຈຳເປັນຕ້ອງໃຊ້ການຍິນຍອມຈາກພໍ່ແມ່ພາຍໃຕ້ FERPA ແລະ ສຳລັບ EI ພາຍໃຕ້ IDEA.

ໂດຍທົ່ວໄປແລ້ວ, FERPA ອານຸຍາດວ່າບັນທຶກຂອງລູກທ່ານສາມາດຖືກເປີດເຜີຍໄດ້ໂດຍປາສະຈາກຄວາມຍິນຍອມຂອງທ່ານ:

- ຄູສອນ ແລະ ພະນັກງານໂຄງການອື່ນຜູ້ທີ່ມີ " ຄວາມສົນໃຈດ້ານການສຶກສາຢ່າງຖືກຕ້ອງຕາມກົດໝາຍ;"
- ໂຄງການ, ເຂດ ຫຼື ໜ່ວຍງານການສຶກສາອື່ນ, ຖ້າຫາກທ່ານກຳລັງໂອນຍ້າຍ ແລະ ໄດ້ຮັບການບໍລິການຈາກເຂດ ຫຼື ໜ່ວຍງານນັ້ນ.

ບັນທຶກຂອງລູກທ່ານຍັງອາດຈະຖືກເປີດເຜີຍໂດຍປາສະຈາກຄວາມຍິນຍອມຈາກທ່ານໃນສະຖານະການທີ່ຈຳກັດຕາມທີ່ໄດ້ລະບຸໄວ້ໃນກົດໝາຍກ່ຽວກັບສິດ ແລະ ຄວາມເປັນສ່ວນຕົວກ່ຽວກັບການສຶກສາຂອງຄອບຄົວ (FERPA). ຕົວຢ່າງ: ຄຳຍິນຍອມເປັນລາຍອັກສອນຂອງທ່ານບໍ່ຈຳເປັນຕ້ອງເປັນໄປຕາມຄຳສັ່ງຂອງສານ ຫຼື ໃນສະຖານະການສຸກເສີນດ້ານສຸຂະພາບ ຫຼື ຄວາມປອດໄພ. ບາງຂໍ້ມູນເຊັ່ນ: ຊື່, ທີ່ຢູ່ ແລະ ກິດຈະກຳຂອງເດັກອາດຈະຖືກເປີດເຜີຍເປັນ "ຂໍ້ມູນແນະນຳ", **ຖ້າຫາກ**ທ່ານບໍ່ໄດ້ເຊັນເອກະສານປະຕິເສດການເປີດເຜີຍຂໍ້ມູນແນະນຳ. ຕິດຕໍ່ຫາໂຄງການຂອງທ່ານສຳລັບສຳເນົາຂອງນະໂຍບາຍບັນທຶກສະບັບຄົບຖ້ວນຂອງໂຄງການຂອງທ່ານ.

ໂຄງການ EI/ECSE ຂອງທ່ານຕ້ອງແຈ້ງທ່ານໃນເວລາທີ່ຂໍ້ມູນສາມາດລະບຸຕົວບຸກຄົນຖືກເກັບເອົາ, ຮັກສາ ຫຼື ນຳໃຊ້ແມ່ນບໍ່ຈຳເປັນຕ້ອງໃນການໃຫ້ບໍລິການຂອງ EI/ECSE ແກ່ລູກຂອງທ່ານ ຫຼື ບໍ່ຈຳເປັນຕ້ອງໄດ້ຮັບການຮັກສາໄວ້ພາຍໃຕ້ກົດໝາຍຂອງລັດ ແລະ ລັດຖະບານກາງທີ່ຍັງຄັບໃຊ້.

ຂໍ້ມູນຕ້ອງຖືກທຳລາຍຖິ້ມຕາມການຮ້ອງຂໍຂອງທ່ານ. (ການທຳລາຍໝາຍເຖິງການທຳລາຍເປັນຊິ້ນ ຫຼື ການລຶບຕົວລະບຸຂໍ້ມູນສ່ວນຕົວບຸກຄົນອອກໄປຈາກຂໍ້ມູນເພື່ອວ່າຂໍ້ມູນຈະບໍ່ສາມາດລະບຸຕົວບຸກຄົນໄດ້ອີກ.)

ເຖິງຢ່າງໃດກໍ່ຕາມ, ບັນທຶກຖາວອນກ່ຽວກັບຊື່, ທີ່ຢູ່ ແລະ ເບີໂທລະສັບຂອງລູກທ່ານ ແລະ ການເຂົ້າຮ່ວມໃນ EI/ECSE ອາດຈະຖືກເກັບໄວ້ໂດຍບໍ່ຈຳກັດເວລາ. ສຳລັບ EI, ບັນທຶກຖາວອນອາດຈະລວມເຖິງຊື່ຂອງຜູ້ປະສານງານການບໍລິການ ແລະ ຜູ້ໃຫ້ບໍລິການ EI, ຂໍ້ມູນການອອກ (ລວມເຖິງອາຍຸ ແລະ ອາຍຸໃນການອອກ ແລະ ໂຄງການອື່ນໆທີ່ໄດ້ເຂົ້າກ່ອນຈະອອກ.

## ຄຳຍິນຍອມຂອງພໍ່ແມ່

### "ຄຳຍິນຍອມ" ໝາຍຄວາມວ່າແນວໃດ?

*ການຍິນຍອມ*ໝາຍເຖິງ:

1. ທ່ານໄດ້ຮັບແຈ້ງຂໍ້ມູນຄົບຖ້ວນເປັນພາສາແມ່ຂອງທ່ານ ແລະ ວິທີການສື່ສານອື່ນ (ເຊັ່ນ: ພາສາມື, ຕົວໜັງສືນູນ ຫຼື ການສື່ສານປາກເປົ່າ) ໃນເລື່ອງຂໍ້ມູນກ່ຽວກັບມາດຕະການດຳເນີນການໃດໜຶ່ງຕໍ່ກັບສິ່ງທີ່ທ່ານກຳລັງໃຫ້ການຍິນຍອມ.
2. ທ່ານເຂົ້າໃຈ ແລະ ເຫັນດີເປັນລາຍລັກອັກສອນຕໍ່ກັບມາດຕະການດຳເນີນການນັ້ນ ແລະ ຄຳຍິນຍອມອະທິບາຍວ່າ ມາດຕະການດຳເນີນການ ແລະ ບັນຊີລາຍຊື່ບັນທຶກ (ຖ້າມີ) ທີ່ຈະຖືກເປີດເຜີຍອອກມາ ແລະ ຈະເອົາໃຫ້ໃຜ; **<u>ແລະ</u>**
3. ທ່ານເຂົ້າໃຈວ່າ ຄຳຍິນຍອມແມ່ນໃຫ້ດ້ວຍຄວາມສະໝັກໃຈໃນສ່ວນຂອງທ່ານ ແລະ ທ່ານອາດຈະຖອນຄຳຍິນຍອມຂອງຕົນເອງຄືນໃນເວລາໃດກໍ່ໄດ້.

### ຈຳເປັນຕ້ອງມີການຍິນຍອມຈາກຂ້ອຍບໍໃນການປະເມີນລູກຂອງຂ້ອຍ?

ແມ່ນ. ໜ່ວຍງານຂອງລັດຕ້ອງໃຫ້ແຈ້ງການເປັນລາຍລັກອັກສອນແກ່ທ່ານ ແລະ ແຈ້ງໃຫ້ທ່ານຊາບກ່ຽວກັບຄຳຍິນຍອມເປັນລາຍລັກອັກສອນກ່ອນໜ່ວຍງານຈະສາມາດປະເມີນຜົນ ຫຼື ປະເມີນຜົນລູກຂອງທ່ານຄືນໃໝ່. ໜ່ວຍງານຂອງລັດຕ້ອງແຈ້ງທ່ານກ່ຽວກັບການທົດສອບທີ່ຈະຖືກໃຊ້ກັບລູກຂອງທ່ານ.

ຄຳຍິນຍອມຂອງທ່ານສຳລັບການປະເມີນຜົນຂັ້ນຕົ້ນບໍ່ໝາຍຄວາມວ່າ ທ່ານໄດ້ໃຫ້ຄຳຍິນຍອມຂອງທ່ານເພື່ອໃຫ້ໂຄງການ ECSE ເລີ່ມຕົ້ນໃຫ້ການບໍລິການ ECSE ກັບລູກຂອງທ່ານແລ້ວ.

### ມີຂໍ້ຍົກເວັ້ນບາງຢ່າງບໍໃນເວລາທີ່ຕ້ອງມີການຍິນຍອມຈາກຂ້ອຍໃນການປະເມີນລູກຂອງຂ້ອຍ?

ແມ່ນ. ການຍິນຍອມຈາກພໍ່ແມ່ແມ່ນບໍ່ຈຳເປັນກ່ອນ (1) ການກວດສອບຂໍ້ມູນທີ່ມີຢູ່ອັນເປັນສ່ວນໜຶ່ງຂອງການປະເມີນຜົນ ຫຼື ການປະເມີນຜົນຄືນ; (2) ການໃຫ້ບົດທົດສອບ ຫຼື ການປະເມີນຜົນທີ່ຈັດໃຫ້ກັບເດັກທຸກຄົນ (ເວັ້ນເສຍແຕ່ວ່າການຍິນຍອມແມ່ນຈຳເປັນສຳລັບພໍ່ແມ່ຂອງເດັກທຸກຄົນກ່ອນການດຳເນີນການສອບເສັງ) ຫຼື (3) ການດຳເນີນການທົດສອບການປະເມີນຜົນ, ຂັ້ນຕອນ ຫຼື ເອກະສານທີ່ໄດ້ລະບຸໃນ IFSP ຂອງເດັກເປັນມາດຕະການສຳລັບການກຳນົດຄວາມກ້າວໜ້າ.

ນອກຈາກນັ້ນ, ສຳລັບ ECSE, ໜ່ວຍງານຂອງລັດອາດຈະປະເມີນລູກຂອງທ່ານຄືນໂດຍປາສະຈາກການຍິນຍອມເປັນລາຍລັກອັກສອນຂອງທ່ານ, ຖ້າຫາກວ່າມັນໄດ້ໃຊ້ມາດຕະການທີ່ສົມເຫດສົມຜົນເພື່ອຮັບເອົາຄຳຍິນຍອມຂອງທ່ານ ແລະ ທ່ານບໍ່ໄດ້ຕອບສະໜອງໃດໆ. ຂໍ້ກຳນົດຂອງລັດຍັງຕ້ອງການຄຳຍິນຍອມຈາກພໍ່ແມ່ກ່ອນການດຳເນີນການທົດສອບທາງປັນຍາ ຫຼື ດ້ານບຸກຄະລິກກະພາບ.

### ຂ້ອຍສາມາດປະຕິເສດການໃຫ້ການຍິນຍອມສຳລັບລູກຂອງຂ້ອຍທີ່ຈະຕ້ອງຖືກປະເມີນ ຫຼື ປະເມີນຄືນໃໝ່ໄດ້ບໍ?

ແມ່ນແລ້ວ, ທ່ານສາມາດປະຕິເສດການຍິນຍອມສຳລັບການປະເມີນຜົນ ຫຼື ການປະເມີນຜົນຄືນໃໝ່ສຳລັບລູກຂອງທ່ານໄດ້. ເພື່ອຫຼີກລ່ຽງຄວາມສັບສົນ, ທ່ານຄວນແຈ້ງໜ່ວຍງານຂອງລັດເປັນລາຍລັກອັກສອນ, ຖ້າຫາກທ່ານຕ້ອງການປະຕິເສດການຍິນຍອມ.

ສຳລັບ ECSE: ຖ້າຫາກທ່ານປະຕິເສດທີ່ຈະໃຫ້ການຍິນຍອມສຳລັບການປະເມີນຜົນກ່ຽວກັບການປະເມີນຜົນຄືນໃໝ່, ໜ່ວຍງານຂອງລັດອາດຈະຂໍການປະເມີນຜົນລູກຂອງທ່ານຜ່ານການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ, ຖ້າຫາກພວກເຂົາເຊື່ອວ່າການປະເມີນຜົນແມ່ນຈຳເປັນຕໍ່ກັບລູກຂອງທ່ານ. ທ່ານ ແລະ ໜ່ວຍງານຂອງລັດອາດຈະເຫັນດີໃນການລອງໄກ່ເກ່ຍເພື່ອແກ້ໄຂຂໍ້ຂັດແຍ່ງຂອງທ່ານ. ດັ່ງທີ່ເຮັດດ້ວຍການປະເມີນຜົນຂັ້ນຕົ້ນ, ໂຄງການ ECSE ບໍ່ໄດ້ລະເມີດພັນທະໜ້າທີ່ຂອງຕົນເອງພາຍໃຕ້ IDEA, ຖ້າເຂດບໍ່ດຳເນີນການປະເມີນຜົນຄືນໃໝ່ຢູ່ໃນຮູບແບບນີ້.

### ຂ້ອຍສາມາດຖອນຄຳຍິນຍອມຂອງຂ້ອຍເພື່ອການປະເມີນຜົນໄດ້ບໍ?

ຫຼັງຈາກທ່ານໄດ້ໃຫ້ການຍິນຍອມເປັນລາຍລັກອັກສອນໃນການປະເມີນ ຫຼື ປະເມີນລູກຂອງທ່ານຄືນໃໝ່ແກ່ໜ່ວຍງານຂອງລັດ, ທ່ານສາມາດຖອນການຍິນຍອມໄດ້ກໍ່ຕໍ່ເມື່ອກິດຈະກຳການປະເມີນຜົນແມ່ນຍັງບໍ່ທັນສຳເລັດ.

**ຈຳເປັນຕ້ອງໄດ້ຮັບຄວາມຍິນຍອມຈາກຂ້ອຍບໍເພື່ອໃຫ້ລູກຂອງຂ້ອຍໄດ້ຮັບການບໍລິການ EI?**

ແມ່ນແລ້ວ, ທ່ານຕ້ອງໄດ້ໃຫ້ການຍິນຍອມທີ່ເປັນລາຍລັກອັກສອນຂອງທ່ານກ່ອນທີ່ໂຄງການຈະສາມາດໃຫ້ການບໍລິການ EI ແກ່ລູກຂອງທ່ານ. ຄຳຍິນຍອມຂອງທ່ານແມ່ນຈຳເປັນສຳລັບການບໍລິການ EI ແຕ່ລະຢ່າງຕາມທີ່ໄດ້ອະທິບາຍໄວ້ໃນ IFSP ຂອງລູກທ່ານ. ຖ້າຫາກທ່ານປະຕິເສດ ຫຼື ຍົກເລີກການບໍລິການ, ຈະບໍ່ມີການສະໜອງການບໍລິການນັ້ນໃຫ້. ການບໍລິການ EI ອື່ນໆແມ່ນຍັງມີໃຫ້.

**ຈຳເປັນຕ້ອງໄດ້ຮັບຄວາມຍິນຍອມຈາກຂ້ອຍບໍເພື່ອໃຫ້ລູກຂອງຂ້ອຍໄດ້ຮັບການບໍລິການ ECSE?**

ແມ່ນແລ້ວ, ECSE ແມ່ນໂຄງການສຶກສາພິເສດ. ທ່ານຕ້ອງໄດ້ໃຫ້ການຍິນຍອມທີ່ເປັນລາຍລັກອັກສອນຂອງທ່ານກ່ອນທີ່ໂຄງການຈະສາມາດຈັດລູກຂອງທ່ານເຂົ້າໃນໂຄງການ ECSE ເປັນຄັ້ງທຳອິດ. ໃນເວລາທີ່ທ່ານໃຫ້ການຍິນຍອມສຳລັບການບໍລິການ ECSE, ທ່ານກຳລັງໃຫ້ການຍິນຍອມແກ່ລູກຂອງທ່ານໃນການມີສ່ວນຮ່ວມໃນການບໍລິການພາກ B ຂອງ IDEA, ເຊິ່ງລວມເຖິງການບໍລິການກ່ຽວກັບການສຶກສາພິເສດສຳລັບໄວເຂົ້າຮຽນ, ຖ້າຫາກວ່າລູກຈອງທ່ານຍັງມີສິດຕາມອາຍຸເຂົ້າຮຽນ.

**ຄຳຍິນຍອມສຳລັບການນຳໃຊ້ຜົນປະໂຫຍດ ແລະ ປະກັນໄພຂອງລັດ (ເຊັ່ນ: Medicaid) ສຳລັບເດັກນ້ອຍຢູ່ໃນໂຄງການ ECSE (ນັ້ນຄືເດັກນ້ອຍອາຍຸ 3-21 ປີ)**

ຕ້ອງໄດ້ຮັບການຍິນຍອມເປັນລາຍລັກສອນຈາກຜູ້ປົກຄອງກ່ອນທີ່ໂຄງການ ECSE ຈະເຂົ້າເຖິງປະກັນໄພແຫ່ງລັດຂອງທ່ານ (ຕົວຢ່າງ: Medicaid) ເປັນຄັ້ງທຳອິດ. ການຍິນຍອມນີ້ຕ້ອງລະບຸ: (a) ຂໍ້ມູນສາມາດລະບຸຕົວບຸກຄົນໄດ້ທີ່ອາດຈະຖືກເປີດເຜີຍ (ຕົວຢ່າງ: ບັນທຶກຂອງຂໍ້ມູນກ່ຽວກັບການບໍລິການທີ່ອາດຈະສະໜອງໃຫ້); (b) ຈຸດປະສົງຂອງການເປີດເຜີຍ (ຕົວຢ່າງ: ການຮຽກເກັບເງິນສຳລັບການບໍລິການ); ແລະ (c) ໜ່ວຍງານທີ່ສາມາດເປີດເຜີຍຂໍ້ມູນໄດ້ (ຕົວຢ່າງ: Medicaid). ຄຳຍິນຍອມຍັງຕ້ອງລະບຸວ່າພໍ່ແມ່ເຂົ້າໃຈ ແລະ ເຫັນດີໃຫ້ໜ່ວຍງານຂອງລັດເຂົ້າເຖິງຜົນປະໂຫຍດຂອງລັດ ຫຼື ປະກັນໄພຂອງເດັກ ຫຼື ຂອງພໍ່ແມ່ເພື່ອຊໍາລະຄ່າບໍລິການ.

ເຂດໂຮງຮຽນຕ້ອງໃຫ້ແຈ້ງການທີ່ເປັນລາຍລັກອັກສອນແກ່ທ່ານກ່ອນທີ່ຈະຂໍການຍິນຍອມນີ້ ແລະ ກ່ອນການເຂົ້າເຖິງຜົນປະໂຫຍດສາທາລະນະຂອງເດັກ ຫຼື ຂອງພໍ່ແມ່ເປັນຄັ້ງທຳອິດ. ເຂດໂຮງຮຽນຍັງຕ້ອງໃຫ້ແຈ້ງການທີ່ເປັນລາຍລັກອັກສອນແກ່ທ່ານ**ເປັນລາຍປີ**ຫຼັງຈາກໄດ້ຮັບການຍິນຍອມເພື່ອນຳໃຊ້ຜົນປະໂຫຍດສາທາລະນະ.

**ຈຳເປັນຕ້ອງໄດ້ຮັບຄວາມຍິນຍອມຈາກຂ້ອຍບໍເພື່ອການນຳໃຊ້ຜົນປະໂຫຍດຂອງລັດ ຫຼື ເອກະຊົນ ຫຼື ປະກັນໄພສຳລັບການບໍລິການ ECSE?**

ການບໍລິການ EI/ECSE ສຳລັບລູກຂອງທ່ານແມ່ນມີໃຫ້ໂດຍທີ່ທ່ານ ຫຼື ຄອບຄົວຂອງທ່ານບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆ. ເຖິງຢ່າງໃດກໍ່ຕາມ, ໂຄງການທີ່ໃຫ້ບໍລິການຂອງທ່ານອາດຈະຂໍຮຽກເກັບເງິນປະກັນໄພ ຫຼື ຜົນປະໂຫຍດຂອງທ່ານ ຫຼື ຂອງລູກທ່ານ (ເຊັ່ນ: Medicaid ຫຼື Oregon Health Plan (ແຜນປະກັນສຸຂະພາບລັດໂອເຣກອນ)) ຫຼື ປະກັນໄພເອກະຊົນເພື່ອໃຫ້ການຊ່ວຍເຫຼືອໃນການຊຳລະຄ່າບໍລິການ EI/ECSE. ໂຄງການຂອງທ່ານຕ້ອງໄດ້ຮັບຄຳຍິນຍອມຈາກທ່ານເພື່ອດຳເນີນການດັ່ງກ່າວ. ຖ້າຫາກລູກຂອງທ່ານອາຍຸໄດ້ສາມປີຂຶ້ນໄປ, ການຍິນຍອມທີ່ຮ້ອງຂໍ ແລະ ຂໍ້ມູນແຈ້ງການແມ່ນສະແດງຢູ່ຂ້າງເທິງ.

ປະກັນໄພລັດ ຫຼື ເອກະຊົນຂອງທ່ານ ຫຼື ຂອງລູກທ່ານບໍ່ສາມາດຖືກຮຽກເກັບເງິນສຳລັບການບໍລິການທີ່ລູກຂອງທ່ານມີສິດໄດ້ຮັບໂດຍບໍ່ເສຍຄ່າໃຊ້ຈ່າຍເຊັ່ນ:

1. ການປະເມີນຜົນ ແລະ ການປະເມີນລູກຂອງທ່ານ;
2. ການປະສານງານບໍລິການສຳລັບທ່ານ ຫຼື ລູກຂອງທ່ານ;
3. ການພັດທະນາ, ການທົບທວນ ແລະ ການປະເມີນຜົນຂອງ IFSPs.

ຖ້າຫາກທ່ານໃຫ້ການຍິນຍອມຂອງທ່ານສຳລັບປະກັນໄພຂອງທ່ານ ຫຼື ຂອງລູກຂອງທ່ານສຳລັບການບໍລິການໂຄງການຂອງທ່ານອາດຈະຊຳລະຄ່າໃຊ້ຈ່າຍເຊັ່ນ: ສ່ວນທີ່ຫຼຸດໄດ້ ຫຼື ການຮ່ວມຈ່າຍທີ່ກ່ຽວຂ້ອງກັບການບໍລິການເຫຼົ່ານັ້ນ. ຖ້າຫາກທ່ານບໍ່ເຫັນດີກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຮຽກເກັບເງິນຄ່າປະກັນໄພ, ທ່ານອາດຈະນຳໃຊ້ຂະບວນການໃດໜຶ່ງທີ່ໄດ້ລະບຸໄວ້ໃນ "ການແກ້ໄຂຂໍ້ຂັດແຍ່ງ."

ບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມສໍາລັບການບໍລິການໃຫ້ແກ່ຄອບຄົວດ້ອຍປະກັນໄພຂອງລັດ ຫຼື ເອກະຊົນ. ການບໍລິການຈະບໍ່ມີການລ່າຊ້າ ຫຼື ຖືກປະຕິເສດເນື່ອງມາຈາກຄວາມບໍ່ສາມາດໃນການຊໍາລະ ຫຼື ການປະຕິເສດການຍິນຍອມຂອງທ່ານໃນການເຂົ້າເຖິງປະກັນໄພລັດ ຫຼື ເອກະຊົນ.

**ຂ້ອຍສາມາດປະຕິເສດການຍິນຍອມສໍາລັບລູກຂອງຂ້ອຍເພື່ອໃຫ້ໄດ້ຮັບການບໍລິການ ECSE ໄດ້ບໍ?**

ແມ່ນແລ້ວ, ທ່ານສາມາດປະຕິເສດການຍິນຍອມສໍາລັບການຊັບຊ້ອນຂັ້ນຕົ້ນຂອງລູກທ່ານໃນການສຶກສາພິເສດຂອງລູກທ່ານ. ເພື່ອຫຼີກລ່ຽງຄວາມສັບສົນ, ທ່ານຄວນແຈ້ງໂຄງການເປັນລາຍລັກອັກສອນ, ຖ້າຫາກທ່ານຕ້ອງການປະຕິເສດການຍິນຍອມ.

ຖ້າທ່ານຢາກຖອນ (ຍົກເລີກ) ຄໍາຍິນຍອມຂອງທ່ານຫຼັງຈາກລູກຂອງທ່ານໄດ້ເລີ່ມຕົ້ນຮັບ ECSE ແລະ ການສຶກສາທີ່ກ່ຽວຂ້ອງ, ທ່ານຕ້ອງເຮັດເປັນລາຍລັກອັກສອນ. ການຖອນຄໍາຍິນຍອມຂອງທ່ານບໍ່ລຶບລ້າງ (ຍົກເລີກ) ມາດຕະການດໍາເນີນການທີ່ເກີດຂຶ້ນຫຼັງຈາກທ່ານໃຫ້ຄໍາຍິນຍອມຂອງທ່ານ, ແຕ່ຈະມີຜົນສໍາລັບກ່ອນອັນທີ່ທ່ານຖອນມັນ. ນອກຈາກນັ້ນ, ໂຄງການ ECSE ບໍ່ຖືກຮຽກຮ້ອງໃຫ້ແກ້ໄຂ (ປ່ຽນແປງ) ບັນທຶກການສຶກສາລູກຂອງທ່ານ ເພື່ອໃຫ້ລຶບການອ້າງອີງໃດໜຶ່ງທີ່ລູກຂອງທ່ານໄດ້ຮັບ ECSE ແລະ ການບໍລິການທີ່ກ່ຽວຂ້ອງອອກໄປຫຼັງຈາກການຖອນຄໍາຍິນຍອມຂອງທ່ານ.

ຖ້າທ່ານບໍ່ຕອບກັບຄືນໃນເລື່ອງການສະເໜີຂໍເປັນລາຍລັກອັກສອນເພື່ອໃຫ້ຄໍາຍິນຍອມຂອງທ່ານສໍາລັບລູກຂອງທ່ານເພື່ອຮັບເອົາ ECSE ແລະ ການບໍລິການທີ່ກ່ຽວຂ້ອງເປັນຄັ້ງທໍາອິດ ຫຼື ຖ້າທ່ານປະຕິເສດທີ່ຈະໃຫ້ຄໍາຍິນຍອມດັ່ງກ່າວ ຫຼື ຕໍ່ມາຖອນ (ຍົກເລີກ) ຄໍາຍິນຍອມຂອງທ່ານເປັນລາຍລັກອັກສອນ, ໂຄງການ ECSE ອາດຈະບໍ່ໃຊ້ມາດຕະການປ້ອງກັນ (ນັ້ນຄື, ການໄກ່ເກ່ຍ, ຄໍາຮ້ອງທຸກຂະບວນການຕາມສິດທີ່ຄວນຈະໄດ້ຮັບ, ການປະຊຸມແກ້ໄຂບັນຫາຄືນ ຫຼື ການພິຈາລະນາຄະດີຂະບວນການຕາມສິດທີ່ຄວນຈະໄດ້ຮັບບາງສ່ວນ) ເພື່ອຮັບເອົາຂໍ້ຕົກລົງ ຫຼື ຄໍາຕັດສິນທີ່ ECSE ແລະ ການບໍລິການທີ່ກ່ຽວຂ້ອງ (ທີມງານ IFSP ຂອງລູກຂອງທ່ານແນະນໍາໃຫ້) ທີ່ອາດຈະຖືກຈັດໃຫ້ກັບລູກຂອງທ່ານໂດຍບໍ່ມີຄໍາຍິນຍອມຂອງທ່ານ.

ຖ້າທ່ານປະຕິເສດທີ່ຈະໃຫ້ຄໍາຍິນຍອມຂອງຕົນເອງແກ່ລູກຂອງທ່ານເພື່ອຮັບເອົາການບໍລິການ ECSE ເປັນຄັ້ງທໍາອິດ ຫຼື ຖ້າທ່ານບໍ່ຕອບກັບຄືນໃນເລື່ອງການສະເໜີຂໍ ເພື່ອໃຫ້ຄໍາຍິນຍອມດັ່ງກ່າວ ຫຼື ຕໍ່ມາຖອນ (ຍົກເລີກ) ຄໍາຍິນຍອມຂອງທ່ານເປັນລາຍລັກອັກສອນ ແລະ ໂຄງການ ECSE ບໍ່ຈັດການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃຫ້ກັບລູກຂອງທ່ານ ເຊິ່ງທາງເຂດການສຶກສາໄດ້ຂໍຄໍາຍິນຍອມຈາກທ່ານແລ້ວ, ໂຄງການ ECSE:

1. ບໍ່ໄດ້ມີການລະເມີດເງື່ອນໄຂກໍານົດທີ່ຈະເຮັດໃຫ້ມີການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE) ໃຫ້ແກ່ລູກຂອງທ່ານສໍາລັບການບໍ່ຈັດໃຫ້ມີການບໍລິການເຫຼົ່ານັ້ນແກ່ລູກຂອງທ່ານ; **<u>ແລະ,</u>**
2. ບໍ່ຈໍາເປັນຕ້ອງມີການປະຊຸມ IFSP ຫຼື ພັດທະນາ IFSP ຂຶ້ນມາໃຫ້ກັບລູກຂອງທ່ານສໍາລັບການບໍລິການ ECSE ທີ່ໄດ້ຂໍຄໍາຍິນຍອມຂອງທ່ານແລ້ວ.

ຖ້າທ່ານຖອນ (ຍົກເລີກ) ຄໍາຍິນຍອມຂອງທ່ານເປັນລາຍລັກອັກສອນຢູ່ໃນຈຸດໃດໜຶ່ງຫຼັງຈາກລູກຂອງທ່ານໄດ້ຮັບ ECSE ແລະ ການບໍລິການກ່ຽວຂ້ອງຄັ້ງທໍາອິດແລ້ວ, ຈາກນັ້ນໂຄງການ ECSE ອາດຈະບໍ່ສືບຕໍ່ໃຫ້ການບໍລິການດັ່ງກ່າວ, ແຕ່ຕ້ອງໃຫ້ແຈ້ງການເປັນລາຍລັກອັກສອນກ່ອນແກ່ທ່ານ, ຕາມທີ່ໄດ້ອະທິບາຍໄວ້ພາຍໃຕ້ຫົວຂໍ້ ***ແຈ້ງການເປັນລາຍລັກອັກສອນກ່ອນ***, ກ່ອນຈະຢຸດສືບຕໍ່ໃຫ້ບໍລິການເຫຼົ່ານັ້ນ.

**ກົດລະບຽບພິເສດສໍາລັບການປະເມີນຜົນຂັ້ນຕົ້ນຂອງເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງລັດ**

ຖ້າລູກຂອງທ່ານເປັນເດັກຢູ່ໃນການດູແລຂອງລັດ ແລະ ບໍ່ອາໄສຢູ່ກັບພໍ່ແມ່, ໂຄງການ ECSE ບໍ່ຕ້ອງການຄໍາຍິນຍອມຈາກພໍ່ແມ່ສໍາລັບການປະເມີນຜົນຂັ້ນຕົ້ນເພື່ອກໍານົດວ່າລູກຂອງທ່ານເປັນເດັກພິການຫຼືບໍ່, ຖ້າ:

1. ໂຄງການ ECSE ບໍ່ສາມາດຊອກຫາພໍ່ແມ່ຂອງເດັກໄດ້, ແມ້ວ່າໄດ້ໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນແລ້ວກໍ່ຕາມ;
2. ສິດຂອງພໍ່ແມ່ໄດ້ຖືກສິ້ນສຸດລົງຕາມກົດໝາຍຂອງລັດ; **<u>ຫຼື,</u>**
3. ຜູ້ພິພາກສາໄດ້ມອບສິດໃຫ້ທໍາການຕັດສິນເລື່ອງການສຶກສາ ແລະ ໃຫ້ຄໍາຍິນຍອມສໍາລັບການປະເມີນຜົນຂັ້ນຕົ້ນແກ່ບຸກຄົນທີ່ບໍ່ແມ່ນພໍ່ແມ່.

*ເດັກທີ່ຢູ່ໃນການດູແລຂອງລັດ*, ຕາມທີ່ໄດ້ໃຊ້ຢູ່ໃນ IDEA, ຕາມທີ່ລັດໄດ້ກຳນົດບ່ອນທີ່ເດັກອາໄສຢູ່, ໝາຍເຖິງເດັກຜູ້ທີ່:

1. ເປັນເດັກນ້ອຍອຸປະຖຳ;
2. ຖືກພິຈາລະນາເປັນເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງລັດພາຍໃຕ້ກົດໝາຍ; **ຫຼື,**
3. ຢູ່ໃນການຄຸ້ມຄອງຂອງໜ່ວຍງານສະຫວັດດີການເດັກຂອງລັດ.

*ເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງລັດ*ບໍ່ລວມເອົາເດັກນ້ອຍອຸປະຖຳ ຜູ້ທີ່ມີພໍ່ແມ່ອຸປະຖຳຢູ່. ຢູ່ໃນລັດໂອເຣກອນ, ເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງລັດແມ່ນເດັກຜູ້ທີ່ຢູ່ໃນການກັກກັນຊົ່ວຄາວ ຫຼື ຖາວອນຂອງ ຫຼື ໄດ້ເອົາໃຫ້ກັບກະຊວງບໍລິການມະນຸດ (Department of Human Services) ຜ່ານການດຳເນີນການຂອງສານເດັກ.

**ເງື່ອນໄຂທີ່ຕ້ອງການຄວາມຍິນຍອມອື່ນໆ - ECSE**

ໂຄງການ ECSE ຕ້ອງຮັກສາບັນທຶກຄວາມພະຍາຍາມທີ່ສົມເຫດສົມຜົນ ເພື່ອໃຫ້ໄດ້ຄຳຍິນຍອມຂອງພໍ່ແມ່ສຳລັບການປະເມີນຜົນຂັ້ນຕົ້ນ, ເພື່ອໃຫ້ການບໍລິການ ECSE ສຳລັບຄັ້ງທຳອິດ, ເພື່ອປະເມີນຜົນຄືນໃໝ່ ແລະ ເພື່ອຊອກຫາພໍ່ແມ່ຂອງເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງລັດສຳລັບການປະເມີນຜົນຂັ້ນຕົ້ນ. ເອກະສານຕ້ອງມີບັນທຶກຄວາມພະຍາຍາມຂອງໂຄງການ ECSE ຢູ່ໃນຂົງເຂດເຫຼົ່ານີ້ເຊັ່ນ:

1. ລາຍລະອຽດບັນທຶກການໂທລະສັບທີ່ໄດ້ໂທ ຫຼື ໄດ້ພະຍາຍາມໂທ ແລະ ຜົນໄດ້ຮັບການໂທເຫຼົ່ານັ້ນ;
2. ສຳເນົາຂອງໜັງສືພົວພັນທີ່ໄດ້ສົ່ງຫາພໍ່ແມ່ ແລະ ການຕອບຮັບໃດໜຶ່ງທີ່ໄດ້ຮັບມາ; **ແລະ,**
3. ລາຍລະອຽດບັນທຶກການໄປທີ່ບ້ານ ຫຼື ບ່ອນເຮັດວຽກຂອງພໍ່ແມ່ ແລະ ຜົນໄດ້ຮັບຂອງການໄປຫາເຫຼົ່ານັ້ນ.

ໂຄງການ EI/ECSE ຂອງທ່ານອາດຈະບໍ່ໃຊ້ການປະຕິເສດຂອງທ່ານເພື່ອຍິນຍອມຕໍ່ການບໍລິການອັນໜຶ່ງ ຫຼື ກິດຈະກຳເພື່ອປະຕິເສດທ່ານ ຫຼື ລູກຂອງທ່ານບໍ່ໃຫ້ໄດ້ຮັບການບໍລິການ, ຜົນປະໂຫຍດ ຫຼື ກິດຈະກຳອື່ນໃດໜຶ່ງ.

ຖ້າທ່ານໃຫ້ລູກຂອງທ່ານເຂົ້າໂຮງຮຽນກຽນຂອງເອກະຊົນດ້ວຍຄ່າໃຊ້ຈ່າຍຂອງທ່ານເອງ ແລະ ທ່ານບໍ່ໃຫ້ຄຳຍິນຍອມສຳລັບການປະເມີນຜົນຂັ້ນຕົ້ນຂອງລູກຂອງທ່ານ ຫຼື ການປະເມີນຜົນຄືນໃໝ່ຂອງລູກທ່ານ ຫຼື ທ່ານບໍ່ຕອບຄືນຄຳສະເໜີ ເພື່ອໃຫ້ຄຳຍິນຍອມຂອງທ່ານ, ໂຄງການ ECSE ອາດຈະບໍ່ໃຊ້ຄຳຍິນຍອມຂອງຕົນເອງລົບລ້າງຂັ້ນຕອນດຳເນີນການຕ່າງໆ (ນັ້ນຄືການໄກ່ເກ່ຍ ຫຼື ການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມທ່ຽງທຳ) ແລະ ບໍ່ຈຳເປັນຕ້ອງພິຈາລະນາລູກຂອງທ່ານວ່າມີສິດໄດ້ຮັບການບໍລິການທີ່ສາມາດເທົ່າກັນໄດ້ (ການບໍລິການທີ່ມີໃຫ້ກັບນັກຮຽນພິການຂອງໂຮງຮຽນເອກະຊົນທີ່ພໍ່ແມ່ໃຫ້ເຂົ້າຮຽນ).

**ແຈ້ງການເປັນລາຍລັກອັກສອນລ່ວງໜ້າ**

ໂຄງການ EI/ECSE ຕ້ອງອອກແຈ້ງການເປັນລາຍລັກອັກສອນແກ່ທ່ານ (ໃຫ້ຂໍ້ມູນແນ່ນອນເປັນລາຍລັກອັກສອນແກ່ທ່ານ), ເມື່ອທາງເຂດ:

1. ສະເໜີໃຫ້ລິເລີ່ມ ຫຼື ປ່ຽນແປງການກຳນົດ, ການປະເມີນ ຫຼື ການຈັດວາງການສຶກສາຂອງລູກຂອງທ່ານ ຫຼື ການໃຫ້ການບໍລິການຊ່ວຍເຫຼືອແຕ່ຫົວທີສຳລັບເດັກນ້ອຍຕັ້ງແຕ່ເກີດເຖິງອາຍຸສາມປີ ຫຼື ການໃຫ້ການສຶກສາສາທາລະນະທີ່ເໝາະສົມຟຣີ (FAPE) ສຳລັບເດັກນ້ອຍອາຍຸສາມປີ - ຫ້າປີ; ຫຼື
2. ປະຕິເສດການລິເລີ່ມ ຫຼື ການປ່ຽນແປງການກຳນົດ, ການປະເມີນ ຫຼື ການຈັດວາງການສຶກສາຂອງລູກຂອງທ່ານ ຫຼື ການໃຫ້ການບໍລິການຊ່ວຍເຫຼືອແຕ່ຫົວທີສຳລັບເດັກນ້ອຍຕັ້ງແຕ່ເກີດເຖິງອາຍຸສາມປີ ຫຼື ການໃຫ້ FAPE ສຳລັບເດັກນ້ອຍອາຍຸສາມປີ - ຫ້າປີ.

**ໂຄງການຕ້ອງໃຫ້ແຈ້ງການທີ່ເປັນລາຍລັກອັກສອນລ່ວງໜ້າແກ່ທ່ານໃນເວລາໃດ?**

ນອກເໜືອຈາກການເປັນຜູ້ເຂົ້າຮ່ວມທີ່ຈຳເປັນໃນການຕັດສິນໃຈ, ທ່ານມີສິດໃນການໄດ້ຮັບແຈ້ງການຈາກໂຄງການເປັນລາຍລັກອັກສອນກ່ຽວກັບການຕັດສິນໃຈທີ່ສຳຄັນທີ່ສົ່ງຜົນກະທົບຕໍ່ການບໍລິການ EI/ECSE ຂອງລູກທ່ານໃນເວລາທີ່ເໝາະສົມກ່ອນທີ່ຈະມີການຕັດສິນໃຈເຫຼົ່ານັ້ນ. ສິ່ງນີ້ລວມເຖິງການຕັດສິນໃຈກ່ຽວກັບ:

- ການລະບຸວ່າລູກຂອງທ່ານເປັນເດັກພິການ ຫຼື ການປ່ຽນສິດຂອງລູກທ່ານຈາກການພິການໜຶ່ງເປັນການພິການອື່ນ;
- ການປະເມີນຜົນ ຫຼື ການປະເມີນຜົນລູກຂອງທ່ານຄືນ;
- ສຳລັບ EI, ໃຫ້ການບໍລິການການຊ່ວຍເຫຼືອແຕ່ຫົວທີແກ່ລູກຂອງທ່ານ ຫຼື ປ່ຽນອົງປະກອບຂອງການບໍລິການ EI ຂອງລູກທ່ານ;
- ສຳລັບ ECSE, ໃຫ້ການສຶກສາຂອງລັດທີ່ເໝາະສົມແບບບໍ່ເສຍຄ່າໃຊ້ຈ່າຍໃຫ້ແກ່ລູກຂອງທ່ານ ຫຼື ປ່ຽນອົງປະກອບຂອງການສຶກສາຂອງລັດທີ່ເໝາະສົມແບບບໍ່ເສຍຄ່າໃຊ້ຈ່າຍຂອງລູກທ່ານ;
- ພັດທະນາ IFSP ສຳລັບລູກຂອງທ່ານ ຫຼື ປ່ຽນແປງ IFSP ຂອງລູກທ່ານ; **ຫຼື**,
- ຈັດລູກຂອງທ່ານເຂົ້າໃນການບໍລິການ EI/ECSE ຫຼື ປ່ຽນແປງໃນເວລາທີ່ລູກຂອງທ່ານໄດ້ຮັບການບໍລິການ EI/ECSE.

ທ່ານຍັງມີສິດໄດ້ຮັບແຈ້ງການເປັນລາຍລັກອັກສອນລ່ວງໜ້າຈາກໂຄງການໃນເວລາທີ່ໂຄງການປະຕິເສດຄຳຮ້ອງຂອງທ່ານໃນການດຳເນີນການເຫຼົ່ານີ້.

**ແຈ້ງການເປັນລາຍລັກອັກສອນຕ້ອງມີຂໍ້ມູນອັນໃດແດ່?**

ແຈ້ງການເປັນລາຍລັກອັກສອນລ່ວງໜ້າຕ້ອງລວມມີ:

- ການດຳເນີນການທີ່ໂຄງການຈະຂໍ ຫຼື ປະຕິເສດການດຳເນີນການ:
- ເຫດຜົນທີ່ໂຄງການຈະຂໍ ຫຼື ປະຕິເສດການດຳເນີນການ:
- ຄຳອະທິບາຍກ່ຽວກັບທາງເລືອກອື່ນໆທີ່ໄດ້ຮັບການພິຈາລະນາ ແລະ ເຫດຜົນທີ່ທາງເລືອກເຫຼົ່ານັ້ນຖືກປະຕິເສດ;
- ຄຳອະທິບາຍກ່ຽວກັບແຕ່ລະຂັ້ນຕອນຂອງການປະເມີນ, ການທົບສອບ, ບັນທຶກ ຫຼື ລາຍງານນຳໃຊ້ເປັນພື້ນຖານສຳລັບການດຳເນີນການທີ່ໄດ້ສະເໜີ ຫຼື ປະຕິເສດ;
- ຄຳອະທິບາຍກ່ຽວກັບປັດໃຈອື່ນໆທີ່ກ່ຽວຂ້ອງກັບການດຳເນີນການທີ່ໄດສະເໜີຂໍ ຫຼື ປະຕິເສດ;
- ຖະແຫຼງການກ່ຽວກັບຂັ້ນຕອນການຮ້ອງທຸກ, ລວມເຖິງຄຳອະທິບາຍກ່ຽວກັບວິທີການຍື່ນຄຳຮ້ອງທຸກ ແລະ ໄລຍະເວລາພາຍໃຕ້ຂັ້ນຕອນເຫຼົ່ານັ້ນ;
- ສຳເນົາຂອງ*ແຈ້ງການນີ້ກ່ຽວກັບປຶ້ມຄູ່ມືມາດຕະການປ້ອງກັນ* ຫຼື ວິທີການທີ່ທ່ານສາມາດຮັບເອົາເອກະສານສະບັບສຳເນົາ; **ແລະ**,
- ແຫຼ່ງຂໍ້ມູນສຳລັບທ່ານເພື່ອຕິດຕໍ່ຂໍຄວາມຊ່ວຍເຫຼືອໃນການທຳຄວາມເຂົ້າໃຈກ່ຽວກັບມາດຕະການປ້ອງກັນເຫຼົ່ານີ້.

ຕ້ອງມີແຈ້ງການເປັນລາຍລັກອັກສອນລ່ວງໜ້າໃຫ້ເປັນພາສາທ້ອງຖິ່ນຂອງທ່ານ, ເວັ້ນເສຍແຕ່ວ່າມັນຊັດເຈນວ່າບໍ່ສາມາດເຮັດໄດ້. ແຈ້ງການນີ້ຕ້ອງເປັນລາຍລັກອັກສອນໃນພາສາທີ່ສາມາດເຂົ້າໃຈໄດ້ຕໍ່ສາທາລະນະ.

ຖ້າພາສາແມ່ຂອງທ່ານ ຫຼື ເປັນວິທີການສື່ສານອື່ນບໍ່ມີເປັນພາສາຂຽນ, ໂຄງການຕ້ອງດຳເນີນຂັ້ນຕອນຕ່າງໆເພື່ອໃຫ້ແນ່ໃຈວ່າ:

- ແຈ້ງການໄດ້ຮັບການແປໃຫ້ຟັງປາກເປົ່າ ຫຼື ໂດຍວິທີການອື່ນທີ່ເປັນພາສາແມ່ຂອງທ່ານ ຫຼື ວິທີການສື່ສານອື່ນ;
- ທ່ານເຂົ້າໃຈເນື້ອໃນຂອງແຈ້ງການ: **<u>ແລະ,</u>**
- ມີຫຼັກຖານເປັນລາຍລັກອັກສອນທີ່ໄດ້ບັນລຸໄດ້ຕາມຂໍ້ກຳນົດທີ່ຕ້ອງການເຫຼົ່ານີ້.

*ພາສາແມ່,* ເມື່ອໃຊ້ກັບບຸກຄົນຜູ້ທີ່ມີຄວາມຮູ້ພາສາອັງກິດຈຳກັດມີຄວາມໝາຍດັ່ງຕໍ່ໄປນີ້:

1. ພາສາທີ່ບຸກຄົນນັ້ນໃຊ້ເປັນປົກກະຕິ ຫຼື ໃນກໍລະນີທີ່ເປັນເດັກນ້ອຍແມ່ນພາສາທີ່ພໍ່ແມ່ຂອງເດັກນ້ອຍໃຊ້ເປັນປົກກະຕິ;
2. ຢູ່ໃນການຕິດຕໍ່ທຸກຢ່າງກັບເດັກນ້ອຍ (ລວມທັງການປະເມີນຜົນຂອງເດັກ), ພາສາທີ່ເດັກນ້ອຍນັ້ນໃຊ້ເປັນປົກກະຕິຢູ່ໃນບ້ານ ຫຼື ຢູ່ໃນສະພາບການຮຽນຮູ້.

ສຳລັບຄົນຜູ້ທີ່ຫູໜວກ ຫຼື ຕາບອດ ຫຼື ສຳລັບຄົນຜູ້ທີ່ບໍ່ມີພາສາຂຽນ, ວິທີການສື່ສານແມ່ນສິ່ງທີ່ບຸກຄົນໃຊ້ເປັນປົກກະຕິ (ເຊັ່ນ: ພາສາມື, ຕົວໜັງສືນູນ ຫຼື ການສື່ສານປາກເປົ່າ).

**ຂ້ອຍຈະສາມາດຂໍເບິ່ງແຈ້ງການທາງອີເມວໄດ້ບໍ?**

ຖ້າໂຄງການ EI/ECSE ຂອງທ່ານສະເໜີໃຫ້ພໍ່ແມ່ມີທາງເລືອກໃນການຮັບເອກະສານໂດຍທາງອີເມວ, ທ່ານອາດຈະເລືອກຮັບເອົາຂໍ້ມູນຕໍ່ໄປນີ້ໂດຍທາງອີເມວໄດ້ຄື:

1. ແຈ້ງການເປັນລາຍລັກອັກສອນລ່ວງໜ້າ;
2. ແຈ້ງການມາດຕະການປ້ອງກັນນີ້ **<u>ແລະ,</u>**
3. ແຈ້ງການກ່ຽວຂ້ອງກັບການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ.

## ການປະເມີນຜົນ ແລະ ການປະເມີນຜົນຄືນໃໝ່

**ຖ້າຫາກລູກຂອງຂ້ອຍໄດ້ຮັບການບໍລິການ EI, ລູກຂອງຂ້ອຍຈຳເປັນຕ້ອງໄດ້ຖືກປະເມີນເພື່ອໃຫ້ມີສິດໄດ້ຮັບການບໍລິການ ECSE ບໍ?**

ແມ່ນ. ຖ້າຫາກລູກຂອງທ່ານໄດ້ຮັບການບໍລິການ EI, ລູກຂອງທ່ານຈຳເປັນຕ້ອງໄດ້ຖືກປະເມີນເພື່ອໃຫ້ມີສິດໃນ ECSE ກ່ອນທີ່ຈະຮອດອາຍຸສາມປີ. ທີມ IFSP ຕ້ອງທົບທວນຂໍ້ມູນການປະເມີນຜົນທີ່ມີຢູ່ ແລະ ຕັດສິນໃຈວ່າຂໍ້ມູນເພີ່ມເຕີມຈຳເປັນຫຼືບໍ່ຕໍ່ການກຳນົດວ່າລູກຂອງທ່ານມີສິດຕໍ່ກັບການບໍລິການ ECSE ຫຼືບໍ່.

**ຖ້າຫາກລູກຂອງຂ້ອຍໄດ້ຮັບການບໍລິການ EI, ລູກຂອງຂ້ອຍຈຳເປັນຕ້ອງໄດ້ຖືກປະເມີນຄືນໃໝ່ບໍເພື່ອໃຫ້ມີສິດໄດ້ຮັບການບໍລິການດ້ານການສຶກສາພິເສດໃນໂຮຮຽນ?**

ຖ້າຫາກລູກຂອງທ່ານໄດ້ຮັບການລະບຸໂດຍ ECSE ວ່າເປັນເດັກພິການ, ລູກຂອງທ່ານຈະສືບຕໍ່ມີສິດສຳລັບການບໍລິການດ້ານການສຶກສາພິເສດໃນໂຮຮຽນ. ເຂດໂຮງຮຽນອາດຈະ, ແຕ່ບໍ່ກຳນົດໃຫ້ດຳເນີນການປະເມີນຜົນຄືນໃໝ່ເພື່ອພິຈາລະນາຄືນກ່ຽວກັບການມີສິດໄດ້ຮັບ.

ທີມ IFSP ຕ້ອງທົບທວນຂໍ້ມູນການປະເມີນຜົນທີ່ມີຢູ່ ແລະ ຕັດສິນໃຈວ່າຂໍ້ມູນເພີ່ມເຕີມຈຳເປັນຫຼືບໍ່ຕໍ່ການກຳນົດວ່າລູກຂອງທ່ານມີສິດຕໍ່ກັບການສຶກສາພິເສດພາຍໃຕ້ໝວດໝູ່ໃດໜຶ່ງເຫຼົ່ານີ້ຫຼືບໍ່.

ຖ້າຫາກທີມບໍ່ໄດ້ສົງໄສວ່າມີຄວາມພິການປະເພດໃດປະເພດໜຶ່ງ **<u>ຫຼື</u>** ຕັດສິນວ່າບໍ່ຕ້ອງການຂໍ້ມູນເພີ່ມເຕີມເພື່ອກຳນົດວ່າລູກຂອງທ່ານສືບຕໍ່ມີສິດໄດ້ຮັບການສຶກສາພິເສດຫຼືບໍ່ນັ້ນ, ໜ່ວຍງານຂອງລັດຕ້ອງແຈ້ງທ່ານກ່ຽວກັບຄຳຕັດສິນນັ້ນ ແລະ ເຫດຜົນ. ທ່ານຍັງມີສິດໃນການຂໍການປະເມີນຜົນເພື່ອກຳນົດວ່າລູກຂອງທ່ານຍັງສືບຕໍ່ມີສິດຫຼືບໍ່.

ໜ່ວຍງານຂອງລັດບໍ່ຈໍາເປັນຕ້ອງເຮັດການປະເມີນລູກຂອງທ່ານ, ເວັ້ນເສຍແຕ່ວ່າທ່ານຮ້ອງຂໍມັນ.

**ຖ້າຫາກລູກຂອງຂ້ອຍຢູ່ໃນໂຄງການ ECSE, ລູກຂອງຂ້ອຍຈະຖືກປະເມີນຄືນເລື້ອຍໆປານໃດ?**

ລູກຂອງທ່ານຈະບໍ່ຖືກປະເມີນຜົນຄືນເກີນກວ່າໜຶ່ງຄັ້ງຕໍ່ປີ, ເວັ້ນເສຍແຕ່ວ່າທ່ານ ແລະ ໜ່ວຍງານຂອງລັດເຫັນດີຮ່ວມກັນ. ສໍາລັບ ECSE ແລະ ເດັກທີ່ຢູ່ໃນໂຮງຮຽນ, ບາງຄົນມາຈາກການປະເມີນຄືນ ຫຼື ການພິຈາລະນາກ່ຽວກັບການປະເມີນຄືນໃໝ່, ປົກກະຕິເກີດຂຶ້ນທຸກໆສາມປີ, ແຕ່ອາດຈະເກີດຂຶ້ນຖີ່ກວ່ານັ້ນ.

## ການປະເມີນຜົນທາງການສຶກສາເອກະລາດ-ECSE ເທົ່ານັ້ນ

**ການປະເມີນຜົນທາງການສຶກສາເອກະລາດແມ່ນຫຍັງ?**

ການປະເມີນຜົນທາງການສຶກສາເອກະລາດ (IEE) ແມ່ນການປະເມີນຜົນໂດຍຜູ້ກວດກາທີ່ມີຄຸນສົມບັດ ຜູ້ທີ່ບໍ່ແມ່ນພະນັກງານຂອງໜ່ວຍງານຂອງລັດທີ່ຮັບຜິດຊອບຕໍ່ກັບລູກຂອງທ່ານ. ທ່ານມີສິດຕໍ່ກັບການປະເມີນຜົນທາງການສຶກສາເອກະລາດໂດຍນໍາໃຊ້ຄ່າໃຊ້ຈ່າຍຂອງລັດ, ຖ້າຫາກທ່ານບໍ່ເຫັນດີກັບການປະເມີນຜົນທີ່ໜ່ວຍງານຂອງລັດໄດ້ສະໜອງໃຫ້ແກ່ລູກຂອງທ່ານ. ຄ່າໃຊ້ຈ່າຍຂອງລັດໝາຍເຖິງຄ່າໃຊ້ຈ່າຍທີ່ໜ່ວຍງານຂອງລັດຕ້ອງຈັດແຈງໃຫ້ສໍາລັບການປະເມີນຜົນເພື່ອສະໜອງໃຫ້ແກ່ທ່ານໂດຍທ່ານບໍ່ເສຍຄ່າໃຊ້ຈ່າຍໃດໆ.

ທ່ານມີສິດໄດ້ຮັບການປະເມີນຜົນທາງການສຶກສາເອກະລາດລູກຂອງທ່ານດ້ວຍຄ່າໃຊ້ຈ່າຍຂອງລັດພຽງຄັ້ງດຽວເທົ່ານັ້ນໃນແຕ່ລະຄັ້ງທີ່ໜ່ວຍງານຂອງລັດດໍາເນີນການປະເມີນຜົນລູກຂອງທ່ານທີ່ທ່ານບໍ່ເຫັນດີນໍາ.

**ອັນໃດເປັນມາດຖານສໍາລັບການປະເມີນຜົນທາງການສຶກສາເອກະລາດ?**

ຖ້າການປະເມີນຜົນທາງການສຶກສາເອກະລາດແມ່ນການໃຊ້ຈ່າຍຂອງລັດ, ມາດຖານພາຍໃຕ້ສິ່ງທີ່ການປະເມີນຜົນໄດ້ຮັບມາ, ລວມທັງສະຖານທີ່ຂອງການປະເມີນຜົນ, ຄຸນວຸດທິຂອງຜູ້ປະເມີນຜົນ ແລະ ຄ່າໃຊ້ຈ່າຍແມ່ນຕ້ອງຄືກັນກັບມາດຖານທີ່ໜ່ວຍງານຂອງລັດໃຊ້ ເມື່ອເຂດການສຶກສາລິເລີ່ມເຮັດການປະເມີນຜົນ (ໃນລະດັບທີ່ມາດຖານເຫຼົ່ານັ້ນກົງກັບສິດຂອງທ່ານຕໍ່ການປະເມີນຜົນທາງການສຶກສາເອກະລາດ).

ຍົກເວັ້ນສໍາລັບມາດຖານອະທິບາຍໄວ້ຂ້າງເທິງນັ້ນ, ໜ່ວຍງານຂອງລັດອາດຈະບໍ່ບັງຄັບໃຊ້ເງື່ອນໄຂ ຫຼື ກໍານົດເວລາກ່ຽວກັບການໄດ້ຮັບການປະເມີນຜົນທາງການສຶກສາເອກະລາດມາດ້ວຍຄ່າໃຊ້ຈ່າຍຂອງລັດ.

ຕາມການຮ້ອງຂໍ, ໜ່ວຍງານຂອງລັດຕ້ອງໃຫ້ໂອກາດແກ່ທ່ານເພື່ອສະແດງໃຫ້ເຫັນສະຖານະການສະເພາະທີ່ສົມຄວນໄດ້ຮັບການປະເມີນຜົນການສຶກສາເອກະລາດທີ່ບໍ່ກົງກັບເກນກໍານົດຂອງໜ່ວຍງານ.

**ຂ້ອຍຂໍການປະເມີນຜົນທາງການສຶກສາເອກະລາດໄດ້ແນວໃດ?**

ຖ້າຫາກທ່ານຂໍການປະເມີນຜົນເອກະລາດ, ມັນສໍາຄັນຫຼາຍທີ່ຕ້ອງແຈ້ງໜ່ວຍງານຂອງລັດກ່ຽວກັບຄໍາຮ້ອງຂໍຂອງທ່ານໃຫ້ຊັດເຈນ. ໜ່ວຍງານຂອງລັດອາດຈະຖາມວ່າເປັນຫຍັງທ່ານຈຶ່ງບໍ່ເຫັນດີກັບການປະເມີນຜົນທີ່ພວກເຂົາມີໃຫ້ແກ່ລູກຂອງທ່ານ. ທ່ານອາດຈະໃຫ້ຄໍາອະທິບາຍ, ແຕ່ບໍ່ຈໍາເປັນ.

ຖ້າຫາກທ່ານຂໍການປະເມີນຜົນທາງການສຶກສາເອກະລາດ, ໜ່ວຍງານຂອງລັດຕ້ອງແຈ້ງທ່ານກ່ຽວກັບບ່ອນທີ່ຈະໄດ້ດໍາເນີນການປະເມີນຜົນທາງການສຶກສາເອກະລາດ, ໂດຍບໍ່ມີຄວາມລ່າຊ້າໃດໆ ແລະ ແນະນໍາທ່ານກ່ຽວກັບເກນກໍານົດຂອງໜ່ວຍງານຂອງລັດສໍາລັບການປະເມີນຜົນທາງການສຶກສາເອກະລາດ. ທ່ານບໍ່ຈໍາເປັນຕ້ອງນໍາໃຊ້ຜູ້ປະເມີນຜົນຈາກລາຍຊື່ຂອງໜ່ວຍງານຂອງລັດ.

ຖ້າຫາກທ່ານຂໍການປະເມີນຜົນເອກະລາດ ຫຼື ເງິນທົດແທນຄືນສໍາລັບການປະເມີນຜົນເອກະລາດ, ໜ່ວຍງານຂອງລັດຕ້ອງຕອບກັບຄໍາຮ້ອງຂໍຂອງທ່ານໂດຍບໍ່ມີຄວາມລ່າຊ້າໃດໆ. ໜ່ວຍງານຂອງລັດອາດຈະຂໍການດໍາເນີນການພິຈາລະນາຄະດີເພື່ອສະແດງ□□□□□□□□□□

ເມີນຜົນແມ່ນເໝາະສົມສຳລັບລູກຂອງທ່ານ ຫຼື ເພື່ອຮັບປະກັນການເຂົ້າເຖິງການປະເມີນຜົນທີ່ເປັນອິດສະລະໂດຍບໍ່ເສຍຄ່າໃຊ້ຈ່າຍໃດໆ.

ຖ້າຫາກໜ່ວຍງານຂອງລັດເລີ່ມການພິຈາລະນາຄະດີຂະບວນການຕາມສິດທີ່ຄວນຈະໄດ້ຮັບ ແລະ ຄຳຕັດສິນສຸດທ້າຍແມ່ນວ່າການປະເມີນຜົນຂອງໜ່ວຍງານຂອງລັດເໝາະສົມ, ທ່ານຈະໄດ້ຮັບການປະເມີນຜົນທາງການສຶກສາເອກະລາດໂດຍຊຳລະຄ່າໃຊ້ຈ່າຍເອງ.

### ຈະເກີດອັນໃດຂຶ້ນກັບຜົນໄດ້ຮັບຂອງການປະເມີນຜົນທາງການສຶກສາເອກະລາດ?

ຖ້າຫາກທ່ານໄດ້ຮັບການປະເມີນຜົນທາງການສຶກສາເອກະລາດ, ຜົນຂອງການປະເມີນຕ້ອງໄດ້ຮັບການພິຈາລະນາໂດຍໂຄງການ ECSE ໃນການຕັດສິນໃຈທີ່ກ່ຽວຂ້ອງກັບການສຶກສາຂອງລັດທີ່ເໝາະສົມແບບບໍ່ເສຍຄ່າ. ຜົນຂອງການປະເມີນຜົນອາດຈະຖືກນຳສະເໜີເປັນຫຼັກຖານທີ່ການພິຈາລະນາຄະດີຕາມສິດທີ່ຄວນຈະໄດ້ຮັບ

## ການແກ້ໄຂຂໍ້ຂັດແຍ່ງ

### ຂ້ອຍສາມາດເຮັດຫຍັງໄດ້ແດ່ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບໂຄງການ EI ຫຼື ECSE ຂອງລູກຂ້ອຍ?

ຖ້າຫາກທ່ານກັງວົນກ່ຽວກັບບໍລິການ EI/ECSE ຂອງລູກທ່ານ, ແນະນຳວ່າຂັ້ນທຳອິດໃຫ້ຕິດຕໍ່ຜູ້ປະສານງານບໍລິການລູກຂອງທ່ານ ຫຼື ຜູ້ປະສານງານໂຄງານ EI/ECSE. ມັນຊ່ວຍໃນການຮັບມືກັບຂໍ້ກັງວົນໃນເວລາທີ່ເກີດຂຶ້ນຄັ້ງທຳອິດເພື່ອຂັ້ນຕອນຕ່າງໆຈະຖືກດຳເນີນການໃຫ້ໄວທີ່ສຸດເພື່ອສະໜັບສະໜູນຄວາມສຳພັນການເຮັດວຽກລະຫວ່າງທ່ານ, ພະນັກງານ ແລະ ລູກຂອງທ່ານ. ຖ້າຫາກຂໍ້ກັງວົນຂອງທ່ານບໍ່ໄດ້ຮັບການແກ້ໄຂ, ທ່ານອາດຈະຂໍການໄກ່ເກ່ຍ, ຍື່ນຄຳຮ້ອງທຸກ ຫຼື ຂໍການພິຈາລະນາຄະດີຕາມຂະບວນການຕາມສິດທີ່ຄວນຈະໄດ້ຮັບຜ່ານ ODE.

### ການໄກ່ເກ່ຍແມ່ນຫຍັງ?

ການໄກ່ເກ່ຍແມ່ນການປະຊຸມແບບພິເສດເພື່ອຊ່ວຍທ່ານ ແລະ ໂຄງການ EI/ECSE ຂອງລູກທ່ານໃນການບັນລຸຂໍ້ຕົກລົງກ່ຽວກັບຂໍ້ກັງວົນຂອງທ່ານ. ການໄກ່ເກ່ຍເປັນການສະໝັກໃຈ, ເປັນຄວາມລັບ ແລະ ບໍ່ເປັນທາງການ. ບໍ່ວ່າຈະເປັນທ່ານ ຫຼື ຜູ້ຕາງໜ້າຂອງທ່ານທີ່ອາດຈະຂໍການໄກ່ເກ່ຍ, ແຕ່ທ່ານຕ້ອງເຫັນດີທີ່ຈະລອງການໄກ່ເກ່ຍກ່ອນທີ່ຈະຈັດເວລາການໄກ່ເກ່ຍ. ODE ຮັບຜິດຊອບຕໍ່ກັບຄ່າໃຊ້ຈ່າຍໃນຂັ້ນຕອນການໄກ່ເກ່ຍ.

ບຸກຄົນຜູ້ທີ່ນຳພາການໄກ່ເກ່ຍແມ່ນເອີ້ນວ່າຜູ້ໄກ່ເກ່ຍ. ຜູ້ໄກ່ເກ່ຍແມ່ນຄົນກາງຜູ້ທີ່ໄດ້ຮັບການຝຶກອົບຮົມໃນຍຸດທະສາດເພື່ອຊ່ວຍຄົນໃນການແກ້ໄຂຂໍ້ຂັດແຍ່ງຕໍ່ກັບບັນຫາທີ່ຍຸ້ງຍາກ. ຜູ້ໄກ່ເກ່ຍຕ້ອງບໍ່ມີຜົນປະໂຫຍດສ່ວນຕົວ ຫຼື ອາຊີບທີ່ຂັດກັບຄວາມເປັນກາງຂອງຜູ້ໄກ່ເກ່ຍ. ຖ້າຫາກທ່ານ ຫຼື ໂຄງການຂອງທ່ານເຫັນດີເພື່ອລອງການໄກ່ເກ່ຍ, ທ່ານ ແລະ ໂຄງການຈະເລືອກຜູ້ໄກ່ເກ່ຍຈາກລາຍຊື່ຂອງຜູ້ໄກ່ເກ່ນທີ່ມີຄຸນສົມບັດທີ່ມີໃຫ້ໂດຍ ODE. ຜູ້ໄກ່ເກ່ຍບໍ່ໄດ້ເຮັດວຽກໃຫ້ທ່ານ, ໂຄງການ ຫຼື ODE. (ຜູ້ໄກ່ເກ່ຍຈະບໍ່ຖືວ່າເປັນພະນັກງານຂອງ ODE ພຽງເພາະວ່າ ODE ຈ້າງຜູ້ໄກ່ເກ່ຍໃຫ້ດຳເນີນການໄກ່ເກ່ຍ.)

ການໄກ່ເກ່ຍອາດຈະບໍ່ໄດ້ຖືກນຳໃຊ້ເພື່ອປະຕິເສດ ຫຼື ເຮັດໃຫ້ສິດຂອງທ່ານຫຼ້າຊ້າຕໍ່ການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ ຫຼື ເພື່ອປະຕິເສດສິດອື່ນໃດໜຶ່ງທີ່ທ່ານອາດຈະມີຢູ່ພາຍໃຕ້ IDEA.

ການສົນທະນາກ່ຽວກັບການໄກ່ເກ່ຍແມ່ນເປັນຄວາມລັບ ແລະ ອາດຈະບໍ່ຖືກໃຊ້ເປັນຫຼັກຖານໃນການພິຈາລະນາຄະດີ ຫຼື ໃນສານ.

### ການໄກ່ເກ່ຍມີໃຫ້ເມື່ອໃດ?

ການໄກ່ເກ່ຍມີໃຫ້ຜ່ານ ODE ເພື່ອໃຫ້ທ່ານ ແລະ ໂຄງການ EI/ECSE ແກ້ໄຂຂໍ້ຂັດແຍ່ງພົວພັນກັບເລື່ອງໃດໜຶ່ງພາຍໃຕ້ IDEA, ລວມທັງເລື່ອງທີ່ເກີດຂຶ້ນກ່ອນການຍື່ນຄຳຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ. ການໄກ່ເກ່ຍແມ່ນມີໃຫ້ເພື່ອແກ້ໄຂຂໍ້ຂັດແຍ່ງພາຍໃຕ້ IDEA, ບໍ່ວ່າທ່ານຈະໄດ້ຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາສົມ ຫຼື ໄດ້ຍື່ນການຮ້ອງທຸກກ່ຽວກັບການສຶກສາພິເສດຫຼືບໍ່ກໍຕາມ.

ແຕ່ລະກອງປະຊຸມຢູ່ໃນຂະບວນການໄກ່ເກ່ຍຕ້ອງໄດ້ກຳນົດເວລາໃນຮູບແບບທີ່ທັນກັບສະພາບການ ແລະ ຈັດຂຶ້ນຢູ່ບ່ອນທີ່ສະດວກໃຫ້ກັບທ່ານ ແລະ ໂຄງການ EI/ECSE.

**ຂ້ອຍຂໍການໄກ່ເກ່ຍໄດ້ແນວໃດ?**

ທ່ານອາດຈະຕິດຕໍ່ຫາຜູ້ປະສານງານການໄກ່ເກ່ຍ ODE ໄດ້ທີ່ເບີ (503) 947-5797. ທ່ານຍັງສາມາດນຳໃຊ້ແບບຟອມຂໍການໄກ່ເກ່ຍເຊິ່ງມີໃຫ້ໂດຍ ODE. ເບິ່ງແຫຼ່ງຂໍ້ມູນ.

**ຂ້ອຍຕ້ອງເຫັນດີເຮັດການທົດລອງການໄກ່ເກ່ຍບໍ?**

ບໍ່. ການໄກ່ເກ່ຍແມ່ນເປັນການສະໝັກໃຈ. ODE ສະໜັບສະໜູນການໄກ່ເກ່ຍ, ແຕ່ທ່ານບໍ່ຈຳເປັນຕ້ອງລອງການໄກ່ເກ່ຍກ່ອນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ ຫຼື ການຍື່ນຄຳຮ້ອງທຸກ ຫຼື ເພື່ອນຳໃຊ້ສິດໃດໜຶ່ງໃນປຶ້ມຄູ່ມືນີ້. ຖ້າຫາກທ່ານບໍ່ແນ່ໃຈກ່ຽວກັບການໄກ່ເກ່ຍ, ODE ອາດຈະໃຫ້ໂອກາດແກ່ທ່ານໃນການພົບກັບຄົນກາງຜູ້ທີ່ສາມາດອະທິບາຍຜົນປະໂຫຍດຂອງການໄກ່ເກ່ຍໄດ້.

**ແມ່ນຫຍັງຈະເກີດຂຶ້ນ, ຖ້າຫາກຂໍ້ຕົກລົງໄດ້ຮັບການບັນລຸຜົນໃນການໄກ່ເກ່ຍ?**

ຖ້າທ່ານ ແລະ ໂຄງການ EI/ECSE ແກ້ໄຂຂໍ້ຂັດແຍ້ງຜ່ານການໄກ່ເກ່ຍ, ທັງສອງຝ່າຍຕ້ອງມີຂໍ້ຕົກລົງຜູກພັນທາງກົດໝາຍທີ່ກ່າວເຖິງການແກ້ໄຂ ແລະ ທີ່:

1. ກ່າວວ່າ ທຸກການປຶກສາຫາລືທີ່ເກີດຂຶ້ນໃນລະຫວ່າງຂະບວນການປຶກສາຫາລືຈະຍັງຄົງເປັນຄວາມລັບ ແລະ ອາດຈະບໍ່ຖືກນຳໃຊ້ເປັນຫຼັກຖານຢູ່ໃນການພິຈາລະນາຄະດີຕາມຄວາມເໝາະສົມພາຍຫຼັງ ຫຼື ການຮ້ອງຟ້ອງຕໍ່ສານ; **ແລະ,**
2. ໄດ້ລົງລາຍເຊັນໄວ້ໂດຍທ່ານ ແລະ ຜູ້ຕາງໜ້າຂອງໂຄງການ EI/ECSE ຜູ້ທີ່ມີສິດອຳນາດຈະຮັກສາໂຄງການໄປສູ່ການຕົກລົງກັນ.

ຂໍ້ຕົກລົງການໄກ່ເກ່ຍເປັນລາຍລັກອັກສອນທີ່ມີລາຍເຊັນແລ້ວແມ່ນສາມາດບັງຄັບໃຊ້ໄດ້ຢູ່ໃນສານຂອງລັດໃດໜຶ່ງທີ່ມີສິດອຳນາດພາຍໃຕ້ກົດໝາຍຂອງລັດເພື່ອພິຈາລະນາຄະດີປະເພດນີ້ ຫຼື ຢູ່ໃນສານເຂດຂອງລັດຖະບານກາງ.

**ນອກເໜືອຈາກການໄກ່ເກ່ຍ, ອັນໃດແມ່ນຕົວເລືອກສຳລັບການແກ້ໄຂຂໍ້ຂັດແຍ່ງ EI/ECSE ແລະ ພວກມັນແຕກຕ່າງກັນແນວໃດ?**

ຂໍ້ກຳນົດຂອງ IDEA ມີຂັ້ນຕອນອີກສອງຂັ້ນຕອນສຳລັບການແກ້ໄຂຂໍ້ຂັດແຍ່ງ: ຄຳຮ້ອງທຸກຂອງລັດ, ບາງຄັ້ງເອີ້ນວ່າຄຳຮ້ອງທຸກການສຶກສາພິເສດ ແລະ ການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ. ດັ່ງອະທິບາຍຢູ່ລຸ່ມນີ້, ບຸກຄົນ ຫຼື ໜ່ວຍງານໃດໜຶ່ງອາດຈະຍື່ນຄຳຮ້ອງທຸກຂອງລັດກ່າວຫາວ່າໂຄງການ EI/ECSE, ເຂດໂຮງຮຽນ, ODE ຫຼື ໜ່ວຍງານອື່ນໃດໜຶ່ງຂອງລັດມີການລະເມີດເງື່ອນໄຂກຳນົດໃດໜຶ່ງຂອງ IDEA.

**ການຮ້ອງທຸກທາງການສຶກສາພິເສດແມ່ນຫຍັງ?**

ຄຳຮ້ອງທຸກຂອງລັດແມ່ນເປັນລາຍລັກອັກສອນ, ຖະແຫຼງການທີ່ໄດ້ລົງລາຍເຊັນທີ່ໄດ້ອະທິບາຍການລະເມີດທີ່ອາດຈະເກີດຂຶ້ນໄດ້ຕໍ່ກັບ IDEA ໂດຍໂຄງການ EI/ECSE ຂອງທ່ານ. ໃນນັ້ນ, ທ່ານສາມາດຂໍໃຫ້ ODE ສືບສວນ ແລະ ແກ້ໄຂບັນຫາ.

ການສືບສວນຄຳຮ້ອງທຸກແມ່ນການກວດສອບຂໍ້ກ່າວອ້າງຂອງທ່ານແບບບໍ່ເປັນທາງການ ແລະ ເປັນກາງໂດຍ ODE. ໂດຍບໍ່ມີຄ່າໃຊ້ຈ່າຍໃດໆສຳລັບການປະເມີນຜົນນີ້ ແລະ ບໍ່ຈຳເປັນຕ້ອງມີທະນາຍຄວາມ.

**ໄລຍະເວລາໃນການຍື່ນຄຳຮ້ອງທຸກກັບ ODE ມີຄືແນວໃດ?**

ຄຳຮ້ອງທຸກຕ້ອງກ່ຽວຂ້ອງກັບການລະເມີດພາຍໃນ 12 ເດືອນ ກ່ອນທີ່ທ່ານຍື່ນຄຳຮ້ອງທຸກຂອງທ່ານກັບ ODE.

**ຄຳຮ້ອງທຸກລວມມີຫຍັງແດ່?**

ຄຳຮ້ອງທຸກຕ້ອງລວມມີ:

1. ຄຳໃຫ້ການທີ່ໂຄງການ EI/ECSE, ເຂດໂຮງຮຽນ ຫຼື ໜ່ວຍງານຂອງລັດອື່ນໄດ້ລະເມີດເງື່ອນໄຂກຳນົດຂອງ IDEA ແລະ ກົດລະບຽບຂອງມັນ;
2. ຂໍ້ເທັດຈິງກ່ຽວກັບວ່າ ຄຳໃຫ້ການໄດ້ອີງໃສ່ອັນໃດ;
3. ລາຍເຊັນ ແລະ ຂໍ້ມູນຕິດຕໍ່ສຳລັບຜູ້ຮ້ອງທຸກ (ບຸກຄົນ ຫຼື ໜ່ວຍງານທີ່ຮ້ອງທຸກ); **ແລະ**,
4. ຖ້າການກ່າວຫາການລະເມີດກ່ຽວກັບເດັກສະເພາະຄື:
   (a) ຊື່ຂອງເດັກ ແລະ ທີ່ຢູ່ຂອງບ່ອນຢູ່ອາໄສຂອງເດັກ;
   (b) ຊື່ຂອງໂຄງການ EI/ECSE ທີ່ເດັກກຳລັງເຂົ້າຮຽນຢູ່;
   (c) ໃນກໍລະນີທີ່ເປັນເດັກ ຫຼື ເຍົາວະຊົນທີ່ບໍ່ມີບ້ານຢູ່ ຂໍ້ມູນຕິດຕໍ່ທີ່ມີໃຫ້ສຳລັບເດັກ ແລະ ຊື່ຂອງໂຮງຮຽນ ຫຼື ໂຄງການທີ່ເດັກກຳລັງເຂົ້າຮຽນຢູ່;
   (d) ລາຍລະອຽດລັກສະນະບັນຫາ, ລວມທັງຂໍ້ເທັດຈິງກ່ຽວກັບບັນຫາ; **ແລະ,**
   (e) ການແກ້ໄຂບັນຫາທີ່ໄດ້ສະເໜີໄປໃນລະດັບທີ່ຮູ້ຈັກໄດ້ ແລະ ມີໃຫ້ກັບຝ່າຍທີ່ຍື່ນຄຳຮ້ອງທຸກໃນເວລາທີ່ໄດ້ຍື່ນຄຳຮ້ອງທຸກແລ້ວ.

ທ່ານສາມາດນຳໃຊ້ແບບຟອມການຮ້ອງທຸກ ODE ສຳລັບຂໍ້ມູນນີ້:
http://www.ode.state.or.us/search/page/?id=1219.

ຄຳຮ້ອງທຸກທີ່ຂຽນແລ້ວແມ່ນສົ່ງຫາ:

Deputy Superintendent of Public Instruction
Oregon Department of Education
255 Capitol Street NE
Salem, OR 97310

ສົ່ງເຖິງ: ຝ່າຍບໍລິການນັກສຶກສາ

ຝ່າຍຍື່ນຄຳຮ້ອງທຸກຕ້ອງສົ່ງສຳເນົາຄຳຮ້ອງທຸກສະບັບໜຶ່ງໄປໃຫ້ກັບໂຄງການ EI/ECSE ຫຼື ໜ່ວຍງານອື່ນຂອງລັດທີ່ໃຫ້ບໍລິການເດັກໃນເວລາທີ່ຝ່າຍນັ້ນຍື່ນຄຳຮ້ອງທຸກກັບ ODE.

**ແມ່ນຫຍັງຈະເກີດຂຶ້ນຫຼັງຈາກທີ່ຂ້ອຍສົ່ງຄຳຮ້ອງທຸກການສຶກສາພິເສດແບບລາຍລັກອັກສອນຫາ ODE?**

ODE ຈະຕິດຕໍ່ຫາທ່ານທັນທີ ແລະ ໂຄງການຈະປຶກສາຫາລືກ່ຽວກັບຕົວເລືອກການແກ້ໄຂຄຳຮ້ອງທຸກ, ລວມເຖິງການໄກ່ເກ່ຍ. ODE ຍັງຈະລະບຸວ່າຂໍ້ກ່າວຫາໃດທີ່ຈະກວດສອບ.

**ໄລຍະເວລາຂອງ ODE ມີສຳລັບການແກ້ໄຂຄຳຮ້ອງທຸກມີຄືແນວໃດ?**

ຖ້າຫາກທ່ານຍື່ນຄຳຮ້ອງທຸກປະເພດນີ້ເປັນລາຍລັກອັກສອນ, ODE ຕ້ອງເຮັດສຳເລັດການສືບສວນ ແລະ ສົ່ງຄຳສັ່ງການທີ່ເປັນລາຍລັກອັກສອນພາຍໃນ 60 ວັນ.

ອາດຈະມີການຂະຫຍາຍໄລຍະເວລາສຳລັບກໍລະນີຍົກເວັ້ນທີ່ກ່ຽວຂ້ອງກັບການຮ້ອງທຸກ. ນອກນັ້ນອາດຈະມີການຕໍ່ໄລຍະເວລາ, ຖ້າຫາກພໍ່ແມ່ ແລະ ໂຄງການ EI/ECSE ເຫັນດີດ້ວຍຄວາມສະໝັກໃຈວ່າຈະຕໍ່ໄລຍະເວລາເພື່ອລອງໄກ່ເກ່ຍ ຫຼື ການແກ້ໄຂບັນຫາພາຍໃນ.

ພາຍໃນໄລຍະເວລານີ້, ODE ຕ້ອງ:

1. ດຳເນີນການສືບສວນກັບທີ່ເປັນເອກະລາດ, ຖ້າ ODE ກຳນົດວ່າຈຳເປັນຕ້ອງມີການສືບສວນ;

2. ໃຫ້ໂອກາດແກ່ຜູ້ຮ້ອງທຸກສົ່ງຂໍ້ມູນເພີ່ມເຕີມກ່ຽວກັບການກ່າວຫາຢູ່ໃນຄໍາຮ້ອງທຸກໂດຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນກໍ່ໄດ້;
3. ໃຫ້ໂອກາດແກ່ໂຄງການEI/ECSE ຫຼື ໜ່ວຍງານອື່ນຂອງລັດມີຄໍາຕອບຕໍ່ຄໍາຮ້ອງທຸກ, ໃນລະດັບຕໍ່າສຸດໃຫ້ລວມມີ: (a) ຂໍ້ສະເໜີເພື່ອແກ້ໄຂຄໍາຮ້ອງທຸກຕາມທາງເລືອກຂອງໜ່ວຍງານ; **<u>ແລະ</u>** (b) ໂອກາດສໍາລັບພໍ່ແມ່ຜູ້ໄດ້ຍື່ນຄໍາຮ້ອງທຸກ ແລະ ໜ່ວຍງານເພື່ອເຫັນດີທີ່ຈະຮ້ອງເຮັດການໄກ່ເກ່ຍດ້ວຍຄວາມສະໝັກໃຈ;
4. ທົບທວນຂໍ້ມູນທີ່ກ່ຽວຂ້ອງທັງໝົດຄືນ ແລະ ທໍາການກໍານົດເອກະລາດ ເພື່ອເບິ່ງວ່າ ເຂດການສຶກສາ ຫຼື ໜ່ວຍງານຂອງລັດອື່ນໆກໍາລັງລະເມີດເງື່ອນໄຂກໍານົດໃດໜຶ່ງຂອງ IDEA ຢູ່ບໍ່; **<u>ແລະ,</u>**
5. ອອກຄໍາຕັດສິນເປັນລາຍລັກອັກສອນທີ່ກ່າວເຖິງແຕ່ລະການກ່າວຫາຢູ່ໃນຄໍາຮ້ອງທຸກດ້ວຍ (a) ສິ່ງທີ່ພົບເຫັນເປັນຂໍ້ເທັດຈິງ ແລະ ຂໍ້ສະຫຼຸບ; **<u>ແລະ</u>** (b) ເຫດຜົນສໍາລັບຄໍາຕັດສິນສຸດທ້າຍຂອງ ODE.

**ຄໍາສັ່ງເປັນລາຍລັກອັກສອນແມ່ນຫຍັງ?**

ຄໍາສັ່ງເປັນລາຍລັກອັກສອນລວມມີສິ່ງພົບເຫັນເປັນຂໍ້ເທັດຈິງກ່ຽວກັບຂໍ້ກ່າວຫາ, ຂໍ້ສະຫຼຸບ, ການປຶກສາຫາລື ແລະ ການດໍາເນີນການແກ້ໄຂຕາມຄໍາສັ່ງ.

ຄໍາສັ່ງສູງສຸດບໍ່ໄດ້ລະບຸຊື່ຂອງທ່ານ ຫຼື ລູກຂອງທ່ານ. ຄໍາສັ່ງສູງສຸດແມ່ນບັນທຶກສາທາລະນະ. ຄໍາສັ່ງສູງສຸດຂອງການຮ້ອງທຸກແມ່ນພິຈາລະນາວ່າເປັນກໍລະນີທີ່ບໍ່ສາມາດໂຕ້ແຍ້ງໄດ້ພາຍໃຕ້ກົດໝາຍຂອງລັດ.

ຖ້າຫາກທ່ານບໍ່ພໍໃຈກັບຄໍາສັ່ງສູງສຸດ, ທ່ານອາດຈະຍື່ນອຸທອນພາຍໃນ 60 ວັນ ຫາ Marion County Circuit Court (ສານປົກຄອງເຂດມາຣຽນ) ຫຼື Circuit Court (ສານປົກຄອງ) ສໍາລັບເຂດທີ່ທ່ານອາໄສຢູ່.

ຄໍາສັ່ງຄໍາຮ້ອງທຸກບໍ່ໄດ້ປ້ອງກັນພໍ່ແມ່ຈາກການຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມໃນການລະເມີດອັນດຽວກັນ.

**ການດໍາເນີນການແກ້ໄຂຕ້ອງມີສິ່ງໃດແດ່?**

ຢູ່ໃນການແກ້ໄຂຄໍາຮ້ອງທຸກລັດທີ່ ODE ພົບເຫັນຄວາມບໍ່ສໍາເລັດທີ່ຈະໃຫ້ການບໍລິການທີ່ເໝາະສົມ, ODE ຕ້ອງແກ້ໄຂ:

1. ຄວາມຫຼົ້ມເຫຼວທີ່ຈະໃຫ້ການບໍລິການທີ່ເໝາະສົມ, ລວມທັງມາດຕະການດໍາເນີນການແກ້ໄຂໃຫ້ຖືກຕ້ອງເໝາະສົມເພື່ອແກ້ໄຂຄວາມຕ້ອງການຂອງເດັກ; **<u>ແລະ,</u>**
2. ການໃຫ້ບໍລິການທີ່ເໝາະສົມສໍາລັບເດັກພິການທຸກຄົນໃນອະນາຄົດ.

ຄໍາສັ່ງສູງສຸດຕ້ອງລວມມີຂັ້ນຕອນດໍາເນີນການສໍາລັບການຈັດຕັ້ງປະຕິບັດຄໍາຕັດສິນສຸດທ້າຍທີ່ມີປະສິດທິພາບຂອງ ODE, ຖ້າຈໍາເປັນ, ລວມທັງ: (a) ກິດຈະກໍາການຊ່ວຍເຫຼືອດ້ານວິຊາການ; (b) ການເຈລະຈາ; **<u>ແລະ</u>**
(c) ການດໍາເນີນການແກ້ໄຂເພື່ອໃຫ້ບັນລຸຕາມຂໍ້ກໍານົດ.

ໂຄງການ EI/ECSE ອາດຈະຍື່ນຄໍາຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມກ່ຽວກັບເລື່ອງໃດໜຶ່ງທີ່ກ່ຽວຂ້ອງກັບການສະເໜີ ຫຼື ການປະຕິເສດທີ່ຈະລິເລີ່ມ ຫຼື ປ່ຽນແປງການຈໍາແນກ, ການປະເມີນຜົນ ຫຼື ການກໍານົດການສຶກສາຂອງເດັກພິການ ຫຼື ຂໍ້ບັນຍັດຂອງການບໍລິການຊ່ວຍເຫຼືອແຕ່ຫົວທີສໍາລັບເດັກຕັ້ງແຕ່ເກີດເຖິງອາຍຸສາມປີ ຫຼື ໃຫ້ການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE) ສໍາລັບເດັກອາຍຸສາມຫາຫ້າປີ.

ພະນັກງານຂອງ ODE ຕ້ອງແກ້ໄຂຄໍາຮ້ອງທຸກຂອງພະນັກງານ ແລະ ອອກຄໍາສັ່ງສຸດທ້າຍພາຍໃນໄລຍະເວລາ 60 ວັນຕາມປະຕິທິນ, ເວັ້ນເສຍແຕ່ວ່າໄລຍະເວລາແມ່ນໄດ້ຮັບການຕໍ່ຢ່າງເໝາະສົມ.

ເຈົ້າໜ້າທີ່ພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ (ເອີ້ນວ່າ ຜູ້ພິພາກສາກົດໝາຍບໍລິຫານ ຫຼື ALJ) ຕ້ອງດໍາເນີນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ (ຖ້າບໍ່ໄດ້ຮັບການແກ້ໄຂຜ່ານກອງປະຊຸມແກ້ໄຂບັນຫາ ຫຼື ການໄກ່ເກ່ຍ) ແລະ ອອກແຈ້ງການເປັນລາຍລັກອັກສອນພາຍໃນ 45 ວັນຕາມປະຕິທິນຫຼັງຈາກການສິ້ນສຸດໄລຍະການແກ້ໄຂບັນຫາ, ເວັ້ນເສຍແຕ່ວ່າ ALJ ອະນຸຍາດການຕໍ່ເວລາສະເພາະຕາມຄໍາຂໍຂອງທ່ານ ຫຼື ຄໍາຂໍຂອງໂຄງການ.

**ແມ່ນຫຍັງຈະເກີດຂຶ້ນ, ຖ້າຫາກຂ້ອຍຍື່ນຄໍາຮ້ອງທຸກ ແລະ ຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມໃນເວລາດຽວກັນ?**

ຖ້າໄດ້ຮັບຄໍາຮ້ອງທຸກຂອງລັດເປັນລາຍລັກອັກສອນຂອງຄໍາຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ ຫຼື ຄໍາຮ້ອງທຸກທີ່ມີຫຼາຍບັນຫາທີ່ບັນຫາໜຶ່ງ ຫຼື ຫຼາຍບັນຫາແມ່ນສ່ວນຂອງການຮ້ອງຂໍພິຈາລະນາຄະດີດັ່ງກ່າວ, ODE ຕ້ອງຢຸດຄໍາຮ້ອງທຸກໄວ້ກ່ອນ, ຫຼື ພາກສ່ວນໃດໜຶ່ງຂອງຄໍາຮ້ອງທຸກທີ່ກໍາລັງຖືກແກ້ໄຂຢູ່ໃນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ ຈົນກວ່າການພິຈາລະນາຄະດີຈົບສິ້ນໄປ. ບັນຫາໃດໜຶ່ງຢູ່ໃນຄໍາຮ້ອງທຸກທີ່ບໍ່ເປັນສ່ວນໜຶ່ງຂອງການພິຈາລະນາຄະດີຕາມສິດທີ່ສົມຄວນໄດ້ຮັບຕ້ອງໄດ້ແກ້ໄຂດ້ວຍການໃຊ້ຂີດຈໍາກັດເວລາ ແລະ ຂັ້ນຕອນດໍາເນີນການທີ່ໄດ້ອະທິບາຍໄວ້ຂ້າງເທິງ.

ຖ້າມີບັນຫາໜຶ່ງຖືກຍົກຂຶ້ນມາຢູ່ໃນຄໍາຮ້ອງທຸກນັ້ນໄດ້ຖືກຕັດສິນມາກ່ອນຢູ່ໃນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມແລ້ວ ທີ່ພົວພັນກັບຝ່າຍດຽວກັນ (ພໍ່ແມ່ ຫຼື ເຂດການສຶກສາ), ຄໍາຕັດສິນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມກໍາລັງຜູກມັດກັບບັນຫານັ້ນ ODE ຈະແຈ້ງໃຫ້ຜູ້ຮ້ອງທຸກວ່າ ຄໍາຕັດສິນກໍາລັງມີຜົນບັງຄັບໃຊ້ຢູ່.

ຄໍາຮ້ອງທຸກກ່າວຫາຄວາມບໍ່ສໍາເລັດຂອງໂຄງການ EI/ECSE,ເຂດການສຶກສາ ຫຼື ຂອງໜ່ວຍງານອື່ນໆຂອງລັດຕໍ່ການຈັດຕັ້ງປະຕິບັດຄໍາຕັດສິນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຕ້ອງໄດ້ຮັບການແກ້ໄຂໂດຍ ODE.

**ການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມແມ່ນຫຍັງ?**

ການພິຈາລະນາຄະດີຕາມຄວາມເໝາະສົມແມ່ນການດໍາເນີນການກົດໝາຍແບບທາງການກ່ອນທີ່ຜູ້ພິພາກສາກົດໝາຍບໍລິຫານ (ALJ) ເຊິ່ງເປັນຜູ້ຕັດສິນບັນຫາຂໍ້ເທັດຈິງ ແລະ ກົດໝາຍ. ALJ ອອກຄໍາຄິດເຫັນເປັນລາຍລັກອັກສອນ, ການຜູກມັດສຸດທ້າຍ.

**ຂ້ອຍສາມາດຂໍການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມໄດ້ໃນເວລາໃດ?**

ທ່ານອາດຈະຂໍການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມໄດ້, ຖ້າຫາກທ່ານບໍ່ເຫັນດີກັບການລະບຸ, ການປະເມີນ ແລະ ການຈັບຈ້ອນ ຫຼື ມູມມອງອື່ນໆທີ່ກ່ຽວຂ້ອງກັບການບໍລິການ EI ຂອງລູກທ່ານ ແລະ ສໍາລັບ ECSE, ການສຶກສາຂອງລັດທີ່ເໝາະສົມແບບບໍ່ເສຍຄ່າ. ທ່ານອາດຈະຂໍການພິຈາລະນາຄະດີຕາມຄວາມເໝາະສົມແບບ "ເລັ່ງລັດ" ຕາມທີ່ໄດ້ອະທິບາຍໄວ້ໃນ*ຫົວຂໍ້ລະບຽບວິໄນ*.

**ໄລຍະເວລາໃນການຂໍການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມແມ່ນເວລາໃດ?**

ການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມຕ້ອງຖືກຂໍພາຍໃນສອງປີຫຼັງຈາກວັນທີທີ່ທ່ານຮູ້ ຫຼື ຄວນໄດ້ຮັບຮູ້ກ່ຽວກັບການດໍາເນີນການ ຫຼື ການປະປ່ອຍທີ່ເຮັດໃຫ້ເກີດການຮ້ອງຂໍການພິຈາລະນາຄະດີ.

ໄລຍະເວລາສອງປີນີ້ບໍ່ສາມາດໃຊ້ໄດ້, ຖ້າຫາກທ່ານຖືກຫ້າມຈາກການຂໍການພິຈາລະນາຄະດີເນື່ອງຈາກວ່າ:

- ໂຄງການ EI/ECSE ໃຫ້ຂໍ້ມູນທີ່ບໍ່ເປັນຈິງແກ່ທ່ານວ່າພວກເຂົາໄດ້ແກ້ບັນຫາແລ້ວ; **ຫຼື**,
- ໂຄງການ EI/ECSE ບໍ່ໄດ້ໃຫ້ຂໍ້ມູນທີ່ຈໍາເປັນຕ້ອງໃຫ້ແກ່ທ່ານ.

**ຂ້ອຍຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມໄດ້ແນວໃດ?**

ທ່ານ (ຫຼື ທະນາຍຄວາມຂອງທ່ານ, ຖ້າຫາກທ່ານມີຜູ້ຕາງໜ້າ) ຫຼື ໂຄງການ EI/ECSE (ຫຼື ທະນາຍຄວາມຂອງໂຄງການ) ຕ້ອງສົ່ງຄໍາຮ້ອງເປັນລາຍລັກອັກສອນສໍາລັບການພິຈາລະນາຄະດີໃຫ້ແກ່ ODE ແລະ ພາກສ່ວນອື່ນ. ຄໍາຮ້ອງຂໍການພິຈາລະນາຄະດີຂອງທ່ານຕ້ອງລວມມີ:

- ຊື່ ແລະ ທີ່ຢູ່ຂອງທ່ານ (ຫຼື ຂໍ້ມູນຕິດຕໍ່, ຖ້າຫາກບໍ່ມີທີ່ຢູ່) ແລະ ຊື່ຂອງໂຄງການ EI/ECSE ຂອງລູກທ່ານ;
- ລາຍລະອຽດລັກສະນະບັນຫາກ່ຽວຂ້ອງກັບຄໍາຂໍການພິຈາລະນາຄະດີ, ລວມທັງຂໍ້ເທັດຈິງສະເພາະ; **ແລະ,**
- ຄໍາແນະນໍາໃດໆທີ່ທ່ານມີໃນການແກ້ໄຂຂໍ້ຂັດແຍ່ງ.

ແບບຟອມຕົວແບບສຳລັບການຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມແມ່ນມີໃຫ້ຈາກ ODE. (ເບິ່ງແຫຼ່ງຂໍ້ມູນຢູ່ທ້າຍປຶ້ມຄູ່ມື.) ທ່ານສາມາດໃຊ້ແບບຟອມຕົວແບບຂອງ ODE ຫຼື ແບບຟອມ ຫຼື ເອກະສານທີ່ເໝາະສົມອື່ນ, ຕາມເທົ່າທີ່ມັນລວມມີຂໍ້ມູນທີ່ຕ້ອງການສຳລັບການຍື່ນຄຳຮ້ອງທຸກສະເໜີຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ.

ທ່ານ ຫຼື ໂຄງການ EI/ECSE ອາດຈະບໍ່ມີການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຈົນກວ່າທ່ານ ຫຼື ໂຄງການ EI/ECSE (ຫຼື ທະນາຍຄວາມຂອງທ່ານ ຫຼື ທະນາຍຄວາມຂອງ ໂຄງການ EI/ECSE) ຍື່ນຄຳສະເໜີຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມທີ່ລວມມີຂໍ້ມູນນີ້.

ບໍ່ມີອັນໃດຢູ່ໃນພາກການຄຸ້ມຄອງລະບຽບການຂອງກົດລະບຽບຂອງລັດພາຍໃຕ້ພາກ B ຂອງ IDEA [34 CFR 300.500 ຮອດ 300.536] ຫ້າມທ່ານຍື່ນຄຳຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມແຍກຕ່າງຫາກຢູ່ໃນການແຍກອອກຈາກຄຳຮ້ອງຂໍຕາມຂະບວນການທີ່ເໝາະສົມໄດ້ຍື່ນໄປແລ້ວ.

**ໜ່ວຍງານຂອງລັດຈະຂໍການໄຕ່ສວນຕາມຂັ້ນຕອນກົດໝາຍເມື່ອໃດ?**

ສຳລັບ ECSE: ໜ່ວຍງານຂອງລັດອາດຈະຂໍການໄຕ່ສວນຕາມຂັ້ນຕອນກົດໝາຍໃນເວລາທີ່ພໍ່ແມ່ປະຕິເສດການຍິນຍອມສຳລັບການປະເມີນຜົນຂັ້ນຕົ້ນ ຫຼື ການປະເມີນຜົນຄືນໃໝ່ ຫຼື ສຳລັບ ECSE, ເພື່ອອະທິບາຍວ່າໜ່ວຍງານຂອງລັດໄດ້ດຳເນີນການປະເມີນທີ່ເໝາະສົມ ຫຼື ໄດ້ສະໜອງການສຶກສາຂອງລັດທີ່ເໝາະສົມໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍ. ໜ່ວຍງານຂອງລັດອາດຈະບໍ່ຮ້ອງຂໍການໄຕ່ສວນຕາມຂັ້ນຕອນກົດໝາຍເພື່ອລົບລ້າງການປະຕິເສດການຍິນຍອມຂອງພໍ່ແມ່ສຳລັບການຊຸບຊ້ອນຂັ້ນຕົ້ນໃນ ECSE ຫຼື ສຳລັບການບໍລິການ EI.

**ຈະເກີດອັນໃດຂຶ້ນຫຼັງຈາກທີ່ໄດ້ຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ?**

ໃນເວລາທີ່ທ່ານຂໍການພິຈາລະນາຄະດີ, ODE ຈະສົ່ງສຳເນົາແຈ້ງການກ່ຽວກັບມາດຕະການປ້ອງກັນນີ້ໃຫ້ແກ່ທ່ານ, ແຈ້ງທ່ານວ່າການໄກ່ເກ່ຍແມ່ນມີໃຫ້ໂດຍບໍ່ເສຍຄ່າໃຊ້ຈ່າຍ ແລະ ແນະນຳທ່ານກ່ຽວກັບບໍລິການທາງກົດໝາຍໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ຄ່າໃຊ້ຈ່າຍຕໍ່າ. ຫ້ອງການກ່ຽວກັບການພິຈາລະນາຄະດີດ້ານບໍລິຫານຈະແຕ່ງຕັ້ງ ALJ ເພື່ອດຳເນີນການພິຈາລະນາຄະດີ. ALJ ຈະຕິດຕໍ່ຫາທ່ານເພື່ອຈັດການປະຊຸມກ່ອນການດຳເນີນການພິຈາລະນາຄະດີ.

ຖ້າຫາກໂຄງການ EI/ECSE ຍື່ນຄຳຮ້ອງຂໍການພິຈາລະນາຄະດີ, ທ່ານມີເວລາ 15 ວັນຕັ້ງແຕ່ວັນທີ່ໄດ້ຮັບຄຳຮ້ອງຂໍນີ້ເພື່ອແຈ້ງ ALJ ກ່ຽວກັບບັນຫາຕ່າງໆໃນແຈ້ງການນີ້. ໃນທຳນອງດຽວກັນ, ຖ້າຫາກທ່ານຍື່ນຄຳຮ້ອງຂໍການພິຈາລະນາຄະດີ, ໂຄງການມີເວລາ 15 ວັນເພື່ອແຈ້ງ ALJ ກ່ຽວກັບບັນຫາຕ່າງໆໃນແຈ້ງການຂອງທ່ານ.
ALJ ມີເວລາ 5 ວັນເພື່ອຕັດສິນວ່າແຈ້ງການນີ້ປະຕິບັດຕາມກົດລະບຽບ ແລະ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ແກ່ທ່ານ ແລະ ໂຄງການທັນທີກ່ຽວກັບຄຳຕັດສິນນີ້.

ທ່ານອາດຈະແກ້ໄຂບັນຫາດ້ວຍຄຳຮ້ອງການໄຕ່ສວນຂອງທ່ານໂດຍການສົ່ງຄຳຮ້ອງອີກຄັ້ງ, ຖ້າຫາກ:

- EI/ECSE ເຫັນດີເປັນລາຍລັກອັກສອນ; **<u>ຫຼື</u>**,
- ALJ ເຫັນດີ ແລະ ມັນເປັນເວລາຫຼາຍກວ່າ 5 ວັນກ່ອນການຂໍການພິຈາລະນາຄະດີຕາມຂະບວນການ.

ການສົ່ງຄຳຮ້ອງຂໍການພິຈາລະນາຄະດີອີກຄັ້ງຈະເລີ່ມນັບໄລຍະເວລາໃໝ່ສຳລັບການເຮັດສຳເລັດການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ.

ພາກສ່ວນທີ່ຂໍການພິຈາລະນາຄະດີອາດຈະຕ້ອງບໍ່ໄດ້ຍົກບັນຫາໃດໆໃນການດຳເນີນຄະດີທີ່ບໍ່ໄດ້ລະບຸໃນຄຳຮ້ອງຂໍການດຳເນີນຄະດີ, ເວັ້ນເສຍແຕ່ວ່າພາກສ່ວນອື່ນຈະຍິນຍອມເປັນຢ່າງອື່ນ.

ຖ້າຫາກໂຄງການ EI/ECSE ຍັງບໍ່ໄດ້ໃຫ້ແຈ້ງການທີ່ເປັນລາຍລັກອັກສອນແກ່ທ່ານກ່ຽວກັບການດຳເນີນການ EI/ECSE ທີ່ກ່ຽວຂ້ອງກັບຄຳຮ້ອງຂໍການພິຈາລະນາຄະດີຂອງທ່ານ, ໂຄງການ EI/ECSE ມີເວລາ 10 ວັນຕັ້ງແຕ່ວັນທີ່ໄດ້ຮັບຄຳຮ້ອງການພິຈາລະນາຄະດີເພື່ອສົ່ງແຈ້ງການນີ້ໃຫ້ທ່ານ.

1. ຄຳອະທິບາຍວ່າ ເປັນຫຍັງໂຄງການ EI/ECSE ຈຶ່ງໄດ້ສະເໜີ ຫຼື ປະຕິເສດທີ່ຈະດຳເນີນມາດຕະການທີ່ຍົກຂຶ້ນມາຢູ່ໃນຄຳຮ້ອງທຸກຕາມຂະບວນການທີ່ເໝາະສົມ;

2. ຄໍາອະທິບາຍທາງເລືອກອື່ນໃດໜຶ່ງທີ່ທີມງານແຜນບໍລິການຄອບຄົວສ່ວນບຸກຄົນຂອງລູກຂອງທ່ານ (individualized family service plan, IFSP) ໄດ້ຖືກພິຈາລະນາ ແລະ ເຫດຜົນຕ່າງໆວ່າເປັນຫຍັງທາງເລືອກເຫຼົ່ານັ້ນຈຶ່ງຖືກປະຕິເສດ;
3. ຄໍາອະທິບາຍຂັ້ນຕອນດໍາເນີນການປະເມີນຜົນ, ການປະເມີນ, ການບັນທຶກ, ຫຼື ການລາຍງານແຕ່ລະອັນທີ່ໂຄງການ EI/ECSE ໃຊ້ເປັນພື້ນຖານສໍາລັບມາດຕະການດໍາເນີນການທີ່ໄດ້ສະເໜີ ຫຼື ປະຕິເສດ; **ແລະ,**
4. ຄໍາອະທິບາຍປັດໃຈອື່ນທີ່ກ່ຽວຂ້ອງກັບມາດຕະການດໍາເນີນການທີ່ໄດ້ສະເໜີ ຫຼື ປະຕິເສດຂອງໂຄງການ EI/ECSE.

ການໃຫ້ຂໍ້ມູນຢູ່ໃນຂໍ້ທີ 1-4 ຂ້າງເທິງບໍ່ໄດ້ຫ້າມໂຄງການ EI/ECSE ໃນການກ່າວວ່າຄໍາຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຂອງທ່ານບໍ່ພຽງພໍ. ບໍ່ດັ່ງນັ້ນ, ໂຄງການມີເວລາ 10 ວັນຕັ້ງແຕ່ວັນທີ່ໄດ້ຮັບຄໍາຮ້ອງຂໍການພິຈາລະນາຄະດີຂອງທ່ານເພື່ອສົ່ງໜັງສືຕອບໃຫ້ແກ່ທ່ານທີ່ແກ້ໄຂບັນຫາໃນຄໍາຮ້ອງຂໍການພິຈາລະນາຄະດີໂດຍສະເພາະ.

ທ່ານ ແລະ ສະມາຊິກທີມ IEP ຂອງທ່ານຕ້ອງໃຫ້ບັນລຸ "ກອງປະຊຸມແກ້ໄຂບັນຫາ" ພາຍໃນ 15 ວັນຂອງຄໍາຮ້ອງຂໍການພິຈາລະນາຄະດີ.

**ພາກການດໍາເນີນການແກ້ໄຂແມ່ນຫຍັງ?**

ກອງປະຊຸມແກ້ໄຂແມ່ນການປະຊຸມເພື່ອແກ້ໄຂບັນຫາກ່ຽວກັບໂຄງການ EI/ECSE ຂອງລູກທ່ານ. ກອງປະຊຸມຕ້ອງມີທ່ານ, ສະມາຊິກຂອງທີມ IFSP ຜູ້ທີ່ຮູ້ກ່ຽວກັບບັນຫາ ແລະ ຜູ້ຕາງໜ້າຂອງ EI/ECSE ຜູ້ທີ່ມີອໍານາດໃນການຕັດສິນໃຈສໍາລັບໂຄງການ. ໂຄງການອາດຈະບໍ່ມີທະນາຍຄວາມ, ເວັ້ນແຕ່ທ່ານຈະເອົາທະນາຍຄວາມມານໍາ. ກອງປະຊຸມແກ້ໄຂບັນຫາແມ່ນຈໍາເປັນ, ເວັ້ນເສຍແຕ່ວ່າທ່ານ ແລະ ໂຄງການເຫັນດີເປັນລາຍລັກອັກສອນໃນການຍົກເລີກກອງປະຊຸມນີ້ ຫຼື ທ່ານ ແລະ ໂຄງການເຫັນດີລອງການໄກ່ເກ່ຍແທນ.

ຖ້າຫາກທ່ານ ຫຼື ໂຄງການບັນລຸຂໍ້ຕົກລົງໃນກອງປະຊຸມແກ້ໄຂບັນຫາ, ທ່ານ ແລະ ໂຄງການຈະເຊັນຂໍ້ຕົກລົງເປັນລາຍລັກອັກສອນທີ່ລະບຸຂໍ້ຕົກລົງທັງໝົດທີ່ບັນລຸໄດ້. ເຊັ່ນ:ຂໍ້ຕົກລົງການໄກ່ເກ່ຍ, ຂໍ້ຕົກລົງນີ້ແມ່ນມີຜົນຜູກມັດທາງກົດໝາຍ ແລະ ບັງຄັບໃຊ້ໃນສານ. ທ່ານ ຫຼື ໂຄງການອາດຈະຍົກເລີກຂໍ້ຕົກລົງນີ້ໂດຍການສົ່ງຖະແຫຼງການເປັນລາຍລັກອັກສອນໃຫ້ກັບພາກສ່ວນອື່ນພາຍໃນສາມວັນທາງລັດຖະການທີ່ໄດ້ລົງລາຍເຊັນ.

**ໄລຍະເວລາຂອງການພິຈາລະນາຄະດີມີແນວໃດ?**

ຖ້າຫາກບັນຫາບໍ່ໄດ້ຮັບການແກ້ໄຂໄດ້ຕາມຄວາມພຶງພໍໃຈຂອງທ່ານພາຍໃນໄລຍະເວລາການແກ້ໄຂບັນຫາ, ໄລຍະເວລາສໍາລັບການພິຈາລະນາຄະດີຂະບວນການທີ່ເໝາະສົມໄດ້ເລີ່ມຕົ້ນຂຶ້ນ. ການພິຈາລະນາຄະດີ ແລະ ຄໍາສັ່ງສຸດທ້າຍຕ້ອງສໍາເລັດພາຍໃນ 45 ວັນຕັ້ງແຕ່ການສິ້ນສຸດຂອງໄລຍະການແກ້ໄຂບັນຫາ. ALJ ອາດຈະໃຫ້ເວລາຫຼາຍຂຶ້ນ, ຖ້າຫາກທ່ານ ຫຼື ໂຄງການຂໍເວລາເພີ່ມເຕີມ.

**ໄລຍະການແກ້ໄຂບັນຫາ 30 ວັນສາມາດຫຍໍ້ລົງ ຫຼື ເພີ່ມໄດ້ໃນກໍລະນີໃດແດ່?**

ຍົກເວັ້ນໃນບ່ອນທີ່ທ່ານ ແລະ ໂຄງການ EI/ECSE ໄດ້ເຫັນດີຮ່ວມກັນບໍ່ຈັດຂະບວນການແກ້ໄຂບັນຫາ ຫຼື ເພື່ອມານໍາໃຊ້ການໄກ່ເກ່ຍ, ຄວາມຫຼົ້ມເຫຼວຂອງທ່ານທີ່ບໍ່ເຂົ້າຮ່ວມກອງປະຊຸມແກ້ໄຂບັນຫາຈະແກ່ຍາວກໍານົດເວລາສໍາລັບຂະບວນການແກ້ໄຂບັນຫາ ແລະ ການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຈົນກວ່າທ່ານເຫັນດີເຂົ້າຮ່ວມກອງປະຊຸມແກ້ໄຂບັນຫາ.

ຖ້າຫຼັງຈາກໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນ ແລະ ໄດ້ເຮັດເອກະສານຄວາມພະຍາຍາມດັ່ງກ່າວໄວ້ແລ້ວ, ໂຄງການ EI/ECSE ບໍ່ສາມາດຮັບການເຂົ້າຮ່ວມກອງປະຊຸມແກ້ໄຂບັນຫາຂອງທ່ານໄດ້, ໃນເວລາໝົດໄລຍະການແກ້ໄຂບັນຫາ 30 ວັນຕາມປະຕິທິນນັ້ນ, ໂຄງການ EI/ECSE ອາດຈະຂໍໃຫ້ ALJ ຍົກເລີກຄໍາຮ້ອງຂໍສໍາລັບການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມຂອງທ່ານໄປ. ເອກະສານຄວາມພະຍາຍາມຂອງເຂດຕ້ອງມີບັນທຶກຄວາມພະຍາຍາມເພື່ອຈັດເວລາ ແລະ ສະຖານທີ່ຕາມການຕົກລົງຮ່ວມກັນເຊັ່ນ:

1. ລາຍລະອຽດບັນທຶກການໂທລະສັບທີ່ໄດ້ໂທ ຫຼື ໄດ້ພະຍາຍາມໂທ ແລະ ຜົນໄດ້ຮັບການໂທເຫຼົ່ານັ້ນ;

2. ສຳເນົາຂອງໜັງສືພົວພັນທີ່ໄດ້ສົ່ງຫາທ່ານ ແລະ ການຕອບຮັບໃດໜຶ່ງທີ່ໄດ້ຮັບມາ; **ແລະ,**
3. ລາຍລະອຽດບັນທຶກການໄປທີ່ບ້ານ ຫຼື ບ່ອນເຮັດວຽກຂອງທ່ານ ແລະ ຜົນໄດ້ຮັບຂອງການໄປຫາເຫຼົ່ານັ້ນ.

ຖ້າໂຄງການ EI/ECSE ບໍ່ສາມາດຈັດກອງປະຊຸມແກ້ໄຂບັນຫາໄດ້ພາຍໃນ 15 ວັນຕາມປະຕິທິນທີ່ໄດ້ຮັບແຈ້ງການຄຳຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຂອງທ່ານ **ຫຼື** ບໍ່ສາມາດທີ່ຈະເຂົ້າຮ່ວມໃນກອງປະຊຸມແກ້ໄຂບັນຫາ, ທ່ານອາດຈະຂໍໃຫ້ ALJ ອອກຄຳສັ່ງວ່າໃຫ້ກຳນົດເວລາການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມເລີ່ມຕົ້ນໄດ້.

ຖ້າທ່ານ ແລະ ໂຄງການ EI/ECSE ເຫັນດີເປັນລາຍລັກອັກສອນຈະບໍ່ຈັດກອງປະຊຸມແກ້ໄຂບັນຫາ, ຈາກນັ້ນ ກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມເລີ່ມຕົ້ນໃນວັນຕໍ່ມາ.

ຫຼັງຈາກການເລີ່ມຕົ້ນການໄກ່ເກ່ຍ ຫຼື ກອງປະຊຸມແກ້ໄຂບັນຫາ ແລະ ກ່ອນໝົດໄລຍະເວລາແກ້ໄຂບັນຫາ 30 ວັນຕາມປະຕິທິນ, ຖ້າທ່ານ ແລະ ໂຄງການ EI/ECSE ເຫັນດີເປັນລາຍລັກອັກສອນວ່າ ບໍ່ມີການຕົກລົງໄດ້, ຈາກນັ້ນ ກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມເລີ່ມຕົ້ນໃນວັນຕໍ່ມາ.

ຖ້າທ່ານ ແລະ ໂຄງການ EI/ECSE ເຫັນດີທົດລອງການໄກ່ເກ່ຍ, ຢູ່ໃນເວລາໝົດໄລຍະການແກ້ໄຂບັນຫາ ທັງສອງຝ່າຍສາມາດເຫັນດີເປັນລາຍລັກອັກສອນ ທີ່ຈະສືບຕໍ່ຂະບວນການໄກ່ເກ່ຍຈົນກວ່າບັນລຸການຕົກລົງກັນໄດ້. ເຖິງແນວໃດກໍ່ຕາມ, ຖ້າທ່ານ ຫຼື ໂຄງການ EI/ECSE ຖອນຕົວຈາກຂະບວນການໄກ່ເກ່ຍ, ຈາກນັ້ນກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມເລີ່ມຕົ້ນໃນວັນຕໍ່ມາ.

**ຄຸນສົມບັດສຳລັບ ALJ ມີຄືແນວໃດ?**

ຢ່າງໜ້ອຍ, ALJ ຕ້ອງ:

1. ຕ້ອງບໍ່ເປັນພະນັກງານຂອງ ODE ຫຼື ໂຄງການ EI/ECSE ທີ່ພົວພັນຢູ່ໃນການສຶກສາ ຫຼື ການເບິ່ງແຍງດູແລເດັກ. ບຸກຄົນບໍ່ແມ່ນພະນັກງານຂອງ ODE ພຽງຢ່າງດຽວເພາະວ່າບຸກຄົນໄດ້ຮັບຄ່າຈ້າງຈາກ ODE ເພື່ອເຮັດໜ້າທີ່ເປັນ ALJ.
2. ຕ້ອງບໍ່ມີຜົນປະໂຫຍດສ່ວນຕົວ ຫຼື ອາຊີບທີ່ຂັດກັບຄວາມເປັນກາງຂອງ ALJ ຢູ່ໃນການພິຈາລະນາຄະດີ;
3. ຕ້ອງສາມາດຮັບຮູ້ໄດ້ ແລະ ເຂົ້າໃຈຂໍ້ບັນຍັດຂອງ IDEA ແລະ ກົດລະບຽບຂອງລັດຖະບານກາງ ແລະ ຂອງລັດກ່ຽວກັບ IDEA ແລະ ການຕີຄວາມໝາຍທາງດ້ານກົດໝາຍຂອງ IDEA ໂດຍສານຂອງລັດຖະບານກາງ ແລະ ຂອງລັດ; **ແລະ,**
4. ຕ້ອງມີຄວາມຮູ້ ແລະ ຄວາມສາມາດເພື່ອດຳເນີນການພິຈາລະນາຄະດີ ແລະ ທຳການຕັດສິນ ແລະ ຂຽນຄຳຕັດສິນທີ່ກົງກັບຫຼັກການປະຕິບັດທາງກົດໝາຍມາດຕະຖານທີ່ມີຄວາມເໝາະສົມໄດ້.

ODE ຮັກສາບັນຊີລາຍຊື່ຂອງບຸກຄົນເຫຼົ່ານັ້ນຜູ້ທີ່ເຮັດໜ້າທີ່ເປັນ ALJ ແລະ ຄຳຢັ້ງຢືນຄຸນນະວຸດສຳລັບແຕ່ລະຄົນ.

**ສິດໃນການພິຈາລະນາຄະດີຂອງຂ້ອຍມີແນວໃດ?**

ສິດໃນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມລວມມີ:

- ສິດໃນການນຳເອົາທະນາຍຄວາມຜູ້ທີ່ສາມາດໃຫ້ຄຳແນະນຳແກ່ທ່ານ;
- ສິດໃນການນຳເອົາບຸກຄົນຫຼາຍກວ່າໜຶ່ງຄົນຜູ້ທີ່ມີຄວາມຮູ້ ຫຼື ໄດ້ຮັບການຝຶກອົບຮົມພິເສດກ່ຽວກັບເດັກພິການ;
- ສິດໃນການໃຫ້ລູກຂອງທ່ານຍັງຢູ່ໃນຕຳແໜ່ງ EI/ECSE ປັດຈຸບັນຂອງລາວໃນໄລຍະຂະບວນການພິຈາລະນາຄະດີ ແລະ ການອຸທອນ, ເວັ້ນເສຍແຕ່ວ່າ:

  - ທ່ານ ແລະ ໂຄງການເຫັນດີຕໍ່ກັບການຈັບຊ້ອນອື່ນ;
  - ລູກຂອງທ່ານກໍາລັງສະໝັກເຂົ້າຮຽນໃນໂຄງການ ແລະ ທ່ານຍິນຍອມຕໍ່ການປ່ຽນຈັບຊ້ອນຂອງລູກທ່ານໃນໂຄງການ;
  - ລູກຂອງທ່ານຖືກພັກຮຽນ ຫຼື ໄລ່ອອກ ແລະ ຈັດເຂົ້າໃນສະຖານທີ່ສຶກສາທາງເລືອກຊົ່ວຄາວສໍາລັບພຶດຕິກໍາທີ່ບໍ່ໄດ້ສະແດງເຖິງຄວາມພິການຂອງເດັກ;
  - ລູກຂອງທ່ານຖືກເອົາອອກໂດຍໂຄງການເພື່ອການຈັບຊ້ອນຊົ່ວຄາວເປັນເວລາສູງສຸດເຖິງ 45 ວັນສໍາລັບການລະເມີດກ່ຽວກັບອາວຸດ ຫຼື ຢາເສບຕິດ ຫຼື ສໍາລັບການກໍ່ອາການບາດເຈັບທາງດ້ານຮ່າງກາຍທີ່ຮ້າຍແຮງແກ່ຄົນອື່ນ; **ຫຼື**,
  - ລູກຂອງທ່ານຖືກເອົາອອກໂດຍ ALJ ເພື່ອການຈັບຊ້ອນຊົ່ວຄາວເປັນເວລາສູງສຸດເຖິງ 45 ວັນອັນເນື່ອງຈາກມີໂອກາດສູງທີ່ຈະເກີດພຶດຕິກໍາທີ່ເປັນອັນຕະລາຍ;

- ສິດໃນການສະແດງຫຼັກຖານແບບປາກເປົ່າ ແລະ ເປັນລາຍລັກອັກສອນ ແລະ ເພື່ອປະເຊີນໜ້າ, ຄັດຄ້ານ ແລະ ກໍານົດພະຍານທີ່ຈະມາປາກົດຕົວ;
- ສິດໃນການໄດ້ຮັບແຈ້ງຢ່າງໜ້ອຍຫ້າວັນທາງລັດຖະການກ່ອນການປະເມີນຜົນຈະສໍາເລັດໂດຍເຂດ ຫຼື ໂຄງການກ່ອນວັນທີນັ້ນ ແລະ ຄໍາແນະນໍາໂດຍອີງຕາມການປະເມີນຜົນເຫຼົ່ານັ້ນທີ່ພວກເຂົາຕັ້ງໃຈນໍາໃຊ້ໃນການພິຈາລະນາຄະດີ;
- ສິດທີ່ຈະໃຫ້ລູກຂອງທ່ານມີໜ້າຢູ່ທີ່ການພິຈາລະນາຄະດີ;
- ສິດໃນການປິດ ຫຼື ເປີດການພິຈາລະນາຄະດີຕໍ່ສາທາລະນະ;
- ສິດທີ່ຈະຫ້າມການແນະນໍາຫຼັກຖານໃດໜຶ່ງຢູ່ໃນການພິຈາລະນາຄະດີທີ່ບໍ່ໄດ້ຖືກເປີດເຜີຍໃຫ້ກັບທ່ານຢ່າງໜ້ອຍຫ້າວັນເຮັດວຽກກ່ອນການພິຈາລະນາຄະດີ; ALJ ອາດຈະຫ້າມການນໍາສະເໜີຫຼັກຖານໃດໆທີ່ບໍ່ໄດ້ເປີດເຜີຍຫ້າວັນທາງລັດຖະການກ່ອນການພິຈາລະນາຄະດີໂດຍປາສະຈາກການຍິນຍອມຂອງພາກສ່ວນອື່ນ;
- ສິດຕໍ່ກັບການພິຈາລະນາຄະດີແບບຄໍາຕໍ່ຄໍາທາງອີເລັກໂທຣນິກເປັນລາຍລັກອັກສອນຕາມທີ່ທ່ານເລືອກໂດຍບໍ່ມີຄ່າໃຊ້ຈ່າຍພາຍໃນໄລຍະເວລາທີ່ສົມເຫດສົມຜົນຫຼັງຈາກການປິດການພິຈາລະນາຄະດີ; **ແລະ**,
- ສິດຕໍ່ກັບການພິຈາລະນາຄະດີແບບຄໍາຕໍ່ຄໍາທາງອີເລັກໂທຣນິກເປັນລາຍລັກອັກສອນຕາມທີ່ທ່ານເລືອກໂດຍບໍ່ມີຄ່າໃຊ້ຈ່າຍ.

ການພິຈາລະນາຄະດີແຕ່ລະຄັ້ງຕ້ອງຖືກດໍາເນີນການຢູ່ໃນເວລາ ແລະ ສະຖານທີ່ບ່ອນທີ່ສະດວກໃຫ້ທ່ານ ແລະ ລູກຂອງທ່ານຕາມສົມຄວນ.

**ພື້ນຖານສໍາລັບຄໍາຕັດສິນຂອງ ALJ ມີແນວໃດ?**

ຄໍາຕັດສິນຂອງ ALJ ກ່ຽວກັບວ່າ ລູກຂອງທ່ານໄດ້ຮັບການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE) ຫຼືບໍ່ນັ້ນຕ້ອງອີງຕາມຫຼັກຖານອັນສໍາຄັນ. ຢູ່ໃນເລື່ອງການກ່າວຫາການລະເມີດຂັ້ນຕອນດໍາເນີນການ, ALJ ອາດຈະພົບວ່າ ລູກຂອງທ່ານບໍ່ໄດ້ຮັບ FAPE ພຽງແຕ່ຖ້າມີການຂາດຄວາມພຽງພໍທາງດ້ານຂັ້ນຕອນດໍາເນີນການຄື:

1. ໄດ້ຫຍຸ້ງກ່ຽວກັບສິດຂອງລູກທ່ານຕໍ່ກັບການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE);
2. ໄດ້ຫຍຸ້ງກ່ຽວກັບໂອກາດຂອງທ່ານທີ່ຈະເຂົ້າຮ່ວມໃນຂະບວນການຕັດສິນກ່ຽວກັບການສະເໜີໃຫ້ການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE) ແກ່ລູກຂອງທ່ານຢ່າງຈະແຈ້ງ; **ຫຼື.**
3. ໄດ້ເຮັດໃຫ້ເກີດມີການກີດກັນເລື່ອງຜົນປະໂຫຍດທາງການສຶກສາ.

ກົດລະບຽບນີ້ບໍ່ໄດ້ປ້ອງກັນ ALJ ຈາກຄໍາສັ່ງຂອງໂຄງການເພື່ອປະຕິບັດຕາມຂໍ້ກໍານົດໃນພາກມາດຕະການປ້ອງກັນຂອງ IDEA (34 CFR 300.500 ຮອດ 300.536) (OAR 581-015-2300 ຮອດ 2385).

**ກົດລະບຽບພິເສດສໍາລັບ ECSE:**

ບໍ່ມີອັນໃດຢູ່ໃນພາກ B ຂອງ IDEA ຫ້າມ ຫຼື ຈໍາກັດສິດ, ຂັ້ນຕອນດໍາເນີນການ ແລະ ວິທີແກ້ໄຂທີ່ມີຢູ່ພາຍໃຕ້ລັດຖະທໍາມະນູນສະຫະລັດ, Americans with Disabilities Act of 1990 (ກົດໝາຍວ່າດ້ວຍຄົນພິການອາເມຣິກາປີ 1990), Title V of the Rehabilitation Act of 1973 (Section 504) (ພາກທີ V ຂອງກົດໝາຍການຟື້ນຟູປີ 1973 (ຂໍ້ທີ 504)) ຫຼື ກົດໝາຍອື່ນຂອງລັດຖະບານກາງທີ່ປົກປ້ອງສິດຂອງເດັກພິການ, ຍົກເວັ້ນອັນທີ່ກ່ອນການຍື່ນມາດຕະການດໍາເນີນການທາງແພ່ງພາຍໃຕ້ກົດໝາຍເຫຼົ່ານີ້ຂໍການຜ່ອນຜັນທີ່ມີໃຫ້ພາຍໃຕ້ພາກ B ຂອງ IDEA, ຂັ້ນຕອນດໍາເນີນການຕາມຂະບວນການທີ່ເໝາະສົມອະທິບາຍໄວ້ຂ້າງເທິງຕ້ອງຖືກຈໍາກັດໄປໃນລະດັບດຽວກັນກັບທີ່ຈະຖືກຮຽກຮ້ອງ, ຖ້າຝ່າຍນັ້ນໄດ້ຍື່ນມາດຕະການດໍາເນີນການພາຍໃຕ້ພາກ B ຂອງ IDEA.

ອັນນີ້ໝາຍຄວາມວ່າ ທ່ານອາດຈະມີວິທີແກ້ໄຂໃຫ້ພາຍໃຕ້ກົດໝາຍອື່ນທີ່ຊ້ອນທັບກັບບັນດາກົດໝາຍທີ່ມີໃຫ້ພາຍໃຕ້ IDEA, ແຕ່ໂດຍທົ່ວໄປແລ້ວນັ້ນເພື່ອໃຫ້ໄດ້ຮັບການຜ່ອນຜັນພາຍໃຕ້ກົດໝາຍອື່ນເຫຼົ່ານັ້ນ, ກ່ອນອື່ນໝົດທ່ານຕ້ອງໃຊ້ວິທີການແກ້ໄຂທາງດ້ານບໍລິຫານທີ່ມີຢູ່ພາຍໃຕ້ IDEA (ນັ້ນຄືຄໍາຮ້ອງທຸກຕາມຂັ້ນຕອນທີ່ເໝາະສົມ, ກອງປະຊຸມແກ້ໄຂບັນຫາ, ແລະ ຂັ້ນຕອນດໍາເນີນການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມທ່ຽງທໍາ) ກ່ອນໄປຫາສານໂດຍກົງ.

ຄໍາສັ່ງສຸດທ້າຍຈະມີໃຫ້ແກ່ State Interagency Coordinating Council (ສະພາປະສານງານລະຫວ່າງໜ່ວຍງານຂອງລັດ) ແລະ State Advisory Council for Special Education (ສະພາໃຫ້ຄໍາແນະນໍາຂອງລັດສໍາລັບການສຶກສາພິເສດ). ຄໍາສັ່ງສູງສຸດບໍ່ໄດ້ລະບຸຊື່ຂອງທ່ານ ຫຼື ລູກຂອງທ່ານ. ມັນແມ່ນບັນທຶກສາທາລະນະ.

**ຂ້ອຍສາມາດເຮັດຫຍັງໄດ້ແດ່, ຖ້າຫາກຂ້ອຍບໍ່ເຫັນດີຕໍ່ກັບຄໍາຕັດສິນການພິຈາລະນາຄະດີຄະດີ?**

ຄໍາຕັດສິນການພິຈາລະນາຄະດີແມ່ນສຸດທ້າຍ, ຍົກເວັ້ນວ່າພາກສ່ວນທີ່ເສຍຄະດີອາດຈະຟ້ອງຮ້ອງດໍາເນີນຄະດີທາງແພ່ງຕໍ່ສານພາຍໃນ 90 ວັນນັບແຕ່ມີຄໍາສັ່ງສູງສຸດ. ຖ້າຫາກທ່ານຍື່ນການດໍາຄະດີແພ່ງໃນສານລັດຖະບານກາງ ຫຼື ລັດ, ສານຕ້ອງ:

- ໄດ້ຮັບບັນທຶກການພິຈາລະນາຄະດີ;
- ຮັບຟັງຫຼັກຖານເພີ່ມເຕີມຕາມຄໍາຂໍຂອງຄູ່ກໍລະນີ;
- ຕັດສິນໃຈບົນພື້ນຖານຂອງຫຼັກຖານທີ່ມີຄວາມໜັກແໜ້ນກວ່າ; ແລະ
- ໃຫ້ການຜ່ອນຜັນຕາມທີ່ສານເຫັນວ່າເໝາະສົມ.

**ສານຈະສັ່ງໃຫ້ຊົດໃຊ້ຄ່າທໍານຽມທະນາຍຄວາມໃນເວລາໃດ? (ECSE ເທົ່ານັ້ນ)**

ສານອາດຈະຂໍ ODE ເພື່ອຄືນເງິນຄ່າທະນາຍຄວາມຕາມສົມຄວນໃຫ້ແກ່ທ່ານ, ຖ້າຫາກທ່ານຊະນະໃນການພິຈາລະນາຄະດີຕາມຄວາມເໝາະສົມ.

ສານອາດຈະຂໍໃຫ້ທະນາຍຄວາມຂອງທ່ານຊໍາລະຄ່າທໍານຽມສໍາລັບທະນາຍຂອງໂຄງການ EI/ECSE, ຖ້າຫາກຂໍ້ຮຽກຮ້ອງຂອງທ່ານ "ບໍ່ມີມູນ, ບໍ່ສົມເຫດສົມຜົນ ຫຼື ບໍ່ມີຄວາມຈິງ." ສານອາດຈະຂໍໃຫ້ທ່ານ ຫຼື ທະນາຍຄວາມຂອງທ່ານຊໍາລະຄ່າທໍານຽມສໍາລັບທະນາຍຄວາມ ຂອງໂຄງການ, ຖ້າຫາກຂໍ້ຮຽກຮ້ອງຂອງທ່ານສະແດງເຖິງ "ຈຸດປະສົງທີ່ບໍ່ສົມເຫດສົມຜົນ" ເຊັ່ນ:ການກໍ່ກວນ, ເຮັດໃຫ້ຊັກຊ້າ ຫຼື ເພີ່ມຄ່າໃຊ້ຈ່າຍໃນການດໍາເນີນຄະດີໂດຍບໍ່ມີເຫດຜົນ.

**ສານຈະກໍານົດຄ່າທໍານຽມທະນາຍຄວາມທີ່ສົມເຫດສົມຜົນແນວໃດ?**

ສານຕັດສິນໃຫ້ຄ່າທໍານຽມທະນາຍຄວາມສົມເຫດສົມຜົນດັ່ງຕໍ່ໄປນີ້ຄື:

1. ຄ່າທໍານຽມຕ້ອງໄດ້ອີງຕາມອັດຕາທີ່ມີຢູ່ທົ່ວໄປໃນຊຸມຊົນໃນທີ່ມີມາດຕະການດໍາເນີນການ ຫຼື ການພິຈາລະນາຄະດີເກີດຂຶ້ນສໍາລັບປະເພດ ແລະ ຄຸນນະພາບຂອງການບໍລິການທີ່ຈັດໃຫ້. ອາດຈະບໍ່ມີໂບນັດ ຫຼື ຕົວຄູນໃຫ້ຢູ່ໃນການຄິດໄລ່ຄ່າທໍານຽມທີ່ໄດ້ຕັດສິນໃຫ້.

2. ອາດຈະບໍ່ມີການຕັດສິນຄ່າທຳນຽມໃຫ້ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກໍ່ອາດຈະບໍ່ເບີກຄືນໃຫ້ຢູ່ໃນມາດຕະການດຳເນີນການ ຫຼື ການຟ້ອງຮ້ອງໃດໜຶ່ງພາຍໃຕ້ພາກ B ຂອງ IDEA ສຳລັບການບໍລິການທີ່ໄດ້ເຮັດຫຼັງຈາກການສະເໜີການແກ້ໄຂບັນຫາໃຫ້ເປັນລາຍລັກອັກສອນແກ່ທ່ານ, ຖ້າ:

    a. ການສະເໜີໃຫ້ແມ່ນໄດ້ສະເໜີໃຫ້ຢູ່ພາຍໃນເວລາທີ່ໄດ້ກ່າວມາກ່ອນຕາມ Rule 68 (ກົດລະບຽບ 68) ຂອງກົດລະບຽບຂັ້ນຕອນດຳເນີນການທາງແພ່ງຂອງລັດຖະບານກາງ ຫຼື ຢູ່ໃນກໍລະນີຂອງການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມຢູ່ໃນເວລາໃດໜຶ່ງເກີນກວ່າ 10 ວັນຕາມປະຕິທິນ ກ່ອນການຟ້ອງຮ້ອງເລີ່ມຕົ້ນ;

    b. ການສະເໜີໃຫ້ບໍ່ຖືກຍອມຮັບພາຍໃນ 10 ວັນຕາມປະຕິທິນ; **ແລະ**

    c. ສານພົບວ່າການຜ່ອນທີ່ສຸດທ້າຍໄດ້ຮັບມາຈາກທ່ານບໍ່ເອື້ອປະໂຫຍດໃຫ້ທ່ານຫຼາຍກວ່າການສະເໜີໃຫ້ການແກ້ໄຂບັນຫາ.

3. ແມ້ວ່າຈະມີຂໍ້ຈຳກັດເຫຼົ່ານີ້ກໍ່ຕາມ, ການຕັດສິນໃຫ້ຄ່າທຳນຽມທະນາຍຄວາມ ແລະ ຄ່າໃຊ້ຈ່າຍກ່ຽວຂ້ອງກໍ່ອາດຈະຖືກຕັດສິນໃຫ້ທ່ານ, ຖ້າທ່ານຊະນະ ແລະ ທ່ານຖືກຕ້ອງແທ້ໃນການປະຕິເສດການສະເໜີການແກ້ໄຂໃຫ້.

4. ຄ່າທຳນຽມອາດຈະບໍ່ຖືກຕັດສິນໃຫ້ກ່ຽວຂ້ອງກັບກອງປະຊຸມ IEP ໃດໜຶ່ງນອກຈາກວ່າ ກອງປະຊຸມໄດ້ຈັດຂຶ້ນເນື່ອງຈາກຜົນຂອງການຮ້ອງຟ້ອງທາງດ້ານບໍລິຫານ ຫຼື ມາດຕະການດຳເນີນການຂອງສານ. ຄ່າທຳນຽມສຳລັບການໄກ່ເກ່ຍອາດຈະບໍ່ມີໃຫ້.

ກອງປະຊຸມແກ້ໄຂບັນຫາບໍ່ຖືກພິຈາລະນາວ່າເປັນກອງປະຊຸມຈັດຂຶ້ນຕາມຜົນຂອງການພິຈາລະນາຄະດີທາງດ້ານບໍລິຫານ ຫຼື ມາດຕະການດຳເນີນການຂອງສານ ແລະ ຍັງບໍ່ຖືກພິຈາລະນາວ່າເປັນການພິຈາລະນາຄະດີທາງດ້ານບໍລິຫານ ຫຼື ມາດຕະການດຳເນີນການຂອງສານເພື່ອຈຸດປະສົງຂອງການໃຫ້ຄ່າທຳນຽມທະນາຍຄວາມເຫຼົ່ານີ້ນຳອີກ.

ສານຫຼຸດຄ່າທຳນຽມທະນາຍຄວາມທີ່ຕັດສິນໃຫ້ລົງຕາມຄວາມເໝາະສົມພາຍໃຕ້ພາກ B ຂອງ IDEA, ຖ້າສານພົບວ່າ:

1. ທ່ານ ຫຼື ທະນາຍຄວາມຂອງທ່ານໄດ້ແກ່ຍາວການແກ້ໄຂຂໍ້ຂັດແຍ້ງສຸດທ້າຍໂດຍບໍ່ມີເຫດຜົນສົມຄວນໃນລະຫວ່າງໄລຍະເວລາການດຳເນີນມາດຕະການ ຫຼື ການຟ້ອງຮ້ອງ;
2. ຈຳນວນຂອງຄ່າທຳນຽມທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ຖືກຕັດສິນໃຫ້ເກີນອັດຕາຕໍ່ຊົ່ວໂມງຢ່າງບໍ່ສົມເຫດສົມຜົນຂອງລາຄາທົ່ວໄປຢູ່ໃນຊຸມຊົນສຳລັບການບໍລິການທີ່ຄ້າຍຄືກັນຂອງທະນາຍຄວາມທີ່ມີທັກສະ, ຊື່ສຽງ, ແລະ ປະສົບການຄ້າຍຄືກັນພໍສົມຄວນ;
3. ເວລາທີ່ໃຊ້ໄປ ແລະ ການບໍລິການທາງດ້ານກົດໝາຍທີ່ຈັດໃຫ້ແມ່ນພິຈາລະນາວ່າເກີນສະພາບຂອງມາດຕະການດຳເນີນການ ຫຼື ການຟ້ອງຮ້ອງ; **ຫຼື**
4. ທະນາຍຄວາມທີ່ເປັນຜູ້ຕາງໜ້າຂອງທ່ານບໍ່ໄດ້ໃຫ້ໂຄງການຂໍ້ມູນທີ່ເໝາະສົມແກ່ໂຄງການ EI/ECSE ໃນຄຳຮ້ອງຂໍການພິຈາລະນາຄະດີຕາມຄວາມເໝາະສົມ.

ເຖິງແນວໃດກໍ່ຕາມ, ສານອາດຈະບໍ່ຫຼຸດຄ່າທຳນຽມລົງ, ຖ້າສານພົບວ່າໜ່ວຍງານຂອງລັດແກ່ຍາວການແກ້ໄຂການດຳເນີນມາດຕະການສຸດທ້າຍ ຫຼື ການຮ້ອງຟ້ອງໂດຍບໍ່ສົມເຫດສົມຜົນ ຫຼື ມີການລະເມີດພາຍໃຕ້ຂໍ້ບັງຄັບການຄຸ້ມຄອງລະບຽບການຂອງພາກ B ຂອງ IDEA.

## ເດັກທີ່ເຂົ້າໂຮງຮຽນເອກະຊົນ - ECSE ເທົ່ານັ້ນ

### ມີການບໍລິການສຶກສາພິເສດໃຫ້ແກ່ເດັກຜູ້ທີ່ພໍ່ແມ່ໄດ້ສະໝັກເຂົ້າຮຽນໃນໂຮງຮຽນເອກະຊົນບໍ?

ແມ່ນແລ້ວ, ໂດຍທົ່ວໄປ, ແຕ່ບໍ່ຈຳເປັນສຳລັບເດັກທຸກຄົນ. ເດັກຜູ້ທີ່ພໍ່ແມ່ໄດ້ສະໝັກໃຫ້ເຂົ້າຮຽນໂຮງຮຽນເອກະຊົນອາດຈະມີສ່ວນຮ່ວມໃນການສຶກສາພິເສດທີ່ໄດ້ຮັບທຶນຈາກລັດ ແລະ ບໍລິການທີ່ກ່ຽວຂ້ອງ. ກົດໝາຍລັດຖະບານກາງອະນຸຍາດໃຫ້ໂຄງການ ECSE ຈຳກັດທຶນຂອງລັດທີ່ໃຊ້ເຂົ້າໃນການບໍລິການເຫຼົ່ານີ້, ຖ້າຫາກລູກຂອງທ່ານໄດ້ຮັບການບໍລິການດ້ານການສຶກສາພິເສດພາຍໃຕ້ກົດໝາຍນີ້, ໂຄງການຈະໄປພົບທ່ານເພື່ອປັບປຸງແຜນການບໍລິການທີ່ອະທິບາຍ

ການບໍລິການທີ່ມີໃຫ້ແກ່ລູກຂອງທ່ານ. ການບໍລິການຈຳເປັນຕ້ອງມີໃຫ້ໃນສະຖານທີ່ທີ່ຢູ່ໂຮງຮຽນເອກະຊົນ ຫຼື ທີ່ໂຄງການ EI/ECSE. ຖ້າຫາກບໍລິການທີ່ໄດ້ສະໜອງໃຫ້ໃນໂຄງການ EI/ECSE, ໜ່ວຍງານຂອງລັດຕ້ອງສະເໜີການເດີນທາງໃຫ້ແກ່ເດັກໃນການເຂົ້າເຖິງການບໍລິການ.

**ເມື່ອໃດທີ່ໂຄງການຈະຖືກຂໍໃຫ້ຄືນເງິນແກ່ພໍ່ແມ່ສຳລັບຄ່າຮຽນໃນໂຮງຮຽນເອກະຊົນ.**

ໂຄງການ ECSE ບໍ່ຖືກຮຽກຮ້ອງໃຫ້ຈ່າຍຄ່າການສຶກສາ, ລວມທັງການສຶກສາພິເສດເລີ່ມໄວເດັກ ແລະ ການບໍລິການທີ່ກ່ຽວຂ້ອງຂອງເດັກພິການຢູ່ທີ່ໂຮງຮຽນ ຫຼື ສະຖານບໍລິການຂອງເອກະຊົນ, ຖ້າໂຄງການມີການສຶກສາຂອງລັດທີ່ເໝາະສົມຟຣີ ໃຫ້ແກ່ເດັກ ແລະ ທ່ານເລືອກທີ່ຈະເອົາລູກຂອງທ່ານໄປໂຮງຮຽນ ຫຼື ສະຖານບໍລິການເອກະຊົນແທນ.

ສານ ຫຼື ALJ ອາດຈະຂໍໃຫ້ໂຄງການ ECSE ຄືນເງິນພໍ່ແມ່ສຳລັບຄ່າໃຊ້ຈ່າຍໃນການຈັດວາງໃນໂຮງຮຽນລັດທີ່ດຳເນີນການໂດຍປາສະຈາກການຍິນຍອມ ຫຼື ການສົ່ງຕໍ່ໂດຍໂຄງການກໍຕໍ່ເມື່ອ:

- ເດັກໄດ້ຮັບບໍລິການ ECSE ພາຍໃຕ້ອຳນາດຂອງໂຄງການ EI/ECSE ກ່ອນສະໝັກເຂົ້າໂຮງຮຽນເອກະຊົນ.
- ສານ ຫຼື ALJ ພົບວ່າໃນເວລາທີ່ໂຄງການບໍ່ໄດ້ເຮັດໃຫ້ການສຶກສາຂອງລັດທີ່ເໝາະສົມໂດຍບໍ່ເສຍຄ່າມີໃຫ້ແກ່ເດັກທີ່ໄລຍະເວລາທີ່ເໝາະສົມ; **<u>ແລະ</u>**,
- ການຈັດວາງຢູ່ເອກະຊົນແມ່ນສົມເຫດສົມຜົນ.

ALJ ຫຼື ສານອາດຈະເຫັນວ່າການຈັດວາງຂອງພໍ່ແມ່ແມ່ນສົມເຫດສົມຜົນ, ເຖິງແມ່ນວ່າການຈັດວາງບໍ່ໄດ້ເປັນໄປຕາມມາດຕະຖານຂອງລັດສຳລັບໂຄງການ EI/ECSE.

**ເມື່ອໃດທີ່ສານຈະຫຼຸດ ຫຼື ປະຕິເສດການຄືນເງິນໃຫ້ແກ່ພໍ່ແມ່? ແຈ້ງການ:**

ສານ ຫຼື ALJ ອາດຈະຫຼຸດ ຫຼື ປະຕິເສດການຄືນເງິນ, ຖ້າຫາກວ່າພໍ່ແມ່ບໍ່ໄດ້ໃຫ້ແຈ້ງການແກ່ໂຄງການ ECSE ວ່າພວກເຂົາຖືກປະຕິເສດການຈັດວາງທີ່ໄດ້ສະເໜີໂດຍໂຄງການ ECSE ແລະ ຊີ້ແຈງຂໍ້ກັງວົນຂອງພວກເຂົາ ແລະ ຄວາມຕັ້ງໃຈຂອງພວກເຂົາໃນການສະໝັກຮຽນໃນລູກຂອງພວກເຂົາເຂົ້າໃນໂຮງຮຽນເອກະຊົນໂດຍໃຊ້ຄ່າໃຊ້ຈ່າຍຂອງລັດ. ແຈ້ງການນີ້ຕ້ອງແຈ້ງລ່ວງໜ້າ:

- ໃນກອງປະຊຸມ IFSP ລ່າສຸດທີ່ພໍ່ແມ່ໄດ້ເຂົ້າຮ່ວມກ່ອນທີ່ຈະຖອນເດັກອອກຈາກການຈັດວາງຂອງ ECSE **<u>ຫຼື</u>**,
- ເປັນລາຍລັກອັກສອນຕໍ່ໂຄງການ ECSE ຢ່າງໜ້ອຍສິບວັນທາງລັດຖະການກ່ອນການຖອນເດັກອອກຈາກການຈັດວາງຂອງ ECSE.

ສານ ຫຼື ALJ ຕ້ອງບໍ່ຫຼຸດ ຫຼື ປະຕິເສດການຄືນເງິນ, ຖ້າຫາກວ່າບໍ່ແມ່ຂອງພວກເຂົາບໍ່ໄດ້ໃຫ້ແຈ້ງການນີ້, ຖ້າຫາກວ່າ:

- ການໃຫ້ແຈ້ງການອາດຈະສົ່ງຜົນໃຫ້ເກີດອັນຕະລາຍທາງດ້ານຮ່າງກາຍຕໍ່ເດັກ;
- ໂຄງການ EI/ECSE ປ້ອງກັນພໍ່ແມ່ຈາກການໃຫ້ແຈ້ງການ **<u>ຫຼື</u>**,
- ພໍ່ແມ່ບໍ່ໄດ້ຮັບສຳເນົາແຈ້ງການກ່ຽວກັບມາດຕະການ ຫຼື ໄດ້ຮັບແຈ້ງກ່ຽວກັບຂໍ້ກຳນົດຂອງແຈ້ງການ.

ສານ ຫຼື ALJ **<u>ອາດຈະບໍ່</u>**ຫຼຸດ ຫຼື ປະຕິເສດການຄືນເງິນ, ຖ້າຫາກວ່າບໍ່ແມ່ຂອງພວກເຂົາບໍ່ໄດ້ໃຫ້ແຈ້ງການນີ້, ຖ້າຫາກວ່າ:

- ພໍ່ແມ່ບໍ່ຮູ້ໜັງສື ຫຼື ບໍ່ສາມາດຂຽນເປັນພາສາອັງກິດ; **<u>ຫຼື</u>**
- ການໃຫ້ແຈ້ງການອາດຈະສົ່ງຜົນໃຫ້ເກີດອັນຕະລາຍທາງດ້ານຈິດໃຈຕໍ່ເດັກ;

**ການປະເມີນຜົນ**; ສານ ຫຼື ALJ ຍັງອາດຈະຫຼຸດ ຫຼື ປະຕິເສດການແທນເງິນຄືນຖ້າຫາກພໍ່ແມ່ບໍ່ເຮັດໃຫ້ເດັກພ້ອມສໍາລັບການປະເມີນຜົນທີ່ຈັດໂດຍໜ່ວຍງານຂອງລັດ, ຖ້າຫາກ:

- ໜ່ວຍງານຂອງລັດໃຫ້ແຈ້ງການເປັນລາຍລັກອັກສອນລ່ວງໜ້າກ່ຽວກັບຄວາມຕັ້ງໃຈຂອງພວກເຂົາໃນການປະເມີນຜົນ ຫຼື ການປະເມີນຜົນລູກຂອງທ່ານຄືນໃໝ່.
- ຈຸດປະສົງຂອງການປະເມີນຜົນຕາມທີ່ໄດ້ລະບຸໄວ່ໃນແຈ້ງການນີ້ແມ່ນເໝາະສົມ ແລະ ສົມເຫດສົມຜົນ; <u>**ແລະ**</u>
- ໜ່ວຍງານຂອງລັດໃຫ້ແຈ້ງການແກ່ພໍ່ແມ່ກ່ອນໜ້າທີ່ລູກຂອງພວກເຂົາຈະຖືກຖອນອອກຈາກການຊັບຊ້ອນຂອງ ECSE.

**ຄວາມບໍ່ສົມເຫດສົມຜົນ**: ການຄືນເງິນຍັງອາດຈະຖືກຫຼຸດ ຫຼື ປະຕິເສດເມື່ອສານພົບວ່າພໍ່ແມ່ບໍ່ມີເຫດຜົນໃນການກະທໍາຂອງພວກເຂົາ ຫຼື ຄ່າໃຊ້ຈ່າຍສໍາລັບໂຄງການເອກະຊົນແມ່ນບໍ່ສົມເຫດສົມຜົນ.

## ວິໄນ ແລະ ການຊັບຊ້ອນໃນສະຖານທີ່ການສຶກສາທາງເລືອກຊົ່ວຄາວ-ECSE ເທົ່ານັ້ນ

ກົດໝາຍລັດຖະບານກາງກໍານົດວ່າພໍ່ແມ່ຕ້ອງໄດ້ຮັບແຈ້ງກ່ຽວກັບການຄຸ້ມຄອງລະບຽບການທີ່ກ່ຽວຂ້ອງກັບລະບຽບຂອງໂຮງຮຽນ ແລະ ຂັ້ນຕອນການຊັບຊ້ອນໃນສະຖານທີ່ທາງເລືອກ, ເຖິງແມ່ນວ່າຂັ້ນຕອນເຫຼົ່ານີ້ຈະບໍ່ໄດ້ຂຽນຂຶ້ນໂດຍຄໍານຶງເຖິງ EI/ECSE.

### ເດັກຈະຖືກພັກຈາກໂຄງການ ECSE ບໍ?

ແມ່ນ. ໂຄງການ ECSE ອາດຈະມີການພັກຮຽນເດັກທີ່ມີຄວາມພິການຈາກການຊັບຊ້ອນທາງການສຶກສາໃນປັດຈຸບັນຂອງເດັກດ້ວຍເຫດຜົນດ້ານລະບຽບວິໄນເປັນເວລາສູງສຸດເຖິງສິບວັນຕິດຕໍ່ກັນ, ຖ້າຫາກເດັກທີ່ບໍ່ພິການຈະຖືກພັກຮຽນຕາມພຶດຕິກໍາຂອງພວກເຂົາ. ໂຄງການອາດຈະນໍາໃຊ້ການຖອດຖອນໄລຍະສັ້ນ, ລວມເຖິງການໂຈະການຮຽນ, ການຍ້າຍເດັກໄປສະຖານທີ່ສຶກສາທາງເລືອກຊົ່ວຄາວ ຫຼື ການຈັດເດັກໄປຢູ່ສະຖານທີ່ໃໝ່, ໃນລະດັບດຽວກັນກັບທາງເລືອກເຫຼົ່ານີ້ອາດຈະຖືກນໍາໃຊ້ກັບເດັກທີ່ບໍ່ພິການ.

### ເດັກຈະຖືກພັກການຮຽນເປັນເວລາຫຼາຍກວ່າສິບວັນຕໍ່ໜຶ່ງສົກຮຽນບໍ?

ມັນແລ້ວແຕ່. ເດັກອາດຈະຖືກໂຈະການຮຽນຈາກໂຄງການ ECSE ເປັນໄລຍະເວລາເພີ່ມເຕີມສູງສຸດເຖິງສິບວັນເຂົ້າຮຽນຕິດຕໍ່ກັນ, ຖ້າຫາກບໍ່ມີ “ຮູບແບບ” ໃນການພັກຮຽນ. “ຮູບແບບ" ມີຢູ່, ຖ້າຫາກວ່າ:

- ພຶດຕິກໍາຂອງເດັກຄ້າຍຄືກັບພຶດຕິກໍາຂອງເດັກໃນເຫດການຜ່ານມາຫຼາຍ (ສໍາລັບພາກສ່ວນໃຫຍ່) ໃນທີ່ນັ້ນທີ່ເຮັດໃຫ້ເກີດມີການຍ້າຍອອກເປັນຊຸດ; <u>**ແລະ**</u>,
- ປັດໃຈອື່ນໆເຊັ່ນ: ໄລຍະເວລາຂອງການພັກຮຽນແຕ່ລະຄັ້ງ, ຈໍານວນເວລາທັງໝົດທີ່ເດັກບໍ່ໄດ້ມາຮຽນ ແລະ ຄວາມໃກ້ຂອງການພັກຮຽນແຕ່ລະຄັ້ງທີ່ສະແດງເຖິງຮູບແບບ. ຊຸດການຍ້າຍອອກປະກອບເປັນຮູບແບບທີ່ທາງໂຄງການ EI/ECSE ໄດ້ກໍານົດໄປຕາມແຕ່ລະກໍລະນີ ແລະ ຂຶ້ນກັບການທົບທວນຄືນຜ່ານຂະບວນການທີ່ເໝາະສົມ ແລະ ການຮ້ອງຟ້ອງຫາຄວາມເປັນທໍາ, ຖ້າໄດ້ໂຕ້ແຍ້ງ.

ຖ້າຫາກມີ “ຮູບແບບ” ການພັກຮຽນ, ໂຄງການຈະພັກການຮຽນເດັກ, ຖ້າຫາກທີມ IFSP ຕັດສິນໃຈວ່າພຶດຕິກໍາຂອງເດັກແມ່ນບໍ່ “ສະແດງ” ເຖິງຄວາມພິການຂອງເດັກ.

ຖ້າຫາກບໍ່ມີ "ຮູບແບບ," ຈາກນັ້ນພະນັກງານ EI/ECSE, ໂດຍປຶກສາຫາລືກັບອາຈານຂອງເດັກຢ່າງໜ້ອຍໜຶ່ງທ່ານ, ກຳນົດວ່າການບໍລິການໃດທີ່ຈຳເປັນສຳລັບເດັກເພື່ອສືບຕໍ່ຄວາມກ້າວໜ້າຕໍ່ກັບເປົ້າໝາຍຂອງ IFSP ໃນໄລຍະການຖອດຖອນ.

ເດັກອາດຈະຖືກຖອນອອກເປັນເວລາຫຼາຍກວ່າສິບວັນເຂົ້າຮຽນຕິດຕໍ່ກັນ (ໂດຍປົກກະຕິເອີ້ນວ່າ "ການໄລ່ອອກ") ຖ້າຫາກທີມ IFSP ຕັດສິນວ່າພຶດຕິກຳຂອງເດັກແມ່ນບໍ່ "ສະແດງ" ເຖິງຄວາມພິການຂອງເດັກ.

**ຖ້າຫາກເດັກຖືກພັກການຮຽນ ຫຼື ຖືກໄລ່ອອກເປັນເວລາຫຼາຍກວ່າສິບວັນຕໍ່ໜຶ່ງສົກຮຽນ, ໂຄງການຍັງຈະໃຫ້ບໍລິການ ECSE ແກ່ເດັກບໍ?**

ແມ່ນ. ຫຼັງຈາກສິບວັນທຳອິດຂອງການຖອດຖອນ, ໂຄງການຕ້ອງໃຫ້ການບໍລິການທີ່ຈຳເປັນຕໍ່ເດັກເພື່ອສືບຕໍ່ມີສ່ວນຮ່ວມໃນກິດຈະກຳທີ່ເໝາະສົມກັບໄວ ແລະ ເພື່ອຄວາມກ້າວໜ້າຕໍ່ກັບເປົ້າໝາຍ IFSP ຂອງເດັກ. ການບໍລິການເຫຼົ່ານີ້ຈະມີໃຫ້ໃນສະຖານທີ່ແຕກຕ່າງກັນ, ເອີ້ນວ່າ "ສະຖານທີ່ສຶກສາທາງເລືອກຊົ່ວຄາວ."

**ທີມ IFSP ສາມາດຕັດສິນທີ່ຈະຍ້າຍເດັກໄປໂຮງຮຽນອື່ນ ຫຼື ໂຄງການອື່ນໄດ້ບໍ, ເຖິງແມ່ນວ່າເດັກບໍ່ໄດ້ຖືກພັກຮຽນ ຫຼື ໄລ່ອອກ?**

ໄດ້. ພໍ່ແມ່ເປັນສ່ວນໜຶ່ງຂອງທີມທີ່ດຳເນີນການຕັດສິນໃຈນີ້. ການຕັດສິນໃຈຕ້ອງອີງຕາມພື້ນຖານຂອງ IFSP ຂອງເດັກ ແລະ ສິ່ງທີ່ເດັກຕ້ອງການເພື່ອໃຫ້ປະສົບຜົນສຳເລັດໃນໂຮງຮຽນ. ພ້ອມກັນກັບປັດໄຈອື່ນໆ, ທີມ IFSP ຂອງເດັກສາມາດພິຈາລະນາຜົນກະທົບຂອງພຶດຕິກຳຂອງເດັກຕໍ່ກັບອາຈານ ແລະ ເດັກຄົນອື່ນໄດ້.

**ໂຄງການຕ້ອງໃຫ້ແຈ້ງການແກ່ພໍ່ແມ່ກ່ຽວກັບການດຳເນີນການດ້ານລະບຽບວິໄນບໍ?**

ແມ່ນແລ້ວ, ໂຄງການຕ້ອງແຈ້ງພໍ່ແມ່ໃຫ້ຊາບບໍ່ເກີນວັນທີທີ່ໄດ້ມີການຕັດສິນໃຈຈະດຳເນີນການ ແລະ ໃຫ້ແຈ້ງການກ່ຽວກັບມາດຕະການປ້ອງກັນແກ່ພໍ່ແມ່.

**ທີມ IFSP ຈະຕັດສິນແນວໃດວ່າການກະທຳແມ່ນ "ການສະແດງ" ຄວາມພິການຂອງເດັກ?**

ທີມ IFSP, ລວມເຖິງພໍ່ແມ່, ເບິ່ງຂໍ້ມູນທີ່ກ່ຽວຂ້ອງທັງໝົດກ່ຽວກັບເດັກ, ລວມເຖິງຜົນການທົດສອບ, ຂໍ້ມູນຈາກພໍ່ແມ່, ການສັງເກດເດັກ ແລະ IFSP ຂອງເດັກ ແລະ ການຊັບຊ້ອນ.

ທີມ IFSP ຂອງເດັກອາດຈະກຳນົດວ່າພຶດຕິກຳຂອງເດັກສະແດງເຖິງຄວາມພິການຂອງເດັກ, ຖ້າຫາກວ່າ:

- ພຶດຕິກຳແມ່ນເກີດຈາກ ຫຼື ກ່ຽວຂ້ອງໂດຍກົງກັບຄວາມພິການຂອງເດັກ **ຫຼື**
- ພຶດຕິກຳແມ່ນຜົນໂດຍກົງມາຈາກໂຄງການບໍ່ຈັດຕັ້ງປະຕິບັດ IFSP ຂອງເດັກ.

ຄຳຕັດສິນນີ້ຕ້ອງດຳເນີນພາຍໃນ 10 ວັນເຂົ້າໂຮງຮຽນຫຼັງຈາກມີການຕັດສິນທີ່ຈະປ່ຽນການຊັບຊ້ອນເດັກພິການເນື່ອງຈາກການລະເມີດຈັນຍາບັນຂອງນັກຮຽນ.

**ແມ່ນຫຍັງຈະເກີດຂຶ້ນ, ຖ້າຫາກທີມ IFSP ຕັດສິນວ່າພຶດຕິກຳຂອງເດັກ*ແມ່ນ*ການສະແດງເຖິງຄວາມພິການຂອງເດັກ?**

ຖ້າຫາກທີມ IFSP ສະຫຼຸບວ່າພຶດຕິກຳແມ່ນສະແດງເຖິງຄວາມພິການຂອງເດັກ, ໂຄງການຈະບໍ່ໄລ່ເດັກອອກ ຫຼື ພັກການຮຽນຂອງເດັກເປັນເວລາເກີນກວ່າສິບວັນເຂົ້າຮຽນຕິດຕໍ່ກັນ ຫຼື ເປັນເວລາຫຼາຍກວ່າສິບວັນໃນສົກຮຽນ, ຖ້າຫາກການຖອດຖອນແມ່ນເປັນ "ຮູບແບບ."

ໂຄງການ ແລະ ພໍ່ແມ່ອາດຈະຈັດກອງປະຊຸມ IFSP ເພື່ອທົບທວນຂໍ້ມູນ ແລະ ທີມ IFSP ອາດຈະດຳເນີນການປ່ຽນແປງໃນບໍລິການ IFSP ຂອງເດັກ ແລະ/ຫຼື ການຊັບຊ້ອນ. ຖ້າຫາກທີມ IFSP ພົບວ່າການດຳເນີນການສອບຖາມນັ້ນເປັນຜົນໂດຍກົງມາຈາກທີ່ໂຄງການບໍ່ໄດ້ຈັດຕັ້ງປະຕິບັດ IFSP, ໂຄງການຕ້ອງດຳເນີນການທັນທີເພື່ອແກ້ໄຂຂໍ້ບົກພ່ອງ.

ທີມ IFSP ຕ້ອງເຮັດສຳເລັດການປະເມີນຜົນກ່ຽວກັບພຶດຕິກຳຂອງເດັກ (ເອີ້ນວ່າ "ການປະເມີນພຶດຕິກຳການເຮັດວຽກ") ແລະ ພັດທະນາແຜນການຊ່ວຍເຫຼືອດ້ານພຶດຕິກຳສຳລັບເດັກ. ຖ້າຫາກເດັກໄດ້ຢູ່ໃນແຜນການຊ່ວຍເຫຼືອດ້ານພຶດຕິກຳແລ້ວ, ທີມ IFSP ຕ້ອງກວດສອບ ແລະ ປ່ຽນແຜນ, ຖ້າຈຳເປັນ, ເພື່ອແກ້ໄຂພຶດຕິກຳ.

ຍົກເວັ້ນຕາມທີ່ໄດ້ອະທິບາຍໄວ້ຢູ່ພາຍໃຕ້***ສະພາບການພິເສດ***, ໂຄງການ EI/ECSE ຕ້ອງສົ່ງເດັກກັບຄືນຫາບ່ອນຈັດຫາໃຫ້ມາຈາກບ່ອນທີ່ເດັກຖືກຍ້າຍອອກໄປ, ນອກຈາກວ່າພໍ່ແມ່ ແລະ ໂຄງການເຫັນດີຕໍ່ການປ່ຽນບ່ອນຈັດຫາໃຫ້ຕາມສ່ວນຂອງການປັບປຸງແຜນການຊ່ວຍເຫຼືອໂຄງການດ້ານພຶດຕິກຳ.

**ແມ່ນຫຍັງຈະເກີດຂຶ້ນຖ້າຫາກທີມ IFSP ຕັດສິນວ່າພຶດຕິກຳຂອງເດັກ*ບໍ່ແມ່ນ*ການສະແດງເຖິງຄວາມພິການຂອງເດັກ?**

ຖ້າຫາກທີມ IFSP ສະຫຼຸບວ່າພຶດຕິກຳຂອງເດັກບໍ່ແມ່ນການສະແດງເຖິງຄວາມພິການຂອງເດັກ:

- ໂຄງການອາດຈະດຳເນີນການທາງວິໄນເຊັ່ນ: ການໄລ່ອອກໃນລັກສະນະດຽວກັນສຳລັບເດັກທີ່ບໍ່ພິການ.
- ໂຄງການຕ້ອງເຮັດໃຫ້ແນ່ໃຈວ່າການສຶກສາພິເສດຂອງເດັກ ແລະ ບັນທຶກດ້ານວິໄນແມ່ນມີໃຫ້ແກ່ພະນັກງານພິຈາລະນະຄະດີການໄລ່ອອກ, ຖ້າຫາກຈຳເປັນຕ້ອງມີການພິຈາລະນາຄະດີການໄລ່ອອກ;
- ໂຄງການຕ້ອງສືບຕໍ່ໃຫ້ການສຶກສາຂອງລັດທີ່ເໝາະສົມໂດຍບໍ່ເສຍຄ່າໃຊ້ຈ່າຍໃຫ້ແກ່ເດັກຢ່າງຕໍ່ເນື່ອງກັບຄວາມຕ້ອງການສ່ວນບຸກຄົນຂອງເດັກ, ເຊິ່ງອາດຈະມີໃຫ້ໃນສະຖານທີ່ສຶກສາທາງເລືອກຊົ່ວຄາວຕາມທີ່ໄດ້ກຳນົດໄວ້ໂດຍທີມ IFSP; **ແລະ**,
- ຕາມຄວາມເໝາະສົມ, ໂຄງການຕ້ອງມີການປະເມີນພຶດຕິກຳການເຮັດວຽກໃຫ້ແກ່ເດັກ ແລະ ບໍລິການຊ່ວຍເຫຼືອດ້ານພຶດຕິກຳ ແລະ ການປັບປ່ຽນເພື່ອແກ້ໄຂພຶດຕິກຳຂອງເດັກເພື່ອໃຫ້ມັນບໍ່ຕໍ່ເນື່ອງ.

**ກໍລະນີພິເສດ:** ເຈົ້າໜ້າທີ່ໂຄງການ EI/ECSE ອາດຈະພິຈາລະນາສະພາບການສະເພາະໃດໜຶ່ງເປັນແຕ່ລະກໍລະນີໄປ ເມື່ອທຳການກຳນົດວ່າ ການປ່ຽນການຈັດຫາໃຫ້ກ່ຽວຂ້ອງກັບການປະຕິບັດວິໄນມີຄວາມເໝາະສົມສຳລັບເດັກພິການ ຜູ້ລະເມີດກົດການປະພຶດຂອງນັກຮຽນໃນໂຮງຮຽນຫຼືບໍ່.

**ເມື່ອໃດທີ່ໂຄງການຈະສາມາດຖອນເດັກອອກຈາກໂຮງຮຽນ ຫຼື ໂຄງການອື່ນໄດ້ທັນທີ?**

ພຶດຕິກຳເປັນການສະແດງອອກຂອງຄວາມພິການຫຼືບໍ່ກໍ່ຕາມ, ເຈົ້າໜ້າທີ່ EI/ECSE ອາດຈະຍ້າຍເດັກອອກໄປຫາສະຖານສຶກສາທາງເລືອກອື່ນຊົ່ວຄາວ (ກຳນົດໂດຍທີມງານ IFSP ຂອງເດັກ) ເປັນເວລາເຖິງ 45 ວັນເຂົ້າໂຮງຮຽນພາຍໃຕ້ສະພາບການພິເສດຕໍ່ໄປນີ້:

- ເດັກທີ່ຖືອາວຸດເຂົ້າມາໃນໂຄງການ EI/ECSE ຫຼື ໄປທີ່ສະຖານທີ່ EI/ECSE ຫຼື ຄອບຄອງອາວຸດຢູ່ໃນໂຮງຮຽນ;

- ເດັກທີ່ເປັນເຈົ້າຂອງ ຫຼື ນໍາໃຊ້ຢາຜິດກົດໝາຍໂດຍເຈດຕະນາ ຫຼື ຂາຍ ຫຼື ຊັກຊວນໃຫ້ຂາຍສານຄວບຄຸມໃນຂະນະທີ່ຢູ່ໃນໂຄງການ EI/ECSE ຫຼື ສະຖານທີ່ຂອງ EI/ECSE **ຫຼື**,
- ເດັກທີ່ກໍ່ໃຫ້ເກີດອາການບາດເຈັບແກ່ຮ່າງກາຍຂັ້ນຮຸນແຮງແກ່ບຸກຄົນອື່ນໃນຂະນະທີ່ຢູ່ໃນໂຄງການ EI/ECSE ຫຼື ຢູ່ພື້ນທີ່ຂອງ EI/ECSE ຫຼືທີ່ສະຖານທີ່ EI/ECSE.

**ເມື່ອໃດທີ່ໂຄງການ ຫຼື ພໍ່ແມ່ຈະໄດ້ຮັບການພິຈາລະນາຄະດີແບບເລັ່ງດ່ວນເພື່ອແກ້ໄຂຂໍ້ຂັດແຍ່ງດ້ານລະບຽບວິໄນ?**

ພໍ່ແມ່ຜູ້ທີ່ບໍ່ເຫັນດີຕໍ່ກັບການກໍານົດການສະແດງອອກຂອງທີມ IFSP ຫຼື ຄໍາຕັດສິນທີ່ກ່ຽວຂ້ອງກັບການຈັດວາງຂອງເດັກອາດຈະຂໍການດໍາເນີນການພິຈາລະນາຄະດີຕາມຄວາມເໝາະສົມ. ໂຄງການອາດຈະຂໍການພິຈາລະນາຄະດີ, ຖ້າໂຄງການເຊື່ອວ່າການຮັກສາເດັກໄວ້ບ່ອນຈັດຫາໃຫ້ໃນປັດຈຸບັນອາດຈະມີຜົນເຮັດໃຫ້ເກີດການບາດເຈັບຕໍ່ເດັກ ຫຼື ຜູ້ອື່ນໄດ້ສູງ.

ໂຄງການ EI/ECSE ອາດຈະຂໍການພິຈາລະນາຄະດີແບບເລັ່ງດ່ວນເພື່ອຍ້າຍເດັກໄປສະຖານທີ່ການສຶກສາຊົ່ວຄາວຄັ້ງລະບໍ່ເກີນ 45 ວັນ, ຖ້າຫາກວ່າ:

- ເດັກມີແນວໂນ້ມທີ່ຈະເຮັດໃຫ້ເດັກ ຫຼື ຄົນອື່ນໄດ້ຮັບບາດເຈັບໃນການຈັດວາງປັດຈຸບັນ;
- ໂຄງການໄດ້ພະຍາຍາມຢ່າງເຕັມທີ່ໃນການຫຼຸດຄວາມສ່ຽງຂອງອັນຕະລາຍໃນການຈັດວາງປັດຈຸບັນ; **ແລະ**,
- ສະຖານທີ່ສຶກສາທາງເລືອກຊົ່ວຄາວຕ້ອງບັນລຸຂໍ້ກໍານົດວ່ານີ້.

**ມີຂະບວນການໃດແດ່ທີ່ນໍາໃຊ້ເຂົ້າໃນການຂໍການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມ?**

ເມື່ອໃດກໍ່ຕາມທີ່ພໍ່ແມ່ ຫຼື ໂຄງການ EI/ECSE ຂໍການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມ, ຕ້ອງໄດ້ມີການພິຈາລະນາຄະດີເພື່ອໃຫ້ບັນລຸຂໍ້ກໍານົດຂອງການພິຈາລະນາຄະດີຕາມຄວາມເໝາະສົມ, ຍົກເວັ້ນ:

1. ODE ຕ້ອງຈັດໃຫ້ມີການພິຈາລະນາຄະດີຕາມຂັ້ນຕອນທີ່ເໝາະສົມເລັ່ງດ່ວນ, ເຊິ່ງຕ້ອງເກີດຂຶ້ນພາຍໃນ **20** ວັນເຂົ້າໂຮງຮຽນນັບຈາກມື້ທີ່ໄດ້ຂໍໃຫ້ມີການພິຈາລະນາຄະດີ ແລະ ຕ້ອງມີຜົນໃນການກໍານົດເປັນລາຍລັກອັກສອນພາຍໃນ **10** ວັນເຂົ້າໂຮງຮຽນຫຼັງຈາກການພິຈາລະນາຄະດີ.

2. ນອກຈາກວ່າ ພໍ່ແມ່ ແລະ ໂຄງການ EI/ECSE ເຫັນດີເປັນລາຍລັກອັກສອນທີ່ຈະບໍ່ຈັດກອງປະຊຸມ, ຫຼື ເຫັນດີໃຊ້ການໄກ່ເກ່ຍ, ກອງປະຊຸມແກ້ໄຂບັນຫາຕ້ອງເກີດຂຶ້ນພາຍໃນ **7** ວັນຕາມປະຕິທິນນັບຈາກໄດ້ຮັບແຈ້ງການຄໍາຮ້ອງທຸກຕາມຂະບວນການທີ່ເປັນທໍາ. ການພິຈາລະນາຄະດີອາດຈະດໍາເນີນການຕໍ່, ນອກຈາກວ່າເລື່ອງໄດ້ຮັບການແກ້ໄຂຈົນເປັນທີ່ພໍໃຈຂອງທັງສອງຝ່າຍພາຍໃນ **15** ວັນຕາມປະຕິທິນນັບຈາກໄດ້ຮັບຄໍາຮ້ອງທຸກຕາມຂະບວນການທີ່ເໝາະສົມ.

ຝ່າຍໜຶ່ງອາດຈະອຸທອນຄໍາຕັດສິນຢູ່ໃນການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມເລັ່ງດ່ວນໄດ້ດ້ວຍວິທີດຽວກັນກັບວິທີສໍາລັບຄໍາຕັດສິນຢູ່ໃນການພິຈາລະນາຄະດີຕາມຂະບວນການທີ່ເປັນທໍາ.

ALJ ທີ່ເປັນກາງຕ້ອງດໍາເນີນການຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມ ແລະ ຕັດສິນໃຈ. ALJ ອາດຈະ:

1. ສັ່ງເດັກພິການກັບຄືນຫາບ່ອນຈັດຫາໃຫ້ຈາກທີ່ເດັກຖືກຍ້າຍອອກໄປ, ຖ້າ ALJ ກໍານົດວ່າ ການຍ້າຍອອກໄປເປັນການລະເມີດເງື່ອນໄຂກໍານົດເຫຼົ່ານີ້ ຫຼື ພຶດຕິກໍາຂອງເດັກແມ່ນການສະແດງອອກຄວາມພິການຂອງເດັກ; **ຫຼື,**

2. ສັ່ງການປ່ຽນບ່ອນຈັດຫາໃຫ້ຂອງເດັກພິການໄປສູ່ສະຖານສຶກສາທາງເລືອກອື່ນຊົ່ວຄາວທີ່ເໝາະສົມເປັນເວລາບໍ່ເກີນ 45 ວັນເຂົ້າໂຮງຮຽນ, ຖ້າ ALJ ກໍານົດວ່າ ການຮັກສາບ່ອນຈັດຫາໃຫ້ປະຈຸບັນຂອງເດັກອາດຈະມີຜົນເຮັດໃຫ້ເກີດການບາດເຈັບຕໍ່ເດັກ ຫຼື ຕໍ່ຜູ້ອື່ນໄດ້ສູງ.

ຂັ້ນຕອນດໍາເນີນການພິຈາລະນາຄະດີເຫຼົ່ານີ້ອາດຈະຖືກປະຕິບັດຊໍ້າຄືນໄດ້, ຖ້າໂຄງການ EI/ECSE ເຊື່ອວ່າ ການສົ່ງເດັກກັບຄືນຫາບ່ອນຈັດຫາໃຫ້ເບື້ອງຕົ້ນອາດຈະມີຜົນເຮັດໃຫ້ເກີດການບາດເຈັບຕໍ່ເດັກ ຫຼື ຕໍ່ຜູ້ອື່ນໄດ້ສູງ.

ເມື່ອພໍ່ແມ່ ຫຼື ໂຄງການ EI/ECSE ໄດ້ຍື່ນຄໍາຮ້ອງຂໍການພິຈາລະນາຄະດີຕາມຂະບວນການທີ່ເໝາະສົມກ່ຽວຂ້ອງກັບເລື່ອງການປະຕິບັດວິໄນແລ້ວ, (ນອກຈາກວ່າພໍ່ແມ່ ແລະ ໂຄງການ EI/ECSE ຕົກລົງເຫັນດີເປັນຢ່າງອື່ນ) ເດັກຕ້ອງຍັງຢູ່ໃນສະຖານສຶກສາທາງເລືອກອື່ນຊົ່ວຄາວທີ່ລໍຖ້າຄໍາຕັດສິນຂອງຜູ້ພິພາກສາກົດໝາຍບໍລິຫານ ຫຼື ຈົນກວ່າໝົດໄລຍະເວລາຂອງການຍ້າຍອອກຕາມທີ່ໄດ້ຈັດໃຫ້ໄວ້ສໍາລັບເງື່ອນໄຂກໍານົດເຫຼົ່ານີ້.

**ອັນໃດເປັນເງື່ອນໄຂກໍານົດສໍາລັບການກໍານົດການສຶກສາທາງເລືອກເລີ່ມຕົ້ນ?**

ສະຖານທີ່ສຶກສາທາງເລືອກຊົ່ວຄາວຕ້ອງ:

- ອະນຸຍາດໃຫ້ເດັກສືບຕໍ່ມີສ່ວນຮ່ວມໃນກິດຈະກໍາທີ່ເໝາະສົມກັບອາຍຸ, ເຖິງແມ່ນວ່າຈະຢູ່ໃນສະຖານທີ່ອື່ນ;
- ອະນຸຍາດໃຫ້ເດັກສືບຕໍ່ໄປຮັບການບໍລິການ ECSE ແລະ ການປັບປ່ຽນ, ລວມເຖິງສິ່ງທີ່ໄດ້ອະທິບາຍໄວ້ໃນ IFSP ຂອງເດັກ, ເພື່ອອະນຸຍາດໃຫ້ເດັກສາມາດບັນລຸເປົ້າໝາຍຂອງ IFSP; **<u>ແລະ</u>**,
- ຈັດການປະເມີນພຶດຕິກໍາການເຮັດວຽກໃຫ້ແກ່ເດັກ ແລະ ບໍລິການຊ່ວຍເຫຼືອດ້ານພຶດຕິກໍາຕາມຄວາມເໝາະສົມ ແລະ ການປັບປ່ຽນເພື່ອແກ້ໄຂພຶດຕິກໍາຂອງເດັກເພື່ອໃຫ້ມັນບໍ່ຕໍ່ເນື່ອງ.

## ແຫຼ່ງຂໍ້ມູນ

ອົງກອນທີ່ໄດ້ຮັບທຶນຈາກລັດທີ່ມີລາຍຊື່ຢູ່ທີ່ນີ້ອາດຈະສາມາດຊ່ວຍທ່ານໃນການທຳຄວາມເຂົ້າໃຈກ່ຽວກັບມາດຕະການປ້ອງກັນ ແລະ ລະບຽບການອື່ນໆຂອງ IDEA.

ໂຄງການ EI/ECSE ທ້ອງຖິ່ນຂອງທ່ານ
ຜູ້ມີສັນຍາ EI/ECSE ຂອງທ່ານ
ກະຊວງສຶກສາລັດໂອເຣກອນ (ODE) Salem: (503) 947-5782
ເວັບໄຊ: http://www.oregon.gov/ODE/Pages/default.aspx

ຫ້ອງການບໍລິການນັກສຶກສາ
ເວັບໄຊ: http://www.oregon.gov/ode/about-us/Pages/Office-of-Student-Services.aspx

ຄອບຄົວ ແລະ ຊຸມຊົນຮ່ວມກັນ (FACT) ເບີໂທເກັບເງິນ
ປາຍທາງ: (888) 988-3228
ເວັບໄຊ: www.factoregon.org

ສິດທິຄົນພິການລັດໂອເຣກອນ (DRO) ເຂດ
ປອດແລນ: (503) 243-2081
ໂທເກັບເງິນປາຍທາງ: (800) 452-1694
ເວັບໄຊ: http://www.disabilityrightsoregon.org/

ສູນຂໍ້ມູນ ແລະ ຊັບພະຍາກອນພໍ່ແມ່
http://www.parentcenterhub.org/

State Interagency Coordinating Council (SICC, ສະພາການປະສານງານລະຫວ່າງລັດ) ໃຫ້ຄຳແນະນຳ ແລະ ການສະໜັບສະໜູນແກ່ລະບົບການບໍລິການທົ່ວລັດສຳລັບເດັກນ້ອຍທີ່ມີຄວາມຕ້ອງການພິເສດ ແລະ ຄອບຄົວຂອງພວກເຂົາ. ຂໍ້ມູນກ່ຽວກັບສະພາ ແລະ ຕາຕະລາງການປະຊຸມແມ່ນມີໃຫ້ຈາກ ODE ໂດຍການໂທຫາ (503) 947-5731. ຂໍ້ມູນກ່ຽວກັບ SICC ແມ່ນມີໃຫ້ທີ່: http://www.oregon.gov/ode/students-and-family/SpecialEducation/earlyintervention/Pages/sicc.aspx

State Advisory Council for Special Education (SACSE, ສະພາໃຫ້ຄຳແນະນຳຂອງລັດສຳລັບການສຶກສາພິເສດ) ປະຊຸມກັນຫຼາຍຄັ້ງໃນແຕ່ລະສົກຮຽນ. ການປະຊຸມແຕ່ລະຄັ້ງລວມເອົາເວລາສຳລັບຄວາມຄິດເຫັນຂອງສາທາລະນະ. ຂໍ້ມູນກ່ຽວກັບສະພາ ແລະ ຕາຕະລາງການປະຊຸມແມ່ນມີໃຫ້ຈາກ ODE ໂດຍການໂທຫາ (503) 947-5782. ຂໍ້ມູນກ່ຽວກັບ SACSE ແມ່ນມີໃຫ້ທີ່: http://www.oregon.gov/ode/students- and-family/SpecialEducation/Pages/sacse.aspx